ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ


ມະຫາວິທະຍາໄລແຫ່ງຊາດ

ຄະນະກະເສດສາດ

ພາກວິຊາປູກພືດ

ພາກວິຊາເສດຖະກິດຊົນນະບົດ ແລະ ປຸງແຕ່ງຜະລິດຕະພັນກະສິກໍາ


ບົດໂຄງການຈົບຊັ້ນ

ເລື່ອງ

# ສຶກສາຕ່ອງໂສ້ປັດໃຈນໍາເຂົ້າໃນການຜະລິດກະສິກໍາ, ໃນເຂດເປົ້າໝາຍຂອງ ໂຄງການສົ່ງເສີມກະສິກໍາ (LEAP) ທີ່ ເມືອງ ນາໝໍ້ ແຂວງ ອຸດົມໄຊ

**Study on Input Chain of Agricultural Production in Target Area of LEAP Project, Namor District , Oudomxay Province**


ໂດຍ: ນ. ກອງມະນີ ແກ້ວຄູນນາປ້າງ

ນ. ອ່າງຄໍາ ສີພູນສຸກ

ນັກສຶກສາ: ປະລິນຍາຕີ


2009

ມະຫາວິທະຍາໄລແຫ່ງຊາດ

ຄະນະກະເສດສາດ

ພາກວິຊາປູກພືດ

ພາກວິຊາເສດຖະກິດຊົນນະບົດ  ແລະ ປຸງແຕ່ງຜະລິດຕະພັນກະສິກຳ

# ບົດໂຄງການຈົບຊັ້ນ

ເລື່ອງ

# ສຶກສາຕ່ອງໂສ້ປັດໃຈນຳເຂົ້າໃນການຜະລິດກະສິກຳ, ໃນເຂດເປົ້າໝາຍຂອງ ໂຄງການສົ່ງເສີມກະສິກຳ (LEAP) ທີ່ ເມືອງ ນາໝໍ້ ແຂວງ ອຸດົມໄຊ

**Study on Input Chain of Agricultural Production in Target Area of LEAP Project, Namor District , Oudomxay Province**

ໂດຍ:  ນ. ກອງມະນີ ແກ້ວຄູນນາປ້າງ

............................................

ນ. ອ່າງຄຳ ສີພູນສຸກ

..............................................

ຊີ້ນຳໂດຍ:  ຮສ. ດຣ. ສິລິນທອນ ສັກລໍຄຳ

.........................................

ພາກວິຊາ:  ..........................................

.......................................

2009

# ບົດຄັດຫຍໍ້

# (Abstract)


ການລົງເກັບກຳຂໍ້ມູນຕ່ອງໂສ້ປັດໃຈນຳເຂົ້າຂອງຊາວກະສິກອນໃນເຂດເປົ້າໝາຍ ບ້ານ ປາງສາ ແລະ ບ້ານ ປາກນ້ຳຕອງ ທີ່ເມືອງ ນາໝໍ້ ແຂວງ ອຸດົມໄຊຄັ້ງນີ້ ມີຈຸດປະສົງ ເພື່ອສຶກສາບັນດາກິດຈະກຳທາງການກະສິກຳຕ່າງໆທີ່ຊາວກະສິກອນປະຕິບັດ, ບັນດາຕ່ອງໂສ້ປັດໃຈນຳເຂົ້າໃນການຜະລິດ ( ແຫຼ່ງທີ່ມາຂອງສິ່ງນຳເຂົ້າ) ຕະຫຼອດເຖິງການສຶກສາການເຂົ້າເຖິງປັດໃຈນຳເຂົ້າໃນການຜະລິດຂອງຊາວກະສິກອນປະເພດ ຕ່າງໆ ຊຶ່ງການສຶກສາຄັ້ງນີ້ໃຊ້ເວລາຢູ່ 5 ເດືອນຄື: ເລີ່ມແຕ່ວັນທີ 2/4/09 - 31/8/09 ຈຶ່ງສຳເລັດ. ພາຍໃຕ້ການຊີ້ນຳຂອງໂຄງການສົ່ງເສີມກະສິກຳ, ກອງສົ່ງເສີມກະສິກຳ - ປ່າໄມ້ແຫ່ງຊາດ ແລະ ຄະນະກະເສດສາດມະຫາວິທະຍາໄລແຫ່ງຊາດ. ວິທີການສຶກສາແມ່ນເລີ່ມຈາກການສຶກສາຂໍ້ມູນເບື້ອງຕົ້ນ, ຈາກນັ້ນຈຶ່ງວາງແຜນ ໂດຍມີການສ້າງແບບຟອມສຳພາດແລ້ວຈຶ່ງລົງເກັບກຳຂໍ້ມູນ ໃນການເລືອກເອົາຕົວຢ່າງແມ່ນ ໄດ້ເລືອກເອົາສາມປະເພດຄອບຄົວຄື: ຄອບຄົວເຫຼືອກິນ, ກຸ້ມກິນ ແລະ ບໍ່ກຸ້ມກິນ ຊຶ່ງນຳໃຊ້ວິທີການສຳພາດຢູ່ໃນລະດັບບ້ານ (ຜູ້ຜະລິດ 12 ຄອບຄົວ), ແມ່ຄ້າ/ພໍ່ຄ້າ, ພະນັກງານສົ່ງເສີມ ແລະ ບໍລິສັດຕ່າງໆ.

ຜົນໄດ້ຮັບຈາກການສຶກສາເຫັນໄດ້ວ່າ ກິດຈະກຳທີ່ຊາວກະສິກອນທຳການຜະລິດມີຄື: ການປູກເຂົ້ານາປີ, ເຂົ້າໄຮ່, ສາລີ, ຢາງພາລາ, ໝາກໜອດ, ຂ່າ, ລ້ຽງສັດໃຫ່ຍ, ລ້ຽງໝູ ແລະ ລ້ຽງສັດປີກ. ຕ່ອງໂສ້ປັດໃຈນຳເຂົ້າໃນການຜະລິດ ແຕ່ລະປະເພດຄອບຄົວແມ່ນມີຄວາມແຕກຕ່າງກັນ ແລະ ການເຂົ້າເຖິງປັດໃຈການຜະລິດກໍມີຄວາມແຕກຕ່າງກັນ ເພາະວ່າຊາວກະສິກອນມີເງື່ອນໄຂການຜະລິດບໍ່ຄືກັນ ຄອບຄົວເຫຼືອກິນ ແລະ ຄອບຄົວກຸ້ມກິນ ດິນທີ່ໃຊ້ໃນການຜະລິດໄດ້ມາດ້ວຍການຊື້, ລັດແບ່ງປັນໃຫ້ ແລະ ສືບມູນ. ອຸປະກອນ ສ່ວນຫຼາຍຊື້ດ້ວຍເງິນສົດເຊັ່ນ: ລົດໄຖ, ຈົກ, ພ້າ....; ນຳໃຊ້ແຮງງານພາຍໃນຄອບຄົວ, ແຮງງານແລກປ່ຽນ ແລະ ຈ້າງແຮງງານ; ໄດ້ຮັບການຝຶກອົບຮົມ ຈາກກະສິກຳເມືອງ; ມີການນຳໃຊ້ການບໍລິການ, ສິ່ງນຳເຂົ້າທີ່ເປັນເຄມີ ແລະ ບໍ່ເປັນເຄມີຫຼາຍສົມຄວນ; ສ່ວນສິນເຊື່ອນຳໃຊ້ທຶນຕົນເອງທີ່ສະສົມມາ, ຢືມເງິນຈາກກອງທຶນບ້ານ ແລະ ທະນາຄານນະໂຍບາຍ. ຄອບຄົວບໍ່ກຸ້ມກິນໄດ້ດິນມາຈາກການສືບມູນ ແລະ ສັບສ່າວ. ອຸປະກອນຜະລິດເອົາເອງ (ພ້າ, ແວກ) ແລະ ຊື້ຈຳນວນໜ້ອຍ (ຈົກ, ຊວ້ານ); ນຳໃຊ້ສິນເຊື່ອຢືມຈາກກອງທຶນບ້ານ ແລະ ພີ່ນ້ອງເພື່ອໃຫ້ໄດ້ປັດໃຈນຳເຂົ້າມາ, ນຳໃຊ້ແຮງງານພາຍໃນຄອບຄົວເປັນສ່ວນຫຼາຍ, ນຳໃຊ້ເຕັກນິກວິທີການແບບພື້ນບ້ານ ປອດສານພິດ.

ເນື່ອງຈາກຊາວກະສິກອນຍັງຂາດແຫຼ່ງຂໍ້ມູນຂ່າວສານທາງດ້ານເຕັກນິກວິທີການປູກພືດ-ລ້ຽງສັດ, ການເຂົ້າເຖິງສິ່ງນຳເຂົ້າແມ່ນມີຫຼາຍຂັ້ນຕອນ ສະນັ້ນເພື່ອແກ້ໄຂບັນຫາດັ່ງກ່າວຮຽກຮ້ອງໃຫ້ມີການສະ ໜອງສິນເຊື່ອ, ກະຈາຍຂໍ້ມູນຂ່າວສານໃຫ້ທົ່ວເຖິງ ແລະ ຂະຫຍາຍຕາໜ່າງຕະຫຼາດ.

# ຄຳຂອບໃຈ

## ( Acknowledgement )

ຜ່ານການລົງຝຶກງານທ້າຍການສຶກສາ ນຳໂຄງການ ສົ່ງເສີມກະສິກຳ **(LEAP)** ທີ່ເມືອງ ນາໝໍ້ ແຂວງ ອຸດົມໄຊ ຈົນໄດ້ຮັບຜົນສຳເລັດທີ່ໜ້າເພິ່ງພໍໃຈ ຂ້າພະເຈົ້າຈິ່ງຂໍສະແດງຄວາມຮູ້ບຸນຄຸນເປັນຢ່າງສູງ ເຖິງບັນດາອາຈານ ແລະ ນັກວິຊາການ ຕະຫຼອດຮອດອົງການຈັດຕັ້ງທຸກຂັ້ນ ທີ່ໄດ້ອຳນວຍຄວາມສະດວກ ແລະ ໃຫ້ການຊ່ວຍເຫຼືອແນະນຳໃຫ້ຂ້າພະເຈົ້າໃນທຸກໆດ້ານ.

ຂໍຂອບໃຈເປັນພິເສດມາຍັງ: ທ່ານ ຮສ. ດຣ. ສີລິນທອນ ສັກລໍຄຳ ເຊິ່ງເປັນອາຈານທີ່ປຶກສາ, ຊີ້ນຳຕົວຈິງໃນການລົງຝຶກງານຄັ້ງນີ້
ເຊິ່ງທ່ານໄດ້ເສຍສະຫຼະເວລາໃຫ້ຄຳແນະນຳທຸກໆດ້ານຕະຫຼອດເຖິງ
ການ ຂຽນບົດ ແລະ ກວດແກ້ບົດໂຄງການຈົບຊັ້ນຈົນສົມບູນ.

ຂໍຂອບໃຈມາຍັງ ທ່ານ ສົມໄຊ ສີຊານົນ ຫົວໜ້າໂຄງການສົ່ງເສີມກະສິກຳ **(LEAP),** ທ່ານ Andrew Bartlett ວິຊາການ ໂຄງການ, ທ່ານ ພຸດທະສົນ ພົມມະຈັນ ຜູ້ຊ່ວຍດ້ານການຄຸ້ມຄອງຂໍ້ມູນຂ່າວສານ, ທ່ານ ຄຳກ້ອນ ນັນເທພາ ຜູ້ຊ່ວຍດ້ານເນື້ອໃນການຂຽນບົດ ພ້ອມດ້ວຍທີມງານທີ່ໃຫ້ການຊ່ວຍເຫຼືອຊີ້ນຳການລົງຝຶກງານ ແລະ ໃຫ້ຄວາມສະດວກທາງດ້ານການສະໜອງອຸປະກອນຕ່າງໆການລົງຝຶກງານຄັ້ງນີ້.

ສະແດງຄວາມຮູ້ບຸນຄຸນມາຍັງ ທ່ານ ບຸນຊູ ດວງພະສິດ ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ນາໝໍ້, ທີມງານປະສານງານໂຄງການ **(LEAP)** ທຸກຂັ້ນ, ປະຊາຊົນທີ່ໄດ້ໃຫ້ການຊ່ວຍເຫຼືອດ້ານທີ່ພັກອາໃສ ແລະ ການລົງເກັບກຳຂໍ້ມູນ.

ພ້ອມກັນນັ້ນຂໍສະແດງຄວາມຂອບໃຈມາຍັງ ທ່ານ ຄະນະບໍດີຄະນະກະເສດສາດທຸກໆທ່ານ ແລະ ຫົວໜ້າພາກທຸກໆທ່ານ ພ້ອມດ້ວຍຄູອາຈານທຸກທ່ານເລີ່ມຈາກອະນຸບານຈົນເຖິງປະລິນຍາຕີ ທີ່ຖ່າຍທອດຄວາມຮູ້ ແລະ ເອົາໃຈໃສ່ສິດສອນຕະຫຼອດມາ.

ຂໍຂອບໃຈພໍ່ແມ່, ເອື້ອຍ, ອ້າຍ, ນ້ອງ ທີ່ໃຫ້ການສະໜັບສະໜູນທາງດ້ານທຶນຮອນ ແລະ ກຳລັງໃຈທີ່ອົບອຸ່ນ ພ້ອມກັນນັ້ນກໍຂໍຂອບໃຈມາຍັງໝູ່ເພື່ອນທີ່ໃຫ້ຄວາມຊ່ວຍເຫຼືອເຊິ່ງກັນ ແລະ ກັນຕະຫຼອດມາ ທ້າຍສຸດນີ້ ຂໍອວຍພອນໃຫ້ທຸກໆທ່ານ ຈົ່ງມີຄວາມສຸກ, ມີສຸຂະພາບພະນາໄມທີ່ສົມບູນ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານທຸກໆປະການ.

ສິງຫາ 2009

ກອງມະນີ ແກ້ວຄູນນາປ້າງ

ອ່າງຄຳ ສີພູນສຸກ

# ສາລະບານ

# (TabIe of Contents)

ໜ້າ

ບົດຄັດຫຍໍ້........................................................................................................ I

ຄຳຂອບໃຈ........................................................................................................ II

ສາລະບານ........................................................................................................ III

ສາລະບານຕາຕະລາງ ........................................................................................ VI

ສາລະບານຮູບ ................................................................................................ VII

ຄຳອະທິບາຍສັນຍາລັກ ແລະ ອັກສອນຫຍໍ້.............................................................. IX

**I.** ບົດນຳ.......................................................................................................... 1

ຈຸດປະສົງ ...................................................................................................... 2

**II.** ການຄົ້ນຄ້ວເອກະສານ.................................................................................... 3

2.1. ສະພາບລວມຂອງແຂວງອຸດົມໄຊ................................................................ 3

2.1.1. ສະພາບລວມຂອງເມືອງນາໝໍ້.............................................................. 3

2.1.2. ສະພາບລວມຂອງບ້ານປາງສາ ແລະ ບ້ານປາກນ້ຳຕອງ.................................. 4

2.1.2.1. ທີ່ຕັ້ງ ແລະ ປະຫວັດຄວາມເປັນມາຂອງບ້ານ......................................... 4

2.1.2.1.1. ທີ່ຕັ້ງຂອງບ້ານປາງສາ ແລະ ບ້ານປາກນ້ຳຕອງ.................................. 4

2.1.2.1.2. ປະຫວັດຄວາມເປັນມາຂອງບ້ານປາງສາ ແລະ ບ້ານປາກນ້ຳຕອງ....... 5

2.2. ນິຍາມ ແລະ ແນວຄວາມຄິດກ່ຽວກັບປັດໃຈການຜະລິດ...................................... 5

2.2.1. ນິຍາມ.................................................................................................. 5

2.2.2. ແນວຄວາມຄິດ....................................................................................... 6

2.3. ຂອບເຂດ ແລະ ຂໍ້ຈຳກັດໃນການສຶກສາ ......................................................... 6

**III** .ອຸປະກອນ ແລະ ວິທີການ ............................................................................... 7

3.1. ອຸປະກອນ .................................................................................................. 7

3.2.ວິທີການ ...................................................................................................... 7

3.2.1.ສະຖານທີ່ການສຶກສາ.................................................................................. 7

3.2.2. ໄລຍະເວລາໃນການສຶກສາ........................................................................ 7

3.2.3.ວິທີການສຶກສາ......................................................................................... 7

3.2.3.1. ການຄັດເລືອກຄອບຄົວ......................................................................... 8

3.2.3.2.ການລົງສຳພາດ........................................................................................ 8

3.2.4. ການວິເຄາະຂໍ້ມູນ....................................................................................... 8

**IV**.ຜົນໄດ້ຮັບ.................................................................................................... 10

4.1. ຕ່ອງໂສ້ປັດໃຈນຳເຂົ້າໃນລະດັບຄົວເຮືອນ........................................................ 10
4.1.1.ຕ່ອງໂສ້ປັດໃຈນຳເຂົ້າໃນລະດັບຄົວເຮືອນຂອງຄອບຄົວເຫຼືອກິນ...................... 10
4.1.1.1.ຕ່ອງໂສ້ປັດໃຈນຳເຂົ້າດິນ/ນ້ຳຂອງຄອບຄົວເຫຼືອກິນ............................ 10
4.1.1.2.ຕ່ອງໂສ້ປັດໃຈນຳເຂົ້າສິນເຊື່ອຂອງຄອບຄົວເຫຼືອກິນ............................ 11
4.1.1.3.ຕ່ອງໂສ້ປັດໃຈນຳເຂົ້າອຸປະກອນຂອງຄອບຄົວເຫຼືອກິນ.......................... 11
4.1.1.4. ຕ່ອງໂສ້ປັດໃຈນຳເຂົ້າແຮງງານຂອງຄອບຄົວເຫຼືອກິນ........................... 11
4.1.2.ຕ່ອງໂສ້ປັດໃຈນຳເຂົ້າໃນລະດັບຄົວເຮືອນຂອງຄອບຄົວກຸ້ມກິນ.......................... 12
4.1.2.1.ຕ່ອງໂສ້ປັດໃຈນຳເຂົ້າດິນ/ນ້ຳຂອງຄອບຄົວກຸ້ມກິນ ............................. 12
4.1.2.2.ຕ່ອງໂສ້ປັດໃຈນຳເຂົ້າສິນເຊື່ອຂອງຄອບຄົວກຸ້ມກິນ.............................. 13
4.1.2.3.ຕ່ອງໂສ້ປັດໃຈນຳເຂົ້າອຸປະກອນຂອງຄອບຄົວກຸ້ມກິນ............................ 13
4.1.2.4. ຕ່ອງໂສ້ປັດໃຈນຳເຂົ້າແຮງງານຂອງຄອບຄົວກຸ້ມກິນ............................ 13
4.1.3.ຕ່ອງໂສ້ປັດໃຈນຳເຂົ້າໃນລະດັບຄົວເຮືອນຂອງຄອບຄົວບໍ່ກຸ້ມກິນ.................................. 14
4.1.3.1.ຕ່ອງໂສ້ປັດໃຈນຳເຂົ້າດິນ/ນ້ຳຂອງຄອບຄົວບໍ່ກຸ້ມກິນ............................. 14
4.1.3.2.ຕ່ອງໂສ້ປັດໃຈນຳເຂົ້າສິນເຊື່ອຂອງຄອບຄົວບໍ່ກຸ້ມກິນ............................ 14
4.1.3.3.ຕ່ອງໂສ້ປັດໃຈນຳເຂົ້າອຸປະກອນ.ຂອງຄອບຄົວບໍ່ກຸ້ມກິນ........................ 15
4.1.3.4.ຕ່ອງໂສ້ປັດໃຈນຳເຂົ້າແຮງງານຂອງຄອບຄົວບໍ່ກຸ້ມກິນ.......................... 15
4.2.ຕ່ອງໂສ້ສິ່ງນຳເຂົ້າໃນການຜະລິດແຕ່ລະກິດຈະກຳ................................................. 16
4.2.1.ຕ່ອງໂສ້ສິ່ງນຳເຂົ້າໃນການຜະລິດຂອງລະດັບຄອບຄົວເຫຼືອກິນ......................... 16
4.2.1.1.ການປູກເຂົ້ານາປີຂອງຄອບຄົວເຫຼືອກິນ.............................................. 17
4.2.1.2.ການປູກເຂົ້າໄຮ່ຂອງຄອບຄົວເຫຼືອກິນ................................................. 18
4.2.1.3.ການປູກສາລີຂອງຄອບຄົວເຫຼືອກິນ.................................................................. 19
4.2.1.4.ການປູກຢາງພາລາຂອງຄອບຄົວເຫຼືອກິນ............................................ 20
4.2.1.5.ການລ້ຽງງົວຂອງຄອບຄົວເຫຼືອກິນ.................................................................. 21
4.2.1.6.ການລ້ຽງຄວາຍຂອງຄອບຄົວເຫຼືອກິນ................................................. 21
4.2.1.7.ການລ້ຽງໝູຂອງຄອບຄົວເຫຼືອກິນ .................................................... 22
4.2.1.8.ການລ້ຽງສັດປີກຂອງຄອບຄົວເຫຼືອກິນ................................................ 23
4.2.2. ຕ່ອງໂສ້ສິ່ງນຳເຂົ້າໃນການຜະລິດຂອງລະດັບຄອບຄົວກຸ້ມກິນ........................... 24
4.2.2.1.ການປູກເຂົ້ານາປີຂອງຄອບຄົວກຸ້ມກິນ................................................ 24
4.2.2.2.ການປູກເຂົ້າໄຮ່ຂອງຄອບຄົວກຸ້ມກິນ.................................................. 25
4.2.2.3.ການປູກສາລີຂອງຄອບຄົວກຸ້ມກິນ................................................................... 26
4.2.2.4.ການປູກຢາງພາລາຂອງຄອບຄົວກຸ້ມກິນ.............................................. 27
4.2.2.5.ການປູກຂ່າຂອງຄອບຄົວກຸ້ມກິນ ...................................................... 28
4.2.2.6.ການປູກໝາກໜອດຂອງຄອບຄົວກຸ້ມກິນ .......................................... 28
4.2.2.7. ການລ້ຽງງົວຂອງຄອບຄົວກຸ້ມກິນ .................................................... 29

4.2.2.8.ການລ້ຽງໝູຂອງຄອບຄົວກຸ້ມກິນ...................................................... 29
4.2.2.9.ການລ້ຽງສັດປີກຂອງຄອບຄົວກຸ້ມກິນ................................................. 30
4.2.3. ຕ່ອງໂສ້ສິ່ງນຳເຂົ້າໃນການຜະລິດຂອງລະດັບຄອບຄົວບໍ່ກຸ້ມກິນ........................ 31
4.2.3.1.ການປູກເຂົ້ານາປີຂອງຄອບຄົວບໍ່ກຸ້ມກິນ............................................... 31
4.2.3.2. ການປູກເຂົ້າໄຮ່ຂອງຄອບຄົວບໍ່ກຸ້ມກິນ................................................. 31
4.2.3.3. ການປູກສາລີຂອງຄອບຄົວບໍ່ກຸ້ມກິນ.............................................................. 32
4.2.3.4.ການປູກໝາກໜອດຂອງຄອບຄົວບໍ່ກຸ້ມກິນ .........................................33
4.2.3.5. ການລ້ຽງງົວຂອງຄອບຄົວບໍ່ກຸ້ມກິນ..................................................... 33
4.2.3.6.ການລ້ຽງສັດປີກຂອງຄອບຄົວບໍ່ກຸ້ມກິນ.................................................. 34
4.3. ສິ່ງນຳເຂົ້າທັງພາຍໃນ ແລະ ຕ່າງປະເທດ..................................................................34
4.3.1. ສິ່ງນຳເຂົ້າທີ່ມາຈາກພາຍໃນ...........................................................................34
4.1.2. ສິ່ງນຳເຂົ້າທີ່ມາຈາກຕ່າງປະເທດ...................................................................34
4.4. ສົມທຽບຄວາມແຕກຕ່າງຜົນໄດ້ຮັບຈາກການສຳພາດຕົວຈິງ.........................................35
4.3.1.ການສົມທຽບຄວາມແຕກຕ່າງປັດໃຈນຳເຂົ້າລະດັບຄົວເຮືອນ............................. 35
4.3.2.ການສົມທຽບຄວາມແຕກຕ່າງສິ່ງນຳເຂົ້າການຜະລິດແຕ່ລະກິດຈະກຳ................ 37
**V.** ວິຈານ........................................................................................................................ 39
**VI.** ສະຫຼຸບ...................................................................................................................... 41
**VII.** ຂໍ້ແນະນຳ.................................................................................................................. 43
ເອກະສານອ້າງອີງ.............................................................................................. 44
ເອກະສານຊ້ອນທ້າຍ............................................................................................................ 45

# ສາລະບານຕາຕະລາງ

# (List of Tables)

**ຕາຕະລາງ** ໜ້າ

1. ຕາຕະລາງການສົມທຽບຄວາມແຕກຕ່າງປັດໃຈນຳເຂົ້າລະດັບຄົວເຮືອນ.................................... 35
2. ຕາຕະລາງການສົມທຽບຄວາມແຕກຕ່າງສິ່ງນຳເຂົ້າການຜະລິດແຕ່ລະກິດຈະກຳ.......................... 37

**ເອກະສານຊ້ອນທ້າຍ**

1.ແບບຟອມສຳພາດຂັ້ນບ້ານ........................................................................................ 49
2. ແບບຟອມສຳພາດຊາວກະສິກອນ.............................................................................. 50
2. ແບບຟອມສຳພາດພໍ່ຄ້າ,ແມ່ຄ້າ.................................................................................. 69
2. ແບບຟອມສຳພາດບໍລິສັດ........................................................................................ 72
2. ແບບຟອມສຳພາດພາກສ່ວນທີ່ມາສົ່ງເສີມ.................................................................. 73

# ສາລະບານຮູບ
# (List of Figures)

ຮູບ ໜ້າ

1. ຮູບ1: ແຜນວາດເຂດທີ່ຕັ້ງສຶກສາພາກເໜືອ........ 3
2. ຮູບ2: ແຜນວາດຂອບເຂດບ້ານ........ 4
3. ຮູບ3: ປັດໃຈນຳເຂົ້າປະເພດດິນ/ນ້ຳ........ 10
4. ຮູບ5: ປັດໃຈນຳເຂົ້າປະເພດອຸປະກອນ........ 10
5. ຮູບ6: ສິ່ງນຳເຂົ້າທີ່ເປັນເຄມີ........ 16
6. ຮູບ7: ສິ່ງນຳເຂົ້າທີ່ບໍ່ເປັນເຄມີ........ 16
7. ແຜນວາດ1 :ແຜນວາດການວິເຄາະ........ 9
8. ແຜນວາດ2:ຕ່ອງໂສ້ປັດໃຈນຳເຂົ້າຂອງຄອບຄົວເຫຼືອກິນ........ 12
9. ແຜນວາດ3: ຕ່ອງໂສ້ຂອງຄອບຄົວກຸ້ມກິນ........ 14
10. ແຜນວາດ4: ຕ່ອງໂສ້ຂອງຄອບຄົວບໍ່ກຸ້ມກິນ........ 15
11. ແຜນວາດ5: ກິດຈະກຳການປູກເຂົ້ານາປີຂອງຄອບຄົວເຫຼືອກິນ ........ 18
12. ແຜນວາດ6: ກິດຈະກຳການປູກເຂົ້າໄຮ່ຂອງຄອບຄົວເຫຼືອກິນ ........ 18
13. ແຜນວາດ7: ກິດຈະກຳການປູກສາລີຂອງຄອບຄົວເຫຼືອກິນ ........ 19
14. ແຜນວາດ8: ກິດຈະກຳການປູກຢາງພາລາຂອງຄອບຄົວເຫຼືອກິນ ........ 20
15. ແຜນວາດ9: ກິດຈະກຳການລ້ຽງງົວຄອບຄົວຂອງຄອບຄົວເຫຼືອກິນ ........ 21
16. ແຜນວາດ10: ກິດຈະກຳການລ້ຽງຄວາຍຂອງຄອບຄົວເຫຼືອກິນ ........ 22
17. ແຜນວາດ11: ກິດຈະກຳການລ້ຽງໝູຂອງຄອບຄົວເຫຼືອກິນ ........ 23
18. ແຜນວາດ12: ກິດຈະກຳການລ້ຽງສັດປີກຂອງຄອບຄົວເຫຼືອກິນ ........ 24
19. ແຜນວາດ13: ກິດຈະກຳການປູກເຂົ້ານາປີຂອງຄອບຄົວກຸ້ມກິນ ........ 25
20. ແຜນວາດ14: ກິດຈະກຳການປູກເຂົ້າໄຮ່ຂອງຄອບຄົວກຸ້ມກິນ........ 26
21. ແຜນວາດ15: ກິດຈະກຳການປູກສາລີຂອງຄອບຄົວກຸ້ມກິນ ........ 27
22. ແຜນວາດ16: ກິດຈະກຳການປູກຢາງພາລາຂອງຄອບຄົວກຸ້ມກິນ ........ 27
23. ແຜນວາດ17: ກິດຈະກຳການປູກຂ່າຄອບຄົວຂອງຄອບຄົວກຸ້ມກິນ ........ 28
24. ແຜນວາດ18: ກິດຈະກຳການປູກໝາກໜອດຂອງຄອບຄົວກຸ້ມກິນ ........ 28
25. ແຜນວາດ19: ກິດຈະກຳການລ້ຽງງົວຂອງຄອບຄົວກຸ້ມກິນ ........ 29
26. ແຜນວາດ20: ກິດຈະກຳການລ້ຽງໝູຂອງຄອບຄົວກຸ້ມກິນ ........ 30
27. ແຜນວາດ21: ກິດຈະກຳການລ້ຽງສັດປີກຂອງຄອບຄົວກຸ້ມກິນ ........ 30
28. ແຜນວາດ22: ກິດຈະກຳການປູກເຂົ້ານາປີຂອງຄອບຄົວບໍ່ກຸ້ມກິນ ........ 31
29. ແຜນວາດ23: ກິດຈະກຳການປູກເຂົ້າໄຮ່ຂອງຄອບຄົວບໍ່ກຸ້ມກິນ........ 32
30. ແຜນວາດ24: ກິດຈະກຳການປູກສາລີຂອງຄອບຄົວບໍ່ກຸ້ມກິນ........ 32

31. ແຜນວາດ26: ກິດຈະກຳການປູກໝາກໝອດຂອງຄອບຄົວບໍ່ກຸ້ມກິນ...................................... 33
32. ແຜນວາດ27: ກິດຈະກຳການລ້ຽງງົວຂອງຄອບຄົວບໍ່ກຸ້ມກິນ.................................................... 33
33. ແຜນວາດ28: ກິດຈະກຳການລ້ຽງສັດປີກຂອງຄອບຄົວບໍ່ກຸ້ມກິນ............................................... 34

**ເອກະສານຊ້ອນທ້າຍ**

1. ຮູບ8: ເຂົ້າໄຮ່...................................................................................................... 46
2. ຮູບ9: ສວນຢາງພາລາ......................................................................................... .. 46
3. ຮູບ10: ສວນສາລີ.................................................................................................. 46
4. ຮູບ11: ສວນຂ່າ.................................................................................................... 46
5. ຮູບ12: ການລ້ຽງໝູ.................................................................................................46
6.ຮູບ13: ການລ້ຽງງົວ........................................................................................... ... 47
7.ຮູບ14: ການລ້ຽງຄວາຍ.......................................................................... ........... 47
8.ຮູບ15:ການລ້ຽງສັດປີກ........................................................................................ 47

# ຄຳອະທິບາຍສັນຍາລັກ ແລະ ອັກສອນຫຍໍ້
## (Symbols and Abbreviations)

**ອັກສອນຫຍໍ້ພາສາລາວ**

| | | |
|---|---|---|
| ກມ | = | ກິໂລແມັດ |
| ກມ$^2$ | = | ກິໂລຕາແມັດ |
| ຮຕ | = | ເຮັກຕາ |
| ມ | = | ແມັດ |
| ມ$^2$ | = | ຕາແມັດ |
| ລ/ດ | = | ລຳດັບ |
| ກ/ກ | = | ກະສິກຳ |
| ມມ | = | ມີລີແມັດ |
| ສສ ຫວຽດນາມ | = | ສາທາລະນະລັດ ສັງຄົມນິຍົມຫວຽດນາມ |
| ສປ ຈີນ | = | ສາທາລະນະລັດ ປະຊາຊົນຈີນ |

**ອັກສອນຫຍໍ້ພາສາອັງກິດ**

| | | |
|---|---|---|
| LEAP | = | Laos Extension for Agriculture Project |

**ສັນຍາລັກ**

| | | |
|---|---|---|
| % | = | ເປີເຊັນ (ສ່ວນຮ້ອຍ) |
| / | = | ຕໍ່ |
| - | = | ຫາ |
| ˚c | = | ອົງສາເຊວຊຽນ |
| —— | | ແມ່ນເສັ້ນແບ່ງເຂດ |
| ●—● | | ແມ່ນໝາຍເຖິງຈ່າຍເປັນເງິນສົດ |
| ●- - -● | | ແມ່ນໝາຍເຖິງບໍ່ໄດ້ຈ່າຍເປັນເງິນສົດ |
| ←— | | ຊື້ມາຈາກ |

# I. ບົດນຳ

# (Introduction)

ພັກ ແລະ ລັດຖະບານ ຖືເອົາການພັດທະນາດ້ານກະສິກຳເປັນແຜນງານ ບຸລິມະສິດອັນດັບທີໜຶ່ງ ເພື່ອເຮັດໃຫ້ປະເທດຫຼຸດພົ້ນອອກຈາກ ສະຖານະພາບການເປັນປະເທດດ້ອຍພັດທະນາ ໃນປີ 2020 ຈຶ່ງໄດ້ມີແນວທາງພັດທະນາກະສິກຳ ເພື່ອຍົກສູງສະມັດຕະພາບຂອງຜົນຜະລິດໃຫ້ດີຂຶ້ນ ແລະ ຜະລິດເປັນສິນຄ້າເຮັດໃຫ້ປະຊາຊົນມີຊີວິດການເປັນຢູ່ທີ່ດີຂຶ້ນ. ການທີ່ຈະປັບປຸງການຜະລິດແມ່ນພົບຄວາມຫຍຸ້ງຍາກຫຼາຍ ເນື່ອງຈາກວ່າຊາວກະສິກອນແຕ່ລະປະເພດ (ເຫຼືອກິນ, ກຸ້ມກິນ ແລະ ບໍ່ກຸ້ມກິນ) ມີຄວາມສາມາດໃນການເຂົ້າຫາປັດໃຈນຳເຂົ້າ, ສິ່ງນຳເຂົ້າ ແລະ ທ່າແຮງໃນການຜະລິດ ກະສິກຳຂອງເຂົາເຈົ້າບໍ່ຄືກັນ ແຕ່ເຖິງຢ່າງໃດກໍຕາມ ບັນຫາທີ່ເຂົາເຈົ້າພົບແມ່ນຄ້າຍຄືກັນເຊັ່ນ: ປັດໃຈນຳເຂົ້າໃນການຜະລິດ, ບັນຫາຕະຫຼາດ, ຂາດການສະໜອງຂໍ້ມູນຂ່າວສານດ້ານເຕັກນິກວິທີການປູກພືດ - ລ້ຽງສັດ, ເນື້ອທີ່ການຜະລິດຂອງຄອບຄົວຫຼຸດລົງ, ຂາດແຮງງານ ແລະ ທຶນຮອນໃນການຜະລິດ.

ຕ່ອງໂສ້ປັດໃຈນຳເຂົ້າການຜະລິດກະສິກຳ ແມ່ນໝາຍເຖິງແຕ່ລະຂອດທີ່ປັດໃຈນຳເຂົ້າຜ່ານ ( ແມ່ຄ້າ, ຄົນກາງ, ຕະຫຼາດ...) ຈົນເຖິງຊາວກະສິກອນຜູ້ທີ່ນຳໃຊ້ປັດໃຈດັ່ງກ່າວ ເຂົ້າໃນກິດຈະກຳການຜະລິດໃດໜຶ່ງ ເຊິ່ງວ່າປັດໃຈນຳເຂົ້າການຜະລິດກະສິກຳປະກອບມີ ຂໍ້ມູນຂ່າວສານ, ສິ່ງທີ່ເປັນເຄມີ, ການບໍລິການ ແລະ ສິ່ງທີ່ບໍ່ເປັນເຄມີ ທີ່ຊາວກະສິກອນນຳໃຊ້ເຂົ້າເພື່ອທຳການຜະລິດຮ່ວມກັບ ດິນ/ນ້ຳ ສິນເຊື່ອ, ອຸປະກອນ ແລະ ແຮງງານ ທີ່ໃຊ້ເຂົ້າໃນການຜະລິດກະສິກຳ (ປູກພືດ - ລ້ຽງສັດ) ໃນພື້ນທີ່ ແລະ ໄລຍະເວລາໃດໜຶ່ງໂດຍແມ່ນຊາວກະສິກອນເປັນຜູ້ດຳເນີນງານເພື່ອໃຫ້ໄດ້ຜະລິດຕະພັນໃດໜຶ່ງເພື່ອເປັນອາຫານ ຫຼື ຂາຍ.

ການຜະລິດກະສິກຳຂອງຊາວກະສິກອນຢູ່ເຂດສຶກສາດັ່ງກ່າວ ກໍຍັງເປັນແບບຜະລິດພໍກຸ້ມກິນ ຕາມທີ່ເຂົາເຈົ້າມີຢູ່ໂດຍໄດ້ມີການນຳໃຊ້ສິ່ງນຳເຂົ້າຊະນິດຕ່າງໆທີ່ຈະສາມາດເພີ່ມຜົນຜະລິດຂອງເຂົາເຈົ້າມານຳໃຊ້ໃນການຜະລິດ ຍັງມີບາງຄອບຄົວກໍ່ໄດ້ນຳໃຊ້ແຕ່ນຳໃຊ້ໜ້ອຍ ເຫດຜົນກໍ່ຍ້ອນວ່າເຂົາເຈົ້າຢູ່ຫ່າງໄກສອກຫຼີກ ແລະ ອີກສ່ວນໜຶ່ງແມ່ນບໍ່ໄດ້ເຂົ້າເຖິງສິ່ງນຳເຂົ້າປະເພດຕ່າງໆໄດ້ໂດຍກົງ, ຕ້ອງຜ່ານຫຼາຍຂັ້ນຫຼາຍຕອນ ຊຶ່ງເປັນສາເຫດເຮັດໃຫ້ລາຄາສິ່ງນຳເຂົ້າດັ່ງກ່າວນັ້ນສູງຂຶ້ນ ເມື່ອລາຄາສິ່ງນຳເຂົ້າສູງແນ່ນອນຕົ້ນທຶນການຜະລິດຂອງຊາວກະສິກອນກໍສູງຂຶ້ນເຊັ່ນດຽວກັນ. ນອກນັ້ນເຂົາເຈົ້າຍັງຂາດຂໍ້ມູນຂ່າວສານຕ່າງໆ ທີ່ກ່ຽວ ຂ້ອງກັບການຜະລິດກະສິກຳ ຈຶ່ງເຮັດໃຫ້ເຂົາເຈົ້າຂາດຄວາມຮູ້ດ້ານການນຳໃຊ້ສິ່ງນຳເຂົ້າປະເພດຕ່າງໆນັ້ນ ບໍ່ຖືກຕ້ອງຕາມເຕັກນິກ ແລະ ວິທີການ ຊຶ່ງເຮັດໃຫ້ປະສິດທິຜົນຂອງການຜະລິດບໍ່ໄດ້ຮັບຜົນເທົ່າທີ່ຄວນ.

ເພື່ອຊອກຫາທາງເລືອກໃຫ້ຊາວກະສິກອນໄດ້ເຂົ້າໃຈ, ສາມາດນໍາໃຊ້ປັດໃຈນໍາເຂົ້າໄດ້ງ່າຍ ແລະ ທົ່ວເຖິງຫຼາຍຂຶ້ນ ສະນັ້ນ ການສຶກສາສາຍພົວພັນຕ່ອງໂສ້ປັດໃຈນໍາເຂົ້າໃນການຜະລິດກະສິກໍາ ຈຶ່ງມີຄວາມຈໍາເປັນທີ່ສຸດເພາະໄດ້ສຶກສາບັນດາຂອດຂອງຕ່ອງໂສ້ປັດໃຈນໍາເຂົ້າການຜະລິດ, ຄວາມສາມາດເຂົ້າເຖິງປັດໃຈດັ່ງກ່າວຂອງຊາວກະສິກອນ ດັ່ງນັ້ນຈຶ່ງມີການສຶກສາຫາຂໍ້ມູນຕ່າງໆເຫຼົ່ານັ້ນ ເພື່ອມາວິເຄາະເຖິງຕົ້ນປາຍສາເຫດແຫຼ່ງທີ່ມາຂອງຕ່ອງໂສ້ປັດໃຈນໍາເຂົ້າໃຫ້ເຫັນເຖິງບັນຫາ ແລະ ຫາວິທີແກ້ໄຂທີ່ແທດເໝາະ.

## ຈຸດປະສົງ

1. ສຶກສາຕ່ອງໂສ້ປັດໃຈນໍາເຂົ້າການຜະລິດຂອງຊາວກະສິກອນ.
2. ສຶກສາຕ່ອງໂສ້ສິ່ງນໍາເຂົ້າບັນດາກິດຈະກໍາທາງການກະສິກໍາຕ່າງໆທີ່ຊາວກະສິກອນປະຕິບັດ.
3. ສົມທຽບຄວາມແຕກຕ່າງປັດໃຈນໍາເຂົ້າໃນລະດັບຄົວເຮືອນ ແລະ ລະດັບກິດຈະກໍາຂອງຄອບຄົວ ເຫຼືອກິນ, ກຸ້ມກິນ ແລະ ບໍ່ກຸ້ມກິນ.

# II. ການຄົ້ນຄວ້າເອກະສານ

# (Literature review)

## 2.1. ສະພາບລວມຂອງແຂວງ ອຸດົມໄຊ

ແຂວງອຸດົມໄຊຕັ້ງຢູ່ໃຈກາງ ແລະ ເປັນທາງຜ່ານຂອງບັນດາແຂວງພາກເໜືອຂອງລາວ, ມີເນື້ອທີ່ທັງໝົດ 15.370 ກມ, ທິດເໜືອຕິດກັບແຂວງຜົ້ງສາລີ ແລະ ສປຈີນ, ທິດຕາເວັນອອກຕິດກັບແຂວງຫຼວງພະບາງ, ທິດໃຕ້ຕິດກັບແຂວງໄຊຍະບູລີ ແລະ ທິດຕາເວັນຕົກຕິດກັບແຂວງຫຼວງນ້ຳທາ ແລະ ແຂວງບໍ່ແກ້ວ. ເນື້ອທີ່ສ່ວນໃຫ່ຍເປັນເຂດພູດອຍ ເຊິ່ງກວມເອົາ 85% ຂອງເນື້ອທີ່ທັງໝົດ, ຄວາມໜາແໜ້ນຂອງພົນລະເມືອງສະເລ່ຍ 17,5 ຄົນ/ກມ$^2$.




*ຮູບ 1:ແຜນວາດທີ່ຕັ້ງຂອງເຂດສຶກສາພາກເໜືອ*

ແຂວງອຸດົມໄຊປະກອບດ້ວຍ 7 ຕົວເມືອງ; 67 ເຂດ; 551 ບ້ານ; 43.5397 ຄົວເຮືອນ ໃນນັ້ນມີຍິງ 133.307 ຄົນ; ປະກອບມີ 3 ເຜົ່າໃຫ່ຍ ແລະ 14 ເຜົ່າຊົນໃນນັ້ນລາວລຸ່ມກວມເອົາ 25%, ລາວເທິງ 60% ແລະ ລາວສູງ 15%, ປະຊາກອນອາໃສຢູ່ເຂດພູດອຍມີ 396 ບ້ານກວມເອົາ 67,5% ຂອງຄົວເຮືອນທັງໝົດ, ມີພົນລະເມືອງ 141.716 ຄົນ ແລະ ກວມເອົາ 54% ຂອງພົນລະເມືອງທັງໝົດ. ຄົວເຮືອນ ແລະ ພົນລະເມືອງປະມານ 85-87% ແມ່ນຍຶດຖືອາຊີບກະສິກຳ ແລະ ປ່າໄມ້ເປັນພື້ນຖານ, ຍອດຜະລິດຕະພັນກະສິກຳ ແລະ ປ່າໄມ້ຈາກ 76% ຂອງປີ 1997 ມາເປັນ 64,5% ໃນປີ 2004, ຮູບແບບການຜະລິດກະສິກຳ ແລະ ປ່າໄມ້ໂດຍທົ່ວໄປຍັງແມ່ນແບບທຳມະ ຊາດ (ພະແນກກະສິກຳ ແລະ ປ່າໄມ້ 2008 ຂອງແຂວງອຸດົມໄຊ).

### 2.1.1. ສະພາບລວມຂອງເມືອງ ນາໝໍ້

ເມືອງນາໝໍ້ຕັ້ງຢູ່ທິດຕາເວັນອອກສ່ຽງເໜືອຫ່າງຈາກເທດສະບານແຂວງອຸດົມໄຊ 52 ກມ, ມີເນື້ອທີ່ທັງໝົດ 3.790 ກມ$^2$ ໃນນັ້ນພູດອຍກວມເອົາ 87%. ມີ 64 ບ້ານ, 9 ກຸ່ມບ້ານພັດທະນາ ແລະ ມີ 4 ບ້ານໃຫຍ່; ມີ 5.297 ຄົວເຮືອນ, ມີພົນລະເມືອງທັງໝົດ 34.418 ຄົນ ໃນນັ້ນຍິງ 16.931 ຄົນລະດັບຄວາມໜາແໜ້ນຂອງພົນລະເມືອງ 9 ຄົນ/ກມ$^2$ ແລະ ມີຂອບເຂດທິດເໜືອຕິດກັບເມືອງລ້າ

ສປຈີນ, ທິດໃຕ້ຕິດກັບເມືອງໄຊ,ທິດຕາເວັນອອກຕິດກັບເມືອງຫລາ, ທິດຕາເວັນຕົກຕິດ ກັບເມືອງນາແລ ແລະ ເມືອງຫຼວງນ້ຳທາແຂວງຫຼວງນ້ຳທາ (ຫ້ອງການກະສິກຳ ແລະ ປ່າໄມ້ເມືອງນາໝໍ້, 2009 - 2010).

ເນື້ອທີ່ປູກຝັງມີ 1.908 ຮຕ, ໄດ້ຮັບຜົນຜະລິດທັງໝົດ 8.298.5 ໂຕນ ເທົ່າກັບ 83%, ເຂົ້າໄຮ່ ເນື້ອທີ່ 2.012 ຮຕ, ຜົນຜະລິດ 2.700 ໂຕນ ເທົ່າກັບ 89.46% ແລະ ປູກເຂົ້ານາແຊງໄດ້ 37.3 ຮຕ ເທົ່າກັບ 77.62%, ເກັບກູ້ຜົນຜະລິດສາລີລະດູແລ້ງໃນເນື້ອທີ່ 450 ຮຕ, ຜົນຜະລິດໄດ້ 2.160 ໂຕນ ແລະ ປູກພືດລະດູແລ້ງເຊັ່ນ: ໝາກອຶ, ໝາກໂມ, ຖົ່ວເຫຼືອງ, ໝາກໜອດ, ເຜືອກມັນ ແລະ ພືດຜັກຕ່າງໆມີ ເນື້ອທີ່ທັງໝົດ 914 ຮຕເທົ່າກັບ 57.13% (ບົດສະຫຼຸບການ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມສົກປີ 2008-2009 ຂອງເມືອງນາໝໍ້).

### 2.1.2. <u>ສະພາບລວມຂອງບ້ານປາງສາ ແລະ ບ້ານປາກນ້ຳຕອງ</u>

#### 2.1.2.1. <u>ທີ່ຕັ້ງ ແລະ ປະຫວັດ ຄວາມເປັນມາຂອງບ້ານ</u>

##### 2.1.2.1.1. <u>ທີ່ຕັ້ງຂອງບ້ານປາງສາ ແລະ ບ້ານປາກນ້ຳຕອງ</u>

ບ້ານປາງສາ ແລະ ບ້ານປາກນ້ຳຕອງແມ່ນບ້ານໜຶ່ງທີ່ຂຶ້ນກັບເມືອງນາໝໍ້ ແຂວງອຸດົມໄຊ ເຊິ່ງຕັ້ງຢູ່ຫ່າງຈາກເທດສະບານເມືອງໄປທາງທິດຕາເວັນຕົກສ່ຽງເໜືອ ປະມານ 4 ກມ, ຈາກບ້ານ ດັ່ງກ່າວສາມາດເດີນທາງໄປຫາຕົວເມືອງໄດ້ຕາມເສັ້ນທາງຄື: ທາງບົກທັງສອງບ້ານມີເນື້ອທີ່ທັງໝົດ 3.035.670 ຮຕ, ເຊິ່ງມີຄວາມສູງຈາກໜ້ານ້ຳທະເລສະເລ່ຍ ປະມານ 685 ມ, ລະດັບນ້ຳທະເລຕ່ຳສຸດ 600-550 ມ. ພູມີປະເທດມີຄວາມຄ້ອຍຊັນຫຼາຍເນື້ອທີ່ພູດອຍກວມເອົາ 88% ຂອງເນື້ອທີ່ທັງໝົດ ແລະ ມີຂອບເຂດການຄຸ້ມຄອງຂອງບ້ານທີ່ຕິດຈອດກັນດັ່ງນີ້: ທິດເໜືອຕິດກັບບ້ານຈອມແສນ ແລະ ບ້ານຫ້ວຍທິກ, ທິດໃຕ້ຕິດກັບບ້ານນາທົ່ງທິດຕາເວັນອອກຕິດກັບບ້ານ ຫ້ວຍຊ່ອງ, ທິດຕາເວັນຕົກຕິດກັບບ້ານນ້ຳແຊ ແລະ ບ້ານນາຕອງ. ເນື້ອທີ່ທຳການຜະລິດສ່ວນຫຼາຍເປັນດິນຜຸຜຸ່ຍ, ດິນດຳເໝາະສົມແກ່ການປູກຝັງ ແລະ ລ້ຽງສັດນ້ອຍ.




*ຮູບ 2:ແຜນວາດຂອບເຂດບ້ານ*

2.1.2.1.2. <u>ປະຫວັດຄວາມເປັນມາຂອງບ້ານປາງສາ ແລະ ບ້ານປາກນ້ຳຕອງ</u>

ບ້ານປາງສາໃນເມື່ອກ່ອນເປັນບ້ານເຜົ່າຂະມຸເຜົ່າດຽວ ແລະ ສ້າງຕັ້ງຂຶ້ນໃນປີ 1930 ມາເຖິງປັດຈຸບັນ ອີງໃສ່ແຜນພັດທະນາຂອງຂັ້ນເທິງໃຫ້ເຕົ້າໂຮມບ້ານນ້ອຍໃຫ້ກາຍເປັນບ້ານໃຫຍ່, ແຕ່ວ່າບ້ານປາງສາມີ 3 ເຜົ່າມາອາໃສຢູ່ຄື: ເຜົ່າຂະມຸ, ເຜົ່າລື້ແລະເຜົ່າມົ້ງ. ບ້ານປາກນ້ຳຕອງຢູ່ຮ່ວມກັນໃນປັດ ຈຸບັນນີ້ໄດ້ມີ 6 ຊົນເຜົ່າຢູ່ນຳກັນຄື:

- ເຜົ່າລາວຫ້ວຍແຕ່ກ່ອນຢູ່ບ້ານຫ້ວຍອ່ອນໄລຍະປີ 1959 ໄດ້ຍົກຍ້າຍມາຢູ່ບ້ານປາກນ້ຳ ຕອງມີ 17 ຄອບຄົວ. ມາຮອດວັນທີ 24/4/2007 ມີ 36 ຄອບຄົວ, ມີຫຼັງຄາ 30 ຫຼັງຄາມີພົນລະເມືອງ ທັງໝົດ 197 ຄົນ, ຍິງ 94 ຄົນ.
- ເຜົ່າລາວລຸ່ມແຕ່ກ່ອນຢູ່ບ້ານອາຍປີ 1989 ໄດ້ຍົກຍ້າຍມາຢູ່ບ້ານນ້ຳປຸ່ງມາຮອດປີ 1994 ຍົກຍ້າຍມາຢູ່ບ້ານສົມສະຫວາດ, ປີ 2005 ໄດ້ຍົກຍ້າຍມາຢູ່ບ້ານປາກນ້ຳຕອງ, ປັດຈຸບັນມີ 8 ຫຼັງຄາເຮືອນມີ 11 ຄອບຄົວ, ມີພົນລະເມືອງທັງໝົດ 37 ຄົນ, ຍິງ 17 ຄົນ, ຜູ້ຊອກບ້ານຢູ່ແມ່ນ ທ່ານບຸນທອງ.
- ເຜົ່າລາວເທິງຍ້າຍມາແຕ່ບ້ານໂຮມໄຊປີ 2005 ມີ 2 ຫຼັງຄາເຮືອນ, ມີ 2 ຄອບຄົວ, ມີພົນລະເມືອງທັງໝົດ 13 ຄົນ, ຍິງ 7 ຄົນ.
- ເຜົ່າພູຊາງຍ້າຍມາແຕ່ບ້ານໄຊສຳພັນໃນປີ 2003 ມີ 2 ຫຼັງຄາເຮືອນ, ມີພົນລະເມືອງ ທັງໝົດ 9 ຄົນ, ຍິງ 4 ຄົນ.
- ເຜົ່າລາວສູງຍ້າຍມາແຕ່ບ້ານຫ້ວຍແດງ ແລະ ບ້ານນ້ຳປຸ່ງໃນປີ 2003 ມີ 34 ຫຼັງຄາເຮືອນ, ມີ 34 ຄອບຄົວ, ມີພົນລະເມືອງທັງໝົດ 217 ຄົນ, ຍິງ 120 ຄົນ.
- ເຜົ່າພູນ້ອຍຍ້າຍມາແຕ່ບ້ານໂຮມໄຊໃນປີ 2005 ມີ 2 ຫຼັງຄາເຮືອນ, ມີ 2 ຄອບຄົວ, ມີພົນລະເມືອງທັງໝົດ 10 ຄົນ, ຍິງ 4 ຄົນ. ບ້ານປາງສາປະກອບມີ 3 ເຜົ່າຄື: ເຜົ່າຂະມຸ, ເຜົ່າລື້ ແລະ ເຜົ່າມົ້ງ, ມີທັງໝົດ 85 ຫຼັງຄາເຮືອນ, ມີ 109 ຄອບຄົວ, ມີພົນລະເມືອງທັງໝົດ 609 ຄົນ, ຍິງ 382 ຄົນ, ແຮງງານຕົ້ນຕໍ 164 ຄົນ, ບ້ານປາກ ນ້ຳຕອງ, ພູຊາງ, ພູນ້ອຍ, ລາວຫ້ວຍ, ລາວເທິງ, ລາວລຸ່ມ, ລາວສູງມີທັງໝົດ 78 ຫຼັງຄາເຮືອນ, ມີ 87 ຄອບຄົວ, ມີພົນລະເມືອງທັງໝົດ 493 ຄົນ, ຍິງ 230 ຄົນ, ແຮງງານຕົ້ນຕໍ 198 ຄົນ. ການປະກອບອາຊີບຂອງຊາວບ້ານສ່ວນໃຫ່ຍແມ່ນ: ປູກສາລີ ແລະ ປູກເຂົ້ານາປີ; ປູກເຂົ້າໄຮ່ ແລະ ລ້ຽງສັດສ່ວນໜ້ອຍ (ບົດສະຫຼຸບວຽກງານການມອບດິນ-ມອບປ່າຢູ່ທີ່ບ້ານ ປາງສາ ແລະ ປາກນ້ຳຕອງ ເມືອງນາໝໍ້ ແຂວງອຸດົມໄຊ 2007).

## 2.2. ນິຍາມ ແລະ ແນວຄວາມຄິດກ່ຽວກັບປັດໃຈການຜະລິດ

### 2.2.1. ນິຍາມ

ປັດໃຈການຜະລິດແມ່ນແຮງງານ, ທີ່ດິນ, ທຶນ, ອຸປະກອນຮັບໃຊ້ພາຫະນະການຜະລິດ ຊະນິດຕ່າງໆທີ່ໃຊ້ເຂົ້າໃນການຜະລິດກະສິກຳ (ປູກພືດ - ລ້ຽງສັດ) ທີ່ໃຊ້ໃນພື້ນທີ່ ແລະ ໄລຍະເວລາໃດໜຶ່ງໂດຍແມ່ນຊາວກະສິກອນເປັນຜູ້ດຳເນີນງານ ແລະ ເປັນຜູ້ຊົມໃຊ້ໃນການຜະລິດເພື່ອໃຫ້ບັນລຸຈຸດປະສົງ (ທອງພັນ 2001 ).

ຕ່ອງໂສ້ຜະລິດຕະພັນກະສິກຳແມ່ນການສຶກສາບັນດາຜູ້ດຳເນີນງານທາງດ້ານເສດຖະກິດທັງ ໝົດທີ່ມີການພົວພັນເຊິ່ງກັນ ແລະ ກັນຢູ່ໃນຕ່ອງໂສ້, ຈາກຊາວກະສິກອນຜູ້ຜະລິດໄປເຖິງຜູ້ບໍລິໂພກ ໂດຍຜ່ານບັນດາບຸກຄົນກາງລະດັບຕ່າງກັນ ຫຼື ແມ່ນກະແສໝູນວຽນຂອງຜົນຜະລິດ, ເງິນ, ຂໍ້ມູນຂ່າວສານຕ່າງໆທັງໝົດ, ຈາກຜູ້ຜະລິດໄປຫາຜູ້ບໍລິໂພກ (Faber 1996).

**2.2.2. <u>ແນວຄວາມຄິດ</u>**

ທ່ານ Faber ( 1996 ) ໄດ້ກ່າວວ່າ: ຕ່ອງໂສ້ການສະໜອງຜະລິດຕະພັນແມ່ນກຸ່ມຂອງຜູ້ດຳເນີນງານທາງດ້ານເສດຖະກິດ ແລະ ການພົວພັນຂອງເຂົາເຈົ້າທັງໝົດທີ່ໄດ້ປະກອບສ່ວນເຂົ້າໃນຜົນຜະລິດ, ຂະບວນການຜະລິດ, ການແຈກຢາຍ, ການບໍລິໂພກ ແລະ ເອກະລັກຂອງຕ່ອງ ໂສ້ການສະໜອງຜະລິດຕະພັນໄດ້ສ່ອງແສງເຖິງບັນດາຜູ້ປະກອບການ, ສະຖາບັນຕ່າງໆການດຳເນີນການ, ທິດທາງ, ຄວາມສາມາດໃນການຕໍ່ລອງ, ເຕັກໂນໂລຊີ, ຄວາມກ່ຽວເນື່ອງຂອງຜົນຜະລິດ, ການປ່ຽນແປງຂອງລາຄາຜະລິດຕະພັນອື່ນໆ.

2.3. **ຂອບເຂດ ແລະ ຂໍ້ຈຳກັດຂອງການສຶກສາ.**

❖ ຂອບເຂດການສຶກສາຄັ້ງນີ້ແມ່ນໄດ້ສຶກສາວິທີການຜະລິດ, ການນຳໃຊ້ປັດໃຈນຳເຂົ້າໃນການຜະລິດຊະນິດຕ່າງໆ, ຂັ້ນຕອນ ຫຼື ເຄືອຂ່າຍປັດໃຈນຳເຂົ້າໃນການຜະລິດຂອງຊາວກະສິກອນ ແລະ ສາຍພົວພັນຂອງຕ່ອງໂສ້ທີ່ກ່ຽວຂ້ອງກັບປັດໃຈນຳເຂົ້າໃນການຜະລິດເຊິ່ງໄດ້ດຳເນີນຢູ່ 1 ເມືອງຄື: ເມືອງ ນາໝໍ້ ແຂວງ ອຸດົມໄຊ .

❖ ຂໍ້ຈຳກັດການສຶກສາຕ່ອງໂສ້ປັດໃຈນຳເຂົ້າແມ່ນບໍ່ໄດ້ໄລ່ລຽງເສດຖະກິດຂອງຄອບຄົວ, ໃນບົດນີ້ບໍ່ໄດ້ສຶກສາຜົນກະທົບປັດໃຈການຜະລິດຂອງຊາວກະສິກອນ ແລະ ການລົງສຳພາດຄັ້ງນີ້ບໍ່ສາ ມາດເປັນຕົວແທນໃຫ້ທຸກຄອບຄົວໃນປະເທດໄດ້ແຕ່ວ່າເປັນພຽງຕົວຢ່າງການໄດ້ມາຂອງປັດໃຈນຳເຂົ້າເທົ່ານັ້ນ.

# III. ອຸປະກອນ ແລະ ວິທີການ

# (Materials and Methods)

## 3.1. ອຸປະກອນ

- ຂໍ້ມູນມືສອງນຳໃຊ້ໄວ້ເປັນບ່ອນອີງຂອງການສຶກສາຫົວຂໍ້ນີ້ປະກອບໃສ່ພາກຄົ້ນຄວ້າເອກະສານຂອງບົດ.
- ແບບຟອມສຳພາດເພື່ອເກັບກຳຂໍ້ມູນຕົວຈິງ.
- ກ້ອງຖ່າຍຮູບສຳລັບບັນທຶກພາບປະກອບໃສ່ບົດໂຄງການຈົບຊັ້ນ.
- ລົດຈັກນຳໃຊ້ເປັນພາຫານະໃນການເດີນທາງ.
- ອຸປະກອນບັນທຶກນຳໃຊ້ສຳລັບບັນທຶກຂໍ້ມູນຕ່າງໆ.

## 3.2. ວິທີການ

### 3.2.1. <u>ສະຖານທີ່ການສຶກສາ</u>

ໃນການສຶກສາລະບົບຕ່ອງໂສ້ປັດໃຈນຳເຂົ້າການຜະລິດຂອງຊາວກະສິກອນຄັ້ງນີ້ພວກເຮົາໄດ້ປະຕິບັດຕົວຈິງຢູ່ 2 ບ້ານຄື: ບ້ານປາງສາ ແລະ ບ້ານປາກນ້ຳຕອງ ຊຶ່ງຂຶ້ນກັບ ເມືອງນາໝໍ້ ແຂວງອຸດົມໄຊ ແລະ ທັງເປັນບ້ານເປົ້າໝາຍຂອງໂຄງການ LEAP ເພື່ອຢາກສົ່ງເສີມໃຫ້ຊາວກະສິກອນເຂົ້າເຖິງປັດໃຈການຜະລິດຕ່າງໆໃຫ້ງ່າຍຂຶ້ນ.

### 3.2.2. <u>ໄລຍະເວລາໃນການສຶກສາ</u>

ໃນການລົງສຶກສາຄັ້ງນີ້ແມ່ນໃຊ້ເວລາ 5 ເດືອນເຊິ່ງໄດ້ແບ່ງອອກເປັນ 3 ໄລຍະຄື:

- ວັນທີ 2/4/ - 22/5/2009 ແມ່ນໄລຍະກະກຽມກ່ອນລົງພາກສະໜາມ.
- ວັນທີ 23/5 - 23/6/2009 ແມ່ນໄລຍະເວລາການລົງພາກສະໜາມ.
- ວັນທີ 24/6 - 31/8/2009 ແມ່ນໄລຍະເວລາການວິເຄາະຂໍ້ມູນ ແລະ ຂຽນບົດໂຄງການຈົບຊັ້ນ.

### 3.2.3. <u>ວິທີການສຶກສາ</u>

ການສຶກສາໃນຄັ້ງນີ້ແມ່ນເລືອກເອົາບ້ານທີ່ທາງໂຄງການເຂົ້າໄປສົ່ງເສີມມາກ່ອນແລ້ວເຊິ່ງພວກເຮົາໄດ້ກຳນົດເອົາ 2 ບ້ານເປົ້າໝາຍທີ່ນອນໃນໂຄງການ ຍ້ອນວ່າທາງໂຄງການເຄີຍໄປສົ່ງເສີມດ້ານການຜະລິດ, ແຕ່ຍັງບໍ່ທັນໄດ້ສຶກສາທາງດ້ານຕ່ອງໂສ້ປັດໃຈນຳເຂົ້າການຜະລິດຂອງຊາວກະສິກອນເຊິ່ງກຸ່ມບ້ານດັ່ງກ່າວແມ່ນຂຶ້ນກັບເມືອງນາໝໍ້ ແຂວງອຸດົມໄຊ. ສຳລັບການດຳເນີນປະຕິບັດວຽກງານຂອງພວກຂ້າພະເຈົ້າໄດ້ປະຕິບັດ ໂດຍມີລາຍລະອຽດດັ່ງລຸ່ມນີ້:

➢ ແຈ້ງການ ແລະ ສະເໜີຕົວກັບອີງການຈັດຕັ້ງທຸກຂັ້ນຕາມລຳດັບ ເຊິ່ງເລີ່ມຕົ້ນຢູ່ຫ້ອງການກະສິກຳແຂວງ, ຫ້ອງການກະສິກຳເມືອງໂດຍມີການສົມທົບພະນັກງານປະສານງານຂອງໂຄງການ (LEAP) ລົງສູ່ລະດັບເມືອງ ແລະ ບ້ານຕາມລຳດັບ.

➢ ແຈ້ງອຳນາດການປົກຄອງທ້ອງຖິ່ນເພື່ອອຳນວຍຄວາມສະດວກໃນການເກັບກຳຂໍ້ມູນ ແລະ ການເຂົ້າອອກພາຍໃນຊຸມຊົນທີ່ລົງສຶກສາ.

➢ ສົມທົບກັບພະນັກງານເມືອງ ແລະ ນາຍບ້ານເພື່ອຄັດເລືອກຄອບຄົວເປົ້າໝາຍທີ່ຈະສຳພາດເອົາຂໍ້ມູນ.

3.2.3.1. <u>ການຄັດເລືອກຄອບຄົວ</u>

ໃນຈຳນວນ 2 ບ້ານແມ່ນມີການຈັດລະດັບຂອງຄອບຄົວຕາມແຕ່ລະສະພາບຂອງບ້ານ ໂດຍທີ່ໃຫ້ນາຍບ້ານ ແລະ ຊາວບ້ານເປັນຜູ້ຕັດສິນໃຈເອງຕາມເງື່ອນໄຂທີ່ເຂົາເຈົ້າກຳນົດຂອງແຕ່ລະບ້ານ, ລວມຄອບຄົວທັງໝົດທີ່ສຳພາດມີ 12 ຄອບຄົວ, ຄອບຄົວເຫຼືອກິນມີ 4 ຄອບຄົວ, ຄອບຄົວກຸ້ມກິນມີ 4 ຄອບຄົວ ແລະ ຄອບຄົວບໍ່ກຸ້ມກິນມີ 4 ຄອບຄົວ ເພື່ອເປັນຕົວຢ່າງໃນການນຳໃຊ້ປັດໃຈນຳເຂົ້າການຜະລິດ ແຕ່ວ່າບໍ່ສາມາດເປັນຕົວແທນໄດ້ໝົດທຸກຄອບຄົວທົ່ວປະເທດພຽງແຕ່ຢາກຮູ້ວ່າຄອບຄົວດັ່ງກ່າວນຳໃຊ້ປັດໃຈການຜະລິດຫຍັງແດ່?.

ການລົງສຳພາດຄອບຄົວຊາວກະສິກອນເຫັນໄດ້ວ່າທັງສອງບ້ານທີ່ຢູ່ເມືອງດຽວກັນນີ້ການຜະລິດແຕ່ລະກິດຈະກຳແມ່ນມີລັກສະນະຄ້າຍຄືກັນ ແລະ ການນຳໃຊ້ສິ່ງນຳເຂົ້າໃນການຜະລິດແຕ່ລະກິດຈະກຳກໍ່ຄ້າຍຄືກັນ ດັ່ງນັ້ນຈຶ່ງແບ່ງເປັນ 3 ລະດັບຄົວເຮືອນໃນການວິໃຈຄື:

1. ຄອບຄົວເຫຼືອກິນແມ່ນຄອບຄົວທີ່ທຳການຜະລິດນອກຈາກຮັບໃຊ້ພາຍໃນຄອບຄົວແລ້ວ, ໃນແຕ່ລະປີຍັງສາມາດຂາຍເປັນສິນຄ້າ ແລະ ເພີ່ມລາຍຮັບໃຫ້ແກ່ຄອບຄົວນຳອີກ.

2. ຄອບຄົວກຸ້ມກິນແມ່ນ ຄອບຄົວທີ່ທຳການຜະລິດແລ້ວສາມາດສະໜອງການບໍລິໂພກພາຍໃນຄອບຄົວໄດ້ ແລະ ຍັງສາມາດຂາຍເພື່ອແກ້ໄຂຊີວິດການເປັນຢູ່ປະຈຳວັນ.

3. ຄອບຄົວຄົວບໍ່ກຸ້ມກິນແມ່ນ ຄອບຄົວທີ່ທຳການຜະລິດບໍ່ພຽງພໍຕໍ່ຄວາມຕ້ອງການພາຍໃນຄອບຄົວ ແຕ່ລະປີຈຳເປັນຕ້ອງໄດ້ຊື້ຜົນຜະລິດເຂົ້າມາເພີ່ມເພື່ອໃຫ້ພຽງພໍກັບຄວາມຕ້ອງການ.

3.2.3.2. <u>ການລົງສຳພາດ</u>

ການລົງສຳພາດໃນແຕ່ລະຄອບຄົວແມ່ນໄດ້ສຳພາດສະພາບລວມຂອງຄອບຄົວ ແລະ ຕໍ່ມາແມ່ນລົງເລິກກ່ຽວກັບກິດຈະກຳທີ່ຊາວກະສິກອນຜະລິດ ແລະ ຊະນິດສິ່ງນຳເຂົ້າຂອງແຕ່ລະກິດຈະກຳນັ້ນມີຫຍັງແດ່? ການໄດ້ມາຂອງປັດໃຈດັ່ງກ່າວແມ່ນໄດ້ມາດ້ວຍວິທີໃດ? ມາຈາກ ໃສ? ຈາກນັ້ນກໍ່ໄດ້ສຳພາດພໍ່ຄ້າແມ່ຄ້າ ແລະ ບໍລິສັດທີ່ກ່ຽວຂ້ອງກັບປັດໃຈນຳເຂົ້າທີ່ຊາວກະສິກອນນຳໃຊ້ໃນການຜະລິດຂອງເຂດທີ່ສຶກສາ.

**3.2.4. <u>ການວິເຄາະຂໍ້ມູນ</u>**

ຂໍ້ມູນທີ່ໄດ້ຈາກການສຳພາດຕົວຈິງທັງໝົດນຳມາວິເຄາະໃນ 2 ລັກສະນະຄື: ຕ່ອງໂສ້ປັດໃຈນຳເຂົ້າໃນລະດັບຄົວເຮືອນ ແລະ ຕ່ອງໂສ້ສິ່ງນຳເຂົ້າໃນລະດັບກິດຈະກຳຕ່າງໆ ດັ່ງແຜນວາດລຸ່ມນີ້:




ແຜນວາດ 1 :ແຜນວາດການວິເຄາະຂໍ້ມູນ

# IV. ຜົນໄດ້ຮັບ

# (Results)

## 4.1. ຕ່ອງໂສ້ປັດໃຈນຳເຂົ້າໃນລະດັບຄົວເຮືອນ

ຈາກຂໍ້ມູນລະດັບຄົວເຮືອນທີ່ໄດ້ຈາກການລົງສຳພາດຕົວຈິງໃນຈຳນວນ 12 ຄອບຄົວເຫັນໄດ້ວ່າ ການຜະລິດຂອງຄອບຄົວໃດໜຶ່ງປະກອບມີ 4 ດ້ານຄື: ດິນ/ນໍ້າ, ສິນເຊື່ອ, ອຸປະກອນ ແລະ ແຮງງານ.

- ດິນ: ແມ່ນໝາຍເຖິງພື້ນທີ່ທຳການຜະລິດຂອງຊາວກະສິກອນ
  ນໍ້າ: ໝາຍເຖິງນໍ້າທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດເຊິ່ງມີແຫຼ່ງທີ່ມາທີ່ແຕກຕ່າງກັນ.



**ຮູບ 3: ປັດໃຈນຳເຂົ້າປະເພດດິນ/ນໍ້າ**

- ສິນເຊື່ອ: ໝາຍເຖິງທຶນຮອນທີ່ຊາວກະສິກອນໃຊ້ໃນການຜະລິດ



**ຮູບ 4: ສິນເຊື່ອ**

- ອຸປະກອນ: ໝາຍເຖິງອຸປະກອນຕ່າງໆທີ່ຊາວກະສິກອນໃຊ້ທຳການຜະລິດ ກະສິກຳ



**ຮູບ 5: ປັດໃຈນຳເຂົ້າປະເພດອຸປະກອນ**

- ແຮງງານ: ໝາຍເຖິງແຮງງານໃນການຜະລິດ ຊຶ່ງມີຢູ່ 3 ລັກສະນະແຮງງານຄື: ແຮງງານຄອບຄົວ, ແຮງງານແລກປ່ຽນ ແລະ ແຮງງານທີ່ຈ້າງ.

### 4.1.1. <u>ຕ່ອງໂສ້ປັດໃຈນຳເຂົ້າໃນລະດັບຄົວເຮືອນຂອງຄອບຄົວເຫຼືອກິນ</u>

#### 4.1.1.1. <u>ຕ່ອງໂສ້ປັດໃຈນຳເຂົ້າດິນ/ນໍ້າຂອງຄອບຄົວເຫຼືອກິນ</u>

ຊາວກະສິກອນໄດ້ດິນມາຈາກ 2 ແຫຼ່ງຄື: ດິນທີ່ຊື້ດ້ວຍເງິນສົດ ແລະ ດິນທີ່ບໍ່ໄດ້ຊື້ເປັນເງິນສົດ (ດິນຂອງຕົນເອງ ແລະ ດິນລັດແບ່ງປັນໃຫ້) ຊຶ່ງຄອບຄົວເຫຼືອກິນທັງໝົດ 4 ຄອບຄົວທີ່ສຳພາດ

ບໍ່ໄດ້ຊື້ດິນປະມານ 0.038-4 ຮຕ ໃນນັ້ນ 3 ຄອບຄົວທີ່ຊື້ດິນດ້ວຍເງິນ ສົດປະມານ 0.4-1.5 ຮຕ. ຄອບຄົວເຫຼືອກິນຢູ່ໃນເຂດສຶກສານີ້ ຊາວກະສິກອນສ່ວນຫຼາຍແມ່ນນຳໃຊ້ດິນທີ່ຊື້ມາຈາກຄອບຄົວກຸ້ມກິນຢູ່ບ້ານດຽວກັນ ໂດຍສະເພາະແມ່ນດິນນາ ແລະ ດິນສວນສາລີ ດັ່ງນັ້ນ ຕ່ອງໂສ້ປັດໃຈນຳເຂົ້າດິນຈຶ່ງມີລັກສະນະສັ້ນ ຍ້ອນວ່າທັງ 3 ຄອບຄົວໄດ້ຊື້ດິນມາຈາກບ້ານຕົນເອງເພື່ອປູກພືດ ແລະ ລ້ຽງສັດຈຶ່ງເຮັດໃຫ້ລັກສະນະຕ່ອງໂສ້ບໍ່ມີຄວາມສັບສົນ ເພາະວ່າບໍ່ໄດ້ຜ່ານຫຼາຍຂັ້ນຕອນ. ນ້ຳທີ່ນຳໃຊ້ເຂົ້າໃນການຜະລິດກະສິກຳໄດ້ມາຈາກ 2 ແຫຼ່ງຄື: ນຳໃຊ້ນ້ຳຊົນລະປະທານ ແລະ ນ້ຳຕາມທຳມະຊາດ ຊຶ່ງຄອງຊົນລະປະທານແມ່ນໂຄງການລັດເປັນຜູ້ສ້າງຂຶ້ນ ໃນນັ້ນມີ 2 ຄອບຄົວທີ່ນຳໃຊ້ນ້ຳຊົນລະປະທານໂດຍຈ່າຍດ້ວຍເງິນສົດ 80,000 ກີບ/ຮຕ/ປີ ເພື່ອສ້ອມແປງຄອງຊົນລະປະທານທີ່ເປເພໃຫ້ບ້ານ ແລະ ອີກ 2 ຄອບຄົວແມ່ນອາໃສນ້ຳຕາມທຳມະຊາດ (ນ້ຳຝົນ, ນ້ຳຫ້ວຍ...) ດັ່ງນັ້ນຕ່ອງໂສ້ປັດໃຈນຳເຂົ້າຂອງນ້ຳຈຶ່ງມີລັກສະນະສັ້ນຄືກັບຕ່ອງໂສ້ຂອງດິນ ຍ້ອນວ່າແຫຼ່ງທີ່ມາຂອງນ້ຳມາຈາກແຫຼ່ງດຽວ ຈຶ່ງເຮັດໃຫ້ລັກສະນະຕ່ອງໂສ້ຂອງນ້ຳບໍ່ມີຄວາມສັບສົນ.

4.1.1.2. <u>ຕ່ອງໂສ້ປັດໃຈນຳເຂົ້າສິນເຊື່ອຂອງຄອບຄົວເຫຼືອກິນ</u>

ຈາກການສຳພາດຕົວຈິງເຫັນວ່າ ຊາວກະສິກອນສ່ວນຫຼາຍນຳໃຊ້ທຶນຕົນເອງທີ່ສະສົມໄວ້ ແລະ ຍັງມີອີກ 1 ຄອບຄົວໄດ້ຢືມເງິນຈາກກອງທຶນບ້ານ ຊຶ່ງກອງທຶນບ້ານໄດ້ຮັບເງິນຈາກກອງທຶນຫຼຸດຜ່ອນຄວາມທຸກຈົນຊ່ວຍເຫຼືອລ້າ ເພື່ອໃຫ້ໄດ້ສິ່ງນຳເຂົ້າການຜະລິດມາ. ການໃຊ້ແທນຄືນຂອງສິນເຊື່ອແມ່ນແທນເງິນສົດດ້ວຍດອກເບ້ຍ 8%/ປີ ພ້ອມທັງຕົ້ນທຶນ. ຕ່ອງໂສ້ປັດໃຈນຳເຂົ້າຂອງສິນເຊື່ອມີລັກສະນະສັ້ນ ຍ້ອນວ່າເຂົາເຈົ້າຢືມເງິນຈາກກອງທຶນພາຍໃນບ້ານບໍ່ໄດ້ຢືມຈາກແຫຼ່ງອື່ນ ສະນັ້ນຕ່ອງໂສ້ ຈຶ່ງມີລັກສະນະສັ້ນ ແລະ ບໍ່ສັບສົນ ດັ່ງຕ່ອງໂສ້ລຸ່ມນີ້:

ຊາວກະສິກອນ ← ກອງທຶນບ້ານ ← ກອງທຶນຫຼຸດຜ່ອນຄວາມທຸກຈົນ

4.1.1.3. <u>ຕ່ອງໂສ້ປັດໃຈນຳເຂົ້າອຸປະກອນຂອງຄອບຄົວເຫຼືອກິນ</u>

ສຳລັບອຸປະກອນແມ່ນໄດ້ມາຈາກ2ແຫຼ່ງ: ຊື້ດ້ວຍເງິນສົດ ແລະ ຜະລິດເອົາເອງບໍ່ໄດ້ຊື້. ອຸປະກອນທີ່ຊື້ດ້ວຍເງິນສົດມີຄື: ລົດໄຖຊາວກະສິກອນ ຊື້ມາຈາກ ບໍລິສັດດາວອນ ຊື້ມາຈາກ ບໍລິສັດໄທຄູໂບ້ຕ້າຈຳກັດ ແລະ ອີກ 1 ຄອບຄົວທີ່ຊື້ລົດໄຖມາຈາກຕະຫຼາດນາໝໍ້ຊື້ມາຈາກນະຄອນຫຼວງວຽງຈັນ; ຈຳນວນ 3 ຄອບຄົວຊື້ຈົກ ແລະ ຊ້ວານມາຈາກ ຕະຫຼາດນາໝໍ້ ຊື້ມາຈາກເມືອງໄຊຊື້ມາຈາກຫຼວງພະບາງ ແລະ ອີກ 1 ຄອບຄົວຊື້ກ່ຽວມາຈາກ ຕະຫຼາດນາໝໍ້ ຊື້ມາຈາກ ເມືອງໄຊ ຊື້ມາຈາກໂພນໂຮງ ແລະ ຂວານຊື້ມາຈາກພໍ່ຄ້າ ສປຈີນ. ຄອບຄົວທີ່ນຳໃຊ້ອຸປະກອນ ທີ່ບໍ່ໄດ້ຊື້ດ້ວຍເງິນສົດ (ຜະລິດເອງ) 3 ຄອບຄົວເຫຼືອກິນທີ່ສຳພາດເຊັ່ນ: ແວກ, ພ້າ ແລະ ກ່ຽວຕີເອົາເອງ ມີພຽງ 1 ຄອບຄົວໄດ້ຈົກມາຈາກໂຄງການລັດເອົາໃຫ້ ແຕ່ວ່າພ້າ ແລະ ແວກຕີເອົາເອງ ສັງເກດເຫັນວ່າ ຕ່ອງໂສ້ອຸປະກອນນີ້ແມ່ນມີລັກສະນະຍາວໄປຮອດຕ່າງປະເທດເປັນຕົ້ນແມ່ນລົດໄຖນາ ເຊິ່ງຂຶ້ນກັບຫຼາຍ ພາກ ສ່ວນບໍ່ເປັນເອກະລາດ.

4.1.1.4. <u>ຕ່ອງໂສ້ປັດໃຈນຳເຂົ້າແຮງງານຂອງຄອບຄົວເຫຼືອກິນ</u>

ການນຳໃຊ້ແຮງງານຊາວກະສິກອນແມ່ນນຳໃຊ້ແຮງງານພາຍໃນຄອບຄົວ, ແຮງງານແລກປ່ຽນ ແລະ ຈ້າງແຮງງານຈຳນວນໜ້ອຍໜຶ່ງ. ຕ່ອງໂສ້ປັດໃຈນຳເຂົ້າຂອງແຮງງານມີລັກສະນະສັ້ນ ຍ້ອນວ່າບໍ່

ໄດ້ຈ້າງແຮງງານຈາກບ່ອນອື່ນ, ນຳໃຊ້ແຮງງານຈ້າງທີ່ມີຢູ່ໃນບ້ານ ຈຶ່ງເຮັດໃຫ້ລັກສະນະຂອງຕ່ອງໂສ້ບໍ່ມີຄວາມສັບສົນ, ໃນເຂດທີ່ສຶກສາດັ່ງກ່າວຊາວກະສິກອນມີການນຳໃຊ້ອຸປະກອນທີ່ທັນສະໄໝເປັນຕົ້ນແມ່ນລົດໄຖນາ ເພື່ອຫຼຸດຜ່ອນເວລາ ແລະ ແຮງງານໃນການເຮັດວຽກ. ການລົງສຳພາດຄັ້ງນີ້ສັງເກດເຫັນວ່າ ສ່ວນຫຼາຍແລ້ວຄອບຄົວເຫຼືອກິນແມ່ນທຳການຜະລິດກະສິກຳທີ່ມີຄວາມຫຼາກຫຼາຍກວ່າຄອບຄົວກຸ້ມກິນ ແລະ ຄອບຄົວບໍ່ກຸ້ມກິນ ຍ້ອນວ່າເຂົາເຈົ້າມີເງື່ອນໄຂພຽງພໍໃນການຜະລິດທີ່ດີກວ່າເຊັ່ນ: ມີດິນ, ທຶນ ແລະ ແຮງງານ.

ຜ່ານການສະເໜີຂໍ້ມູນມາຂ້າງເທິງນີ້ສັງເກດເຫັນວ່າ ຕ່ອງໂສ້ແຕ່ລະຊະນິດມີແຫຼ່ງທີ່ມາແຕກຕ່າງກັນດັ່ງແຜນວາດລຸ່ມນີ້:

**ແຜນວາດ 2: ຕ່ອງໂສ້ປັດໃຈນຳເຂົ້າຂອງຄອບຄົວເຫຼືອກິນ**




ຂໍ້ສັງເກດ:
- ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ (ເສັ້ນຈຸດ)
- ໝາຍເຖິງໄດ້ຊື້ເປັນເງິນສົດ (ເສັ້ນເຕັມ)
- ໝາຍເຖິງເສັ້ນແບ່ງເຂດ

ໝາຍເຫດ:

1. ດິນນາບໍ່ໄດ້ຊື້ໂດຍການແບ່ງປັນໃຫ້ 0.5ເຮັກຕາ, ດິນປຸກສ້າງບໍ່ໄດ້ຊື້ (ສືບມູນ) 380 ຕາແມັດ ແລະ ດິນສວນສາລີບໍ່ໄດ້ຊື້ (ຂອງຕົນເອງ) 1 ເຮັກຕາ.
2. ນ້ຳຊົນລະປະທານຊື້ມາຈາກ (ບ້ານຕົນເອງ)
3. ຢືມເງິນກອງທຶນບ້ານປາງສາ
4. ກອງທຶນບ້ານປາງສາໄດ້ຮັບເງິນຈາກກອງທຶຫຼຸດຜ່ອນຄວາມທຸກຈົນ.
5. ຊົວານຊື້ມາຈາກແມ່ຄ້າຕະຫຼາດນາໝໍ້
6. ແມ່ຄ້າຕະຫຼາດນາໝໍ້ຊື້ມາຈາກແມ່ຄ້າເມືອງໄຊ
7. ແມ່ຄ້າເມືອງໄຊຊື້ມາຈາກແມ່ຄ້າຫຼວງພະບາງ
8. ກ່ຽວ,ພ້າ(ຕີເອງ)
9. ຈັກຊື້ມາຈາກພໍ່ຄ້າຕະຫຼາດນາໝໍ້
10. ພໍ່ຄ້າຕະຫຼາດນາໝໍ້ຊື້ຈັກມາຈາກພໍ່ຄ້າຈີນ
11. ຊື້ລົດໄຖມາຈາກບໍລິສັດດາວອນ(ເມືອງໄຊ)
12. ບໍລິສັດດາວອນຊື້ລົດໄຖມາຈາກບໍລິສັດໄທຄູໂບ້ຕ້າຈຳກັດ
13. ແຮງງານແລກປ່ຽນຫຼົກກ້າ 3 ວັນງານ(ບ້ານຕົນເອງ).
14. ແຮງງານຄອບຄົວ (ແຮງງານຕົ້ນຕໍ 5 ຄົນ,ແຮງງານສຳຮອງ 2 ຄົນ.

### 4.1.2. <u>ຕ່ອງໂສ້ປັດໃຈນຳເຂົ້າໃນລະດັບຄົວເຮືອນຂອງຄອບຄົວກຸ້ມກິນ</u>

4.1.2.1. <u>ຕ່ອງໂສ້ປັດໃຈນຳເຂົ້າດິນ/ນ້ຳຂອງຄອບຄົວກຸ້ມກິນ</u>

ດິນທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດກະສິກຳແມ່ນໄດ້ມາຈາກ 2 ແຫຼ່ງຄື: ດິນທີ່ຊື້ດ້ວຍເງິນສົດ ແລະ ດິນທີ່ບໍ່ໄດ້ ຊື້ດ້ວຍເງິນສົດ (ດິນຂອງຕົນເອງ) ໃນຈຳນວນຄອບຄົວທີ່ສຳພາດ 4 ຄອບຄົວ ມີພຽງ 2 ຄອບຄົວເທົ່ານັ້ນໄດ້ຊື້ດິນປະມານ 0.5-1.3 ຮຕ; ທັງ 4 ຄອບຄົວນຳໃຊ້ດິນ ບໍ່ໄດ້ຊື້ປະມານ 0.02 - 1.5 ຮຕ ສະນັ້ນຕ່ອງໂສ້ດິນນີ້ແມ່ນ ມີລັກສະນະສັ້ນ ຍ້ອນວ່າໄດ້ຊື້ດິນມາຈາກຊາວກະສິກອນ

ທີ່ຢູ່ບ້ານດຽວກັນເພື່ອທຳການຜະລິດກະສິກຳ ຈຶ່ງເຮັດໃຫ້ລັກສະນະຕ່ອງໂສ້ບໍ່ມີຄວາມສັບສົນເພາະວ່າບໍ່ໄດ້ຜ່ານຫຼາຍຂອດຕ່ອງໂສ້. ສຳລັບນ້ຳທີ່ນຳໃຊ້ເຂົ້າໃນການຜະລິດກະສິກຳກໍ່ໄດ້ມາຈາກແຫຼ່ງດຽວກັນກັບຄອບຄົວເຫຼືອກິນ.

4.1.2.2. ຕ່ອງໂສ້ປັດໃຈນຳເຂົ້າສິນເຊື່ອຂອງຄອບຄົວກຸ້ມກິນ

ໃນການລົງສຳພາດ 4 ຄອບຄົວນຳໃຊ້ສິນເຊື່ອໝົດທຸກຄອບຄົວທີ່ຢືມເງິນຈາກກອງທຶນບ້ານດ້ວຍດອກເບັ້ຍ 8%/ປີ ແລະ ຍັງມີ 1 ຄອບຄົວທັງຢືມເງິນຈາກກອງທຶນບ້ານ ແລະ ທະນາ ຄານນະໂຍບາຍດ້ວຍດອກເບັ້ຍ 7%/ປີ ຈຶ່ງເຮັດໃຫ້ລັກສະນະຕ່ອງໂສ້ມີລັກສະນະສັ້ນບໍ່ມີຄວາມສັບສົນຫຼາຍ ເພາະວ່າໄດ້ຢືມເງິນທີ່ຢູ່ພາຍໃນບ້ານ ແລະ ເມືອງເທົ່ານັ້ນ.

4.1.2.3. ຕ່ອງໂສ້ປັດໃຈນຳເຂົ້າອຸປະກອນຂອງຄອບຄົວກຸ້ມກິນ

ທັງ 4 ຄອບຄົວນຳໃຊ້ອຸປະກອນຊື້ດ້ວຍເງິນສົດຂອງຄອບຄົວກຸ້ມກິນດເຊັ່ນ: ລົດໄຖຊື້ມາຈາກຫຼວງນ້ຳທາ; ຊວ້ານ, ກ່ຽວ, ແວກ ແລະ ຈົກຊື້ມາຈາກ ຕະຫຼາດນາໝໍ້ ຊື້ມາຈາກ ພໍ່ຄ້າຄົນຈີນ; ສຽມຊື້ມາຈາກ ຕະຫຼາດລີໄຊ ຊື້ມາຈາກຫຼວງພະບາງ; ມີ 1 ຄອບຄົວຊື້ລົດໄຖມາຈາກບໍລິສັດດາວອນຊື້ມາຈາກບໍລິສັດໄທຄູໂບຕ້າຈຳ
ກັດ; ຊາວກະສິກອນຊື້ກ່ຽວມາຈາກຕະຫຼາດທົ່ງສາ(ໄຊຍະບູລີ) ແລະ ຊື້ ຊ້ວານ ມາຈາກຕະຫຼາດນາໝໍ້ຊື້ມາຈາກ ເມືອງໄຊ ຊື້ມາຈາກ ຫຼວງພະບາງ. ໃນນັ້ນຍັງມີບາງຄອບຄົວທີ່ບໍ່ໄດ້ຊື້ອຸປະກອນບາງຢ່າງເຊັ່ນ: ກ່ຽວ; ພ້າ; ຊວ້ານ ແລະ ແວກ ເພາະວ່າຊາວກະສິກອນຜະລິດເອົາເອງ ດັ່ງນັ້ນຕ່ອງໂສ້ອຸປະກອນ ຈຶ່ງມີລັກສະນະຍາວໄປຮອດຊາຍແດນ ສປຈີນ ແລະ ຕ່າງປະເທດໂດຍສະເພາະແມ່ນລົດໄຖການເຂົ້າຫາອຸປະກອນໂດຍກົງຍາກ ຈຶ່ງເຮັດໃຫ້ລັກສະນະຂອງຕ່ອງໂສ້ມີຄວາມສະຫຼັບສັບຊ້ອນຫຼາຍ.

4.1.2.4. ຕ່ອງໂສ້ປັດໃຈນຳເຂົ້າແຮງງານຂອງຄອບຄົວກຸ້ມກິນ

ການນຳໃຊ້ແຮງງານແມ່ນຄືກັນກັບຄອບຄົວເຫຼືອກິນເຊັ່ນ: ແຮງງານພາຍໃນຄອບຄົວ, ແຮງງານແລກປ່ຽນ ແລະ ຈ້າງແຮງງານເຂົ້າໃນການຜະລິດກະສິກຳການຜະລິດກະສິກຳແມ່ນນຳໃຊ້ອຸປະກອນທີ່ທັນສະໄໝປະຢັດເວລາ ແລະ ແຮງງານໃນການເຮັດວຽກເພື່ອໃຫ້ໄດ້ຜົນຜະລິດສູງຂຶ້ນກວ່າເກົ່າ. ຈາກການລວບລວມຂໍ້ມູນມາກ່ອນໜ້ານີ້ເຫັນໄດ້ວ່າຕ່ອງໂສ້ປັດໃຈນຳເຂົ້າແມ່ນ ໄດ້ມາຈາກຫຼາຍແຫຼ່ງດັ່ງແຜນວາດລຸ່ມນີ້:

**ແຜນວາດ 3: ຕ່ອງໂສ້ຂອງຄອບຄົວກຸ້ມກິນ**




13. ແຮງງານຄອບຄົວ (ແຮງງານຕົ້ນຕໍ 2 ຄົນ, ແຮງງານສຳຮອງ 5 ຄົນ.

ຂໍ້ສັງເກດ:
- ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
- ໝາຍເຖິງໄດ້ຊື້ເປັນເງິນສົດ
- ໝາຍເຖິງເສັ້ນແບ່ງເຂດ

<u>ໝາຍເຫດ:</u>

1. ດິນນາ 1,13 ເຮັກຕາ ແລະ ດິນສວນສາລີ 1,30 ເຮັກຕາບໍ່ໄດ້ຊື້ (ຂອງຕົນເອງ) ແລະ ດິນປຸກສ້າງບໍ່ໄດ້ຊື້(ສືບມູນ) 400 ຕາແມັດ
2. ນ້ຳຊົນລະປະທານ.
3. ຢືມເງິນກອງທຶນບ້ານປາງສາ.
4. ກອງທຶນບ້ານປາງສາໄດ້ຮັບເງິນຈາກກອງທຶນຫຼຸດຜ່ອນຄວາມທຸກຈົນຊ່ວຍເຫຼືອລ້າ.
5. ຢືມເງິນທະນາຄານນະໂຍບາຍເມືອງນາໝໍ້.
6. ສຽມຊື້ມາຈາກແມ່ຄ້າເມືອງໄຊ.
7. ແມ່ຄ້າເມືອງໄຊຊື້ມາຈາກແມ່ຄ້າຫຼວງພະບາງ.
8. ພ້າ(ຕີເອງ)
9. ກຸ່ງວຊື້ມາຈາກຕະຫຼາດນາໝໍ້.
10. ຊ້ວານ, ຈີກຊື້ມາຈາກພໍ່ຄ້າຕະຫຼາດນາໝໍ້
11. ຕະຫຼາດນາໝໍ້ຊື້ມາຈາກພໍ່ຄ້າຈີນ.
12. ລົດໄຖຊື້ມາຈາກພໍ່ຄ້າຫຼວງນ້ຳທາ
13. ແລກປ່ຽນແຮງງານເຮັດນາ5 ວັນງານ (ພີ່ນ້ອງ) ແລະ ແລກປ່ຽນແຮງງານເຮັດສວນສາລີ 6 ວັນງານ (ພີ່ນ້ອງ).

### 4.1.3. <u>ຕ່ອງໂສ້ປັດໃຈນຳເຂົ້າໃນລະດັບຄົວເຮືອນຂອງຄອບຄົວບໍ່ກຸ້ມກິນ</u>

#### 4.1.3.1. <u>ຕ່ອງໂສ້ປັດໃຈນຳເຂົ້າດິນ/ນ້ຳຂອງຄອບຄົວບໍ່ກຸ້ມກິນ</u>

ການນຳໃຊ້ດິນຂອງຊາວກະສິກອນຄອບຄົວບໍ່ກຸ້ມກິນທີ່ໄດ້ສຳພາດກໍ່ເຊັ່ນດຽວກັບຄອບຄົວເຫຼືອກິນ ແລະ ຄອບຄົວກຸ້ມກິນທີ່ໄດ້ສະເໜີມາກ່ອນໜ້ານີ້ ເພາະວ່າໄດ້ດິນມາຈາກ 2 ແຫຼ່ງຄືກັນ ຊຶ່ງຄອບຄົວບໍ່ກຸ້ມກິນຊື້ດິນປະມານ 0.5 -2.5 ຮຕ ແລະ ດິນທີ່ບໍ່ໄດ້ຊື້ເປັນເງິນສົດທັງ 4 ຄອບຄົວ ປະມານ 0.02-2 ຮຕ. ຕ່ອງໂສ້ປັດໃຈນຳເຂົ້າດິນທີ່ລົງສຳພາດທັງ 4 ຄອບຄົວແມ່ນມີລັກສະນະສັ້ນ ຍ້ອນວ່າຈຳນວນ 3 ຄອບຄົວທີ່ໄດ້ຊື້ດິນມາຈາກຊາວກະສິກອນຢູ່ບ້ານດຽວກັນເພື່ອປູກພືດ ແລະ ລ້ຽງສັດ ຈຶ່ງເຮັດໃຫ້ລັກສະນະຕ່ອງໂສ້ບໍ່ມີຄວາມສັບສົນ. ການນຳໃຊ້ນ້ຳສ່ວນຫຼາຍແມ່ນອາໄສນ້ຳຈາກທຳມະຊາດ ແຕ່ກໍ່ມີສ່ວນໜ້ອຍທີ່ນຳໃຊ້ນ້ຳຊົນລະປະທານ.

#### 4.1.3.2. <u>ຕ່ອງໂສ້ປັດໃຈນຳເຂົ້າສິນເຊື່ອຂອງຄອບຄົວບໍ່ກຸ້ມກິນ</u>

ໃນຈຳນວນ 4 ຄອບຄົວທີ່ສຳພາດມີພຽງ 3 ຄອບຄົວເທົ່ານັ້ນທີ່ນຳໃຊ້ສິນເຊື່ອ ແລະ ມີ 1 ຂອງຈຳນວນ 3 ຄອບຄົວທີ່ຢືມທັງເງິນກອງທຶນບ້ານ ແລະ ຢືມເງິນບໍ່ເປັນທາງການ (ພີ່ນ້ອງ) ດອກເບ້ຍ 7%/ປີ ແລະ ອີກ 1 ຄອບຄົວແມ່ນບໍ່ໄດ້ນຳໃຊ້ສິນເຊື່ອນຳໃຊ້ເງິນຕົນເອງເຂົ້າໃນການຜະລິດກະສິກຳ.

4.1.3.3. <u>ຕ່ອງໂສ້ປັດໃຈນຳເຂົ້າອຸປະກອນຂອງຄອບຄົວບໍ່ກຸ້ມກິນ</u>

ການນຳໃຊ້ອຸປະກອນເຂົ້າໃນການຜະລິດກະສິກຳແມ່ນໄດ້ມາຈາກ 2 ແຫຼ່ງຄື: ນຳໃຊ້ອຸປະກອນທີ່ຊື້ດ້ວຍເງິນສົດ ແລະ ບໍ່ໄດ້ຊື້ດ້ວຍເງິນສົດ ເຊິ່ງຄອບຄົວນຳໃຊ້ອຸປະກອນທີ່ຊື້ດ້ວຍເງິນສົດທັງໝົດທຸກຄອບຄົວຊື້ ຈົກ, ແວກ, ກ່ຽວ, ຊ້ວານ ແລະ ຂວານ. ນອກນັ້ນຍັງມີຄອບຄົວທີ່ນຳໃຊ້ອຸປະກອນທີ່ບໍ່ໄດ້ຊື້ເປັນເງິນສົດ 3 ຄອບຄົວໃນຈຳນວນ 4 ຄອບຄົວທີ່ສຳພາດເຊັ່ນ: ພ້າ, ແວກ, ກ່ຽວ (ຜະລິດເອງ) ດັ່ງນັ້ນຕ່ອງໂສ້ປັດໃຈນຳເຂົ້າຂອງອຸປະກອນ ຈຶ່ງມີລັກສະນະແກ່ຍາວໄປຮອດຊາຍແດນ ສປຈີນ ແລະຕ່າງປະເທດເປັນຕົ້ນແມ່ນຈົກ, ຊ້ວານ ການເຂົ້າຫາອຸປະກອນໂດຍກົງຍາກ ຈຶ່ງເຮັດໃຫ້ລັກສະນະຂອງຕ່ອງໂສ້ມີຄວາມສະຫຼັບສັບຊ້ອນຫຼາຍ ດັ່ງຕ່ອງໂສ້ລຸ່ມນີ້:

ຊາວກະສິກອນ ← ຕະຫຼາດນາໝໍ້ ← ສປຈີນ

4.1.3.4. <u>ຕ່ອງໂສ້ປັດໃຈນຳເຂົ້າແຮງງານຂອງຄອບຄົວບໍ່ກຸ້ມກິນ</u>

. ການນຳໃຊ້ແຮງງານເຂົ້າໃນການຜະລິດກະສິກຳຂອງຄອບຄົວບໍ່ກຸ້ມກິນ ສ່ວນຫຼາຍແມ່ນນຳໃຊ້ແຮງງານພາຍໃນຄອບຄົວ ແລະ ຈ້າງແຮງງານຈຳນວນໜ້ອຍໜຶ່ງ ສະນັ້ນຈຶ່ງເຮັດໃຫ້ຕ່ອງໂສ້ປັດໃຈນຳເຂົ້າແຮງງານມີລັກສະນະສັ້ນ ຍ້ອນວ່າບໍ່ໄດ້ຈ້າງແຮງງານຈາກບ່ອນອື່ນ. ນຳໃຊ້ແຮງງານຈ້າງທີ່ມີຢູ່ໃນບ້ານດຽວກັນ, ບໍ່ໄດ້ນຳໃຊ້ແຮງງານແລກປ່ຽນ ຈຶ່ງເຮັດໃຫ້ລັກສະນະຂອງຕ່ອງໂສ້ບໍ່ມີຄວາມສັບສົນ.

ຜ່ານການລວບລວມຂໍ້ມູນຂ້າງເທິງນີ້ສັງເກດເຫັນວ່າ ຊາວກະສິກອນຄອບຄົວບໍ່ກຸ້ມກິນນຳໃຊ້ສິ່ງນຳເຂົ້າທີ່ຊື້ດ້ວຍເງິນສົດໜ້ອຍກວ່າຄອບຄົວເຫຼືອກິນ ແລະ ກຸ້ມກິນດັ່ງລຸ່ມນີ້:

**ແຜນວາດ 4: ຕ່ອງໂສ້ຂອງຄອບຄົວບໍ່ກຸ້ມກິນ**




<u>ໝາຍເຫດ:</u>

1. ຊື້ດິນນາ 0.6 ເຮັກຕາຈາກພີ່ນ້ອງຢູ່ບ້ານດຽວກັນ.
2. ດິນປູກສ້າງ 200 ຕາແມັດສັບສ່າວເອົາເອງ.
3. ນ້ຳຊົນລະປະທານເຂົ້ານາ.
4. ຢືມເງິນພີ່ອ້ອງ (ສິເຊື່ອບໍ່ເປັທາງກາ).
5. ຢືມເງິນກອງທຶນບ້ານປາງສາ.
6. ກອງທຶນບ້ານປາງສາໄດ້ຮັບເງິນຈາກກອງທຶນຫຼຸດຜ່ອນຄວາມທຸກຈົນ (ຊ່ວຍເຫຼືອລ້າ).
7. ກ່ຽວ, ຊ້ວານ ແມ່ນພີ່ນ້ອງເອົາໃຫ້ .
8. ຊື້ຈົກຢູ່ຕະຫຼາດນາໝໍ້.
9. ແຮງງານຄອບຄົວ (5 ແຮງງານຕົ້ນຕໍ, 0 ແຮງງານສຳຮອງ).

## 4.2. ຕ່ອງໂສ້ສິ່ງນຳເຂົ້າໃນລະດັບການຜະລິດຂອງແຕ່ລະກິດຈະກຳ

ຈາກຂໍ້ມູນທີ່ໄດ້ຈາກການລົງສຳພາດຕົວຈິງໃນຈຳນວນ 12 ຄອບຄົວພວກເຮົາຈະມາເບິ່ງຢູ່ 4 ດ້ານຄື:

- ແຫຼ່ງຂໍ້ມູນຂ່າວສານ ແມ່ນໝາຍເຖິງບັນດາເຕັກນິກ ແລະ ວິທີການຜະລິດທີ່ຊາວກະສິກອນໄດ້ຮັບ.
- ສິ່ງນຳເຂົ້າທີ່ເປັນເຄມີ ແມ່ນໝາຍເຖິງສິ່ງທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດທີ່ມີຄຸນລັກສະນະທາງເຄມີເຊັ່ນ: ຢາຂ້າຫຍ້າ, ຢາຂ້າແມງໄມ້, ນ້ຳມັນກາຊວນ, ປຸ໋ຍ, ເກືອ...



**ຮູບ 6: ສິ່ງນຳເຂົ້າທີ່ເປັນເຄມີ**

- ການບໍລິການ ແມ່ນໝາຍເຖິງການຈ້າງບໍລິການຕ່າງໆເຂົ້າໃນການຜະລິດ.
- ສິ່ງນຳເຂົ້າທີ່ບໍ່ເປັນເຄມີ ແມ່ນໝາຍເຖິງສິ່ງທີ່ຊາວກະສິກອນນຳໃຊ້ເຂົ້າໃນການ ຜະລິດເຊັ່ນ: ແນວພັນພືດ, ແນວພັນສັດ, ອາຫານສັດ, ຝຸ່ນທຳມະຊາດຕ່າງໆ...




**ຮູບ7: ສິ່ງນຳເຂົ້າທີ່ບໍ່ເປັນເຄມີ**

### 4.2.1. <u>ຕ່ອງໂສ້ສິ່ງນຳເຂົ້າໃນການຜະລິດຂອງລະດັບຄອບຄົວເຫຼືອກິນ</u>

ຈຳນວນ 4 ຄອບຄົວເຫຼືອກິນທີ່ໄດ້ສຳພາດແມ່ນໄດ້ມີການຜະລິດກະສິກຳຢູ່ 8 ກິດຈະກຳຄື: ປູກເຂົ້ານາປີ, ປູກເຂົ້າໄຮ່, ສວນສາລີ, ສວນຢາງພາລາ, ລ້ຽງງົວ, ລ້ຽງຄວາຍ, ລ້ຽງໝູ ແລະ ລ້ຽງໄກ່ ໝົດທຸກຄອບຄົວທີ່ສຳພາດມີການປູກເຂົ້ານາປີ ແລະ ປູກສາລີ, ມີແຕ່ 2 ຄອບຄົວປູກເຂົ້າໄຮ່, ປູກຢາງພາ ແລະ ລ້ຽງງົວ ໃນນັ້ນມີ 1 ຄອບຄົວລ້ຽງຄວາຍຕື່ມອີກ ນອກຈາກນັ້ນໃນຈຳນວນ 4 ຄອບຄົວທີ່ສຳພາດມີ 3 ຄອບຄົວລ້ຽງສັດປີກ. ລັກສະນະຕ່ອງໂສ້ສິ່ງນຳເຂົ້າໃນດ້ານຕ່າງໆນີ້ ແມ່ນໄດ້ສະແດງໃນຂ້າງລຸ່ມນີ້:

4.2.1.1. ການປູກເຂົ້ານາປີຂອງຄອບຄົວເຫຼືອກິນ

ຄອບຄົວເຫຼືອກິນຢູ່ເຂດນີ້ສ່ວນຫຼາຍແມ່ນຍຶດຖືອາຊີບປູກເຂົ້ານາປີເປັນຫຼັກຄຽງຄູ່ກັບການປູກສາລີ ເຊິ່ງໄດ້ສະແດງອອກໃຫ້ເຫັນບ່ອນວ່າໃນຈຳນວນ 4 ຄອບຄົວທີ່ໄດ້ລົງສຳພາດແມ່ນໄດ້ມີການປູກເຂົ້ານາປີໝົດທຸກຄອບຄົວ ໂດຍມີການນຳໃຊ້ປັດໃຈນຳເຂົ້າເຊັ່ນ:ແນວພັນ ແລະ ນ້ຳມັນກາຊວນເພື່ອນຳໃຊ້ເຂົ້າໃນການກຽມດິນ.

➢ ຊາວກະສິກອນນຳໃຊ້ເຕັກນິກທີ່ທັນສະໄໝໂດຍມີການນຳໃຊ້ລົດໄຖເຂົ້າໃນການກຽມດິນ, ວິທີການປູກ ແລະ ການບົວລະບັດສ່ວນຫຼາຍແມ່ນນຳໃຊ້ເຕັກນິກແບບພື້ນບ້ານ ປອດສານພິດ. ສ່ວນແຫຼ່ງຂໍ້ມູນຂ່າວສານໃນການປູກເຂົ້ານາປີຊາວກະສິກອນຈຳນວນ 3 ຄອບຄົວໄດ້ນຳໃຊ້ເຕັກນິກວິທີປູກທີ່ພີ່ນ້ອງແນະນຳໃຫ້ ແລະ ຍັງມີ 1 ຄອບຄົວທີ່ນຳໃຊ້ເຕັກນິກທີ່ຕົນເຄີຍປູກ ມາ. ຕ່ອງໂສ້ສິ່ງນຳເຂົ້າແຫຼ່ງຂໍ້ມູນຂ່າວສານມີລັກສະນະສັ້ນ ຍ້ອນວ່າໄດ້ຮັບຂໍ້ມູນຂ່າວສານທີ່ມາຈາກບ້ານຕົນເອງບໍ່ໄດ້ຮັບຂໍ້ມູນຈາກພາຍນອກເລີຍ.

➢ ສຳລັບສິ່ງນຳເຂົ້າທີ່ເປັນເຄມີການປູກເຂົ້ານາປີແມ່ນນຳໃຊ້ເຄມີທັງ 4 ຄອບຄົວທີ່ໄດ້ລົງສຳພາດເປັນຕົ້ນແມ່ນນຳໃຊ້ນ້ຳມັນກາຊວນຊື້ມາຈາກ.




➢ ຊາວກະສິກອນບໍ່ໄດ້ນຳໃຊ້ການບໍລິການໃດໆເລີຍ ເພາະວ່າຊາວກະສິກອນນຳໃຊ້ແຮງງານໃນຄອບຄົວ ແລະ ແຮງງານແລກປ່ຽນກັບພີ່ນ້ອງໃນບ້ານຕົນເອງ, ບໍ່ໄດ້ຈ້າງແຮງງານຈາກບ່ອນອື່ນ.

➢ ສິ່ງນຳເຂົ້າທີ່ບໍ່ເປັນເຄມີຊາວກະສິກອນໄດ້ຊື້ແນວພັນໃໝ່ມາປູກ 1 ຄອບຄົວ ແລະ ອີກ 3 ຄອບຄົວນຳໃຊ້ແນວພັນແບບພື້ນບ້ານ, ພີ່ນ້ອງເອົາໃຫ້ບໍ່ໄດ້ຊື້ ສະນັ້ນຕ່ອງໂສ້ສິ່ງນຳເຂົ້າໃນການ ປູກເຂົ້ານາປີ ຈຶ່ງມີລັກສະນະສັ້ນ ແລະ ງ່າຍດາຍບໍ່ໄດ້ຜ່ານຫຼາຍຂະບວນການ.




ຜ່ານການລວບລວມຂໍ້ມູນຂ້າງເທິງນີ້ສັງເກດເຫັນວ່າ ຕ່ອງໂສ້ສິ່ງນຳເຂົ້າມີລັກສະນະຍາວໄປຮອດຕ່າງປະເທດ ເພາະວ່າຕ້ອງໄດ້ຜ່ານຫຼາຍເຄືອຂ່າຍດັ່ງແຜນວາດລຸ່ມນີ້

**ແຜນວາດ 5: ກິດຈະກຳການປູກເຂົ້ານາປີຂອງຄອບຄົວເຫຼືອກິນ**




ຂໍ້ສັງເກດ:
- ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
- ໝາຍເຖິງໄດ້ຊື້ເປັນເງິນສົດ
- ໝາຍເຖິງເສັ້ນແບ່ງເຂດ

<u>ໝາຍເຫດ:</u>

1. ນຳໃຊ້ເຕັກນິກທີ່ເຄີຍເຮັດມາ,ນຳໃຊ້ແນວ ພັນຕົນເອງ.
2. ຊື້ນ້ຳມັນກາຊວນມາຈາກຕະຫຼາດນາໝໍ້
3. ຕະຫຼາດນາໝໍ້ຊື້ນ້ຳມັນມາຈາກປ້ຳນ້ຳມັນສາຍນ້ຳມາວບໍລິການ
4. ປ້ຳນ້ຳມັນສາຍນ້ຳມາວບໍລິການຊື້ມາຈາກບໍລິສັດນ້ຳມັນເຊື້ອໄຟລາວໃໝ່ຈຳກັດ.
5. ບໍລິສັດນ້ຳມັນເຊື້ອໄຟລາວໃໝ່ຈຳກັດຊື້ມາຈາກບໍລິສັດຫວຽດນາມ.

4.2.1.2. <u>ການປູກເຂົ້າໄຮ່ຂອງຄອບຄົວເຫຼືອກິນ</u>

ຜ່ານການລົງສຶກສາສັງເກດເຫັນວ່າການປູກເຂົ້າໄຮ່ຢູ່ສອງບ້ານດັ່ງກ່າວນີ້ແມ່ນຖືເປັນອັນດັບສອງຮອງຈາກການປູກເຂົ້ານາ ແລະ ປູກສາລີ ຊຶ່ງສິ່ງນຳເຂົ້າມີດັ່ງນີ້:

- ແຫຼ່ງຂໍ້ມູນຂ່າວສານໃນການປູກເຂົ້າໄຮ່ແມ່ນນຳໃຊ້ເຕັກນິກທີ່ຕົນເຄີຍປູກມາທັງ 2 ຄອບຄົວບໍ່ເຄີຍໄດ້ຮັບເຕັກນິກໃໝ່ເຮັດຕາມພື້ນບ້ານ, ປອດສານພິດ, ປູກຕາມທຳມະຊາດ.
- ຊາວກະສິກອນໃນເຂດດັ່ງກ່າວນີ້ແມ່ນບໍ່ມີການນຳໃຊ້ເຄມີໃດໆ ຍ້ອນວ່າດິນມີຄວາມອຸດົມສົມບູນ.
- ຊາວກະສິກອນບໍ່ມີການນຳໃຊ້ການບໍລິການ ເພາະບໍ່ໄດ້ຈ້າງແຮງງານຈາກບ່ອນອື່ນນຳໃຊ້ແຕ່ແຮງງານຄອບຄົວ ແລະ ແລກປ່ຽນ.
- ສຳລັບແນວພັນຊາວກະສິກອນນຳໃຊ້ແນວພັນຊ້ຳເກົ່າບໍ່ມີການປັບປຸງແນວພັນໃໝ່.

ຈາກການສັງລວມຂໍ້ມູນມາຂ້າງເທິງນີ້ຕ່ອງໂສ້ສິ່ງນຳເຂົ້າມີລັກສະນັ້ນສັ້ນຍ້ອນວ່າຊາວກະສິກອນບໍ່ໄດ້ຊື້ສິ່ງນຳເຂົ້າຊະນິດໃດໆເລີຍດັ່ງແຜນວາດລຸ່ມນີ້:

**ແຜນວາດ 6: ກິດຈະກຳການປູກເຂົ້າໄຮ່ຂອງຄອບຄົວເຫຼືອກິນ**




<u>ໝາຍເຫດ:</u>

1.ນຳໃຊ້ເຕັກນິກທີ່ເຄີຍເຮັດມາ, ນຳໃຊ້ແນວພັນຕົນເອງ.

ຂໍ້ສັງເກດ:
- ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
- ໝາຍເຖິງໄດ້ຊື້ເປັນເງິນສົດ
- ໝາຍເຖິງເສັ້ນແບ່ງເຂດ

4.2.1.3. ການປູກສາລີຂອງຄອບຄົວເຫຼືອກິນ

ການປູກສາລີສັງເກດເຫັນ ຈາກຄອບຄົວທີ່ໄດ້ລົງສຳພາດແມ່ນມີການປູກສາລີໝົດທຸກຄອບຄົວ ພວກເຂົາເຈົ້າຊື້ສິ່ງນຳເຂົ້າຫຼາຍຊະນິດເຊັ່ນ: ແນວພັນ, ນ້ຳມັນກາຊວນເພື່ອກຽມດິນ ເຊິ່ງລັກສະນະການໄດ້ມາມີຄື:

➢ ສຳລັບການປູກສາລີແມ່ນນຳໃຊ້ເຕັກນິກທີ່ເຄີຍປູກມາໝົດທຸກຄອບຄົວທີ່ໄດ້ສຳພາດບໍ່ໄດ້. ຮັບເຕັກນິກໃໝ່ເຮັດຕາມພໍ່ແມ່ເຄີຍພາເຮັດມາແບບທ້ອງຖິ່ນ, ປູກຕາມທຳມະຊາດ.

➢ ສິ່ງນຳເຂົ້າທີ່ເປັນເຄມີແມ່ນ ມີການນຳໃຊ້ນ້ຳມັນກາຊວນຈຳນວນ 3 ຄອບຄົວເພື່ອໄຖດິນ ແລະ ອີກ 1 ຄອບຄົວບໍ່ໄດ້ນຳໃຊ້ສານເຄມີໃດໆເລີຍ ຊຶ່ງແຫຼ່ງທີ່ມາດັ່ງຕ່ອງໂສ້ລຸ່ມນີ້:

ຊາວກະສິກອນ ← ຕະຫຼາດນາໝໍ້ ← ເມືອງໄຊ ← ສສຫວຽດນາມ

➢ ການບໍລິການຈຳນວນ 3 ຄອບຄົວນຳໃຊ້ແຮງງານຈ້າງ ແລະ ແຮງງານແລກປ່ຽນ ແຕ່ວ່າມີ 1 ຄອບຄົວນຳໃຊ້ແຮງງານຄອບຄົວ ແລະ ແຮງງານຈ້າງຈາກຊາວກະສິກອນທີ່ຢູ່ບ້ານດຽວກັນ.

➢ ສິ່ງນຳເຂົ້າທີ່ເປັນເຄມີ, ມີລັກສະນະແກ່ຍາວໄປຮອດຕ່າງປະເທດ ຍ້ອນໄດ້ຜ່ານຫຼາຍຂັ້ນຕອນ ຈຶ່ງເຮັດໃຫ້ຕ່ອງໂສ້ສິ່ງນຳເຂົ້າສະຫຼັບສັບຊ້ອນເປັນຕົ້ນແມ່ນແນວພັນສາລີ ຊາວກະສິກອນຊື້ມາຈາກ ດັ່ງຕ່ອງໂສ້ລຸ່ມນີ້:

ຊາວກະສິກອນ ← ເມືອງໄຊ ← ບໍລິສັດຫວຽດນາມ

ຜ່ານການລວບລວມຂໍ້ມູນຂ້າງເທິງນີ້ສັງເກດເຫັນວ່າຕ່ອງໂສ້ສິ່ງນຳເຂົ້າມີລັກສະນະຍາວໄປຮອດຕ່າງປະເທດ ໂດຍສະເພາະຕ່ອງໂສ້ຂອງແນວພັນສາລີໄດ້ຜ່ານຫຼາຍເຄືອຂ່າຍດັ່ງແຜນວາດລຸ່ມນີ້:

**ແຜນວາດ 7: ກິດຈະກຳການປູກສາລີຂອງຄອບຄົວເຫຼືອກິນ**




ໝາຍເຫດ

1. ນຳໃຊ້ເຕັກນິກທີ່ເຄີຍເຮັດມາ
2. ຊື້ແນວພັນ ແລະ ນ້ຳມັນກາຊວນ ຢູ່ຕະຫຼາດນາໝໍ້
3. ແມ່ຄ້າຢູ່ເມືອງນາໝໍ້ຊື້ນ້ຳມັນມາຈາກປ້ຳນ້ຳມັນສາຍນ້ຳມາວ
4. ປ້ຳສາຍນ້ຳມາວຊື້ ມາຈາກບໍລິສັດເຊື້ອໄຟລາວໃໝ່ຈຳກັດ ນະຄອນຫຼວງວຽງຈັນ
5. ບໍລິສັດເຊື້ອໄຟລາວໃໝ່ຊື້ມາຈາກ ( ສສຫວຽດນາມ )

4.2.1.4. <u>ການປູກຢາງພາລາຂອງຄອບຄົວເຫຼືອກິນ</u>

ໃນຈຳນວນ 4 ຄອບຄົວເຫຼືອກິນທີ່ສຳພາດນັ້ນແມ່ນມີພຽງແຕ່ 2 ຄອບຄົວເທົ່ານັ້ນປູກຢາງພາລາເປັນອາຊີບເສີມເພື່ອສ້າງລາຍຮັບເພີ້ມໃຫ້ແກ່ຄອບຄົວຂອງເຂົາເຈົ້າ. ຕ່ອງໂສ້ສິ່ງນຳເຂົ້າໃນການຜະລິດມີດັ່ງນີ້:

- ➢ ແຫຼ່ງຂໍ້ມູນຂ່າວສານໃນການປູກຢາງພາລາມີ 1 ຄອບຄົວໄດ້ຮັບຂໍ້ມູນຂ່າວສານຈາກຊາວກະສິກອນທີ່ຢູ່ບ້ານຕົນເອງ ແລະ 1 ຄອບຄົວໄດ້ຮັບຄຳແນນຳ ແລະ ວິທີປູກບໍລິສັດຄົນຈີນໂດຍກົງ.
- ➢ ສິ່ງນຳເຂົ້າທີ່ເປັນເຄມີຊາວກະສິກອນໄດ້ມີການນຳໃຊ້ຢາຂ້າຫຍ້າ ຈຶ່ງເຮັດໃຫ້ຕ່ອງໂສ້ສິ່ງນຳເຂົ້າມີລັກສະນະແກ່ຍາວໄປຮອດເມືອງປາກແບງ ດັ່ງຕ່ອງໂສ້ລຸ່ມນີ້:

ຊາວກະສິກອນ ← ຕະຫຼາດນາໝໍ້ ← ເມືອງໄຊ ← ເມືອງປາກແບງ

- ➢ ສ່ວນການບໍລິການບໍ່ໄດ້ຈ້າງບໍລິການໃດໆເລີຍ ເພາະວ່າເຂົາເຈົ້າບໍ່ໄດ້ຈ້າງແຮງງານຈາກແຫຼ່ງອື່ນໆ ນຳໃຊ້ອຸປະກອນຕ່າງໆທີ່ມີຢູ່ໃນຄອບຄົວ.
- ➢ ສຳລັບສິ່ງນຳເຂົ້າທີ່ບໍ່ເປັນເຄມີຊາວກະສິກອນໄດ້ນຳໃຊ້ແນວພັນ. ຕ່ອງໂສ້ສິ່ງນຳເຂົ້າມີລັກສະນະຍາວເພາະວ່າໄດ້ຜ່ານຫຼາຍຂອດຂອງຕ່ອງໂສ້ ເຊັ່ນຊາວກະສິກອນຊື້ມາຈາກ:

ຊາວກະສິກອນ ← ພໍ່ຄ້າໃນບ້ານ ← ບໍລິສັດຈີນ

ຈາກການສັງລວມຂໍ້ມູນມາຂ້າງເທິງນີ້ສັງເກດເຫັນວ່າ ຕ່ອງໂສ້ສິ່ງນຳເຂົ້າມີລັກສະນະແກ່ຍາວໄປຮອດຊາຍແດນຕ່າງເປັນຕົ້ນແມ່ນແນວພັນຢາງພາລາ.

**ແຜນວາດ 8: ກິດຈະກຳການປູກຢາງພາລາຂອງຄອບຄົວເຫຼືອກິນ**




<u>ໝາຍເຫດ</u>

1. ຊື້ ແນວພັນ ແລະ ໄດ້ຮັບຂໍ້ແນະນຳວິທີປູກຢາງພາລາຈາກພໍ່ຄ້າຢູ່ຫຼວງນ້ຳທາ
2. ຊື້ຢາຂ້າຫຍ້າຈາກ ຕະຫຼາດ ນາໝໍ້
3. ແມ່ຄ້າຢູ່ຕະຫຼາດນາໝໍ້ ຊື້ຢາຂ້າຫຍ້າຈາກເມືອງໄຊ
4. ແມ່ຄ້າຢູ່ເມືອງໄຊ ຊື້ຢາຂ້າຫຍ້າ ຈາກເມືອງປາກແບງ

#### 4.2.1.5. ການລ້ຽງງົວຂອງຄອບຄົວເຫຼືອກິນ

ການລ້ຽງງົວຂອງຄອບຄົວເຫຼືອກິນທີ່ສຳພາດ 4 ຄອບຄົວມີພຽງແຕ່ 2 ຄອບຄົວເທົ່ານັ້ນທີ່ລ້ຽງງົວ ເຊິ່ງໄດ້ຮັບຄຳແນະນຳກ່ຽວກັບວິທີການລ້ຽງງົວຈາກໂຄງການລັດ ແລະ ເພື່ອນບ້ານສິ່ງນຳເຂົ້າໃນການລ້ຽງງົວມີດັ່ງນີ້:

- ໃນການລ້ຽງງົວຂອງຊາວກະສິກອນແມ່ນລ້ຽງແບບປ່ອຍຕາມທຳມະຊາດບໍ່ໄດ້ຮັບຂໍ້ມູນຂ່າວສານຈາກແຫຼ່ງອື່ນ.
- ຈາກການສຳພາດຊາວກະສິກອນໄດ້ນຳໃຊ້ສິ່ງນຳເຂົ້າທີ່ເປັນເຄມີ ຊຶ່ງມີລັກສະນະແກ່ຍາວໄປຮອດຊາຍແດນຕ່າງປະເທດ ໂດຍສະເພາະແມ່ນເກືອ.

ຊາວກະສິກອນ ← ຕະຫຼາດນາໝໍ້ ← ເມືອງໄຊ ← ບໍ່ເຕ່ນ

- ການບໍລິການຊາວກະສິກອນໄດ້ຈ້າງສັດຕະວະແພດບ້ານມາສັກວັກຊິນໃຫ້.
- ຊາວກະສິກອນໄດ້ໃຊ້ສິ່ງນຳເຂົ້າທີ່ບໍ່ເປັນເຄມີ ໂດຍສະເພາະແມ່ນແນວພັນ.

ຜ່ານການສະເໜີຂໍ້ມູນຕົວຈິງມາຂ້າງເທິງນີ້ສັງເກດເຫັນວ່າ ຕ່ອງໂສ້ສິ່ງນຳເຂົ້າຂອງການລ້ຽງງົວແມ່ນມີລັກສະນະແກ່ຍາວໄປຮອດຊາຍແດນຕ່າງປະເທດລາວ - ຈີນເຊັ່ນ: ເກືອ ແຕ່ສິ່ງນຳເຂົ້າທີ່ໄດ້ນັ້ນບໍ່ໄດ້ຂຶ້ນກັບແຫຼ່ງດຽວ, ຂຶ້ນກັບຫຼາຍພາກສ່ວນ (ບໍ່ເປັນເອກະລາດ) ດັ່ງແຜນວາດລຸ່ມນີ້:

**ແຜນວາດ 9: ກິດຈະກຳການລ້ຽງງົວຂອງຄອບຄົວເຫຼືອກິນ**




ໝາຍເຫດ

1. ເອົາແນວພັນງົວ,ວັກຊິນມາຈາກໂຄງການລັດ ແລະໄດ້ຮັບຂໍ້ມູນກ່ຽວກັບການລ້ຽງງົວ ຈາກໂຄງການພ້ອມ
2. ຊື້ເກືອຈາກ ຕະຫຼາດນາໝໍ້
3. ພໍ່ຄ້າຢູ່ຕະຫຼາດນາໝໍ້ຊື້ເກືອ ມາຈາກຕະຫຼາດລືໄຊ
4. ພໍ່ຄ້າຢູ່ຕະຫຼາດລືໄຊຊື້ເກືອຈາກບໍ່ເຕ່ນ
5. ຊື້ເຊືອກຈາກບ້ານນາໝໍ້ເໜືອ




#### 4.2.1.6. ການລ້ຽງຄວາຍຂອງຄອບຄົວເຫຼືອກິນ

ຈາກການລົງສຳພາດຊາວກະສິກອນ 4 ຄອບຄົວຢູ່ໃນເຂດສຶກສາເຫັນໄດ້ວ່າມີພຽງ 1 ຄອບຄົວລ້ຽງຄວາຍເຊິ່ງປັດໃຈນຳເຂົ້າທີ່ຊາວກະສິກອນນຳໃຊ້ມີ:

➢ ການລ້ຽງຄວາຍຂອງຊາວກະສິກອນແມ່ນລ້ຽງແບບປ່ອຍຕາມທຳມະຊາດບໍ່ໄດ້ຮັບຂໍ້ມູນຂ່າວສານຈາກແຫຼ່ງອື່ນ.

➢ ໃນການສຳພາດຊາວກະສິກອນໄດ້ນຳໃຊ້ສິ່ງນຳເຂົ້າທີ່ເປັນເຄມີ ຊຶ່ງມີລັກສະນະແກ່ຍາວໄປຮອດຊາຍແດນຕ່າງປະເທດ ໂດຍສະເພາະແມ່ນເກືອ.

➢ ຊາວກະສິກອນບໍ່ໄດ້ນຳໃຊ້ການບໍລິການໃດໆເລີຍ ເພາະວ່ານຳໃຊ້ແຮງງານພາຍໃນຄອບຄົວບໍ່ໄດ້ຈ້າງແຮງງານຈາກແຫຼ່ງອື່ນ.

➢ ສຳລັບສິ່ງນຳເຂົ້າທີ່ບໍ່ເປັນເຄມີຊາວກະສິກອນນຳໃຊ້ແນວພັນ ແລະ ເຊືອກເທົ່ານັ້ນ.

ຜ່ານການສະເໜີຂໍ້ມູນຕົວຈິງມາຂ້າງເທິງນີ້ສັງເກດເຫັນວ່າຕ່ອງໂສ້ສິ່ງນຳເຂົ້າຂອງການລ້ຽງຄວາຍມີລັກສະນະແກ່ຍາວໄປຮອດຕ່າງແຂວງ ແລະ ຊາຍແດນຕ່າງປະເທດລາວ - ຈີນ ແຫຼ່ງທີ່ມາຂອງສິ່ງນຳເຂົ້າບໍ່ໄດ້ຂຶ້ນພຽງແຕ່ແຫຼ່ງດຽວເທົ່ານັ້ນຂຶ້ນກັບຫຼາຍພາກສ່ວນ (ບໍ່ເປັນເອກະລາດ) ດັ່ງແຜນວາດລຸ່ມນີ້:

**ແຜນວາດ 10: ກິດຈະກຳການລ້ຽງຄວາຍຂອງຄອບຄົວເຫຼືອກິນ**




<u>ໝາຍເຫດ</u>

1.ແນວພັນບໍ່ໄດ້ຊື້ (ສືບມູນ) ແລະ ນຳໃຊ້ເຕັກນິກທີ່ເຄີຍເຮັດມາ.

2.ເຊືອກ ແລະ ເກືອຊື້ມາຈາກແມ່ຄ້າຕະຫຼາດນາໝໍ້

3.ແມ່ຄ້າຕະຫຼາດນາໝໍ້ຊື້ເຊືອກ ແລະ ເກືອມາຈາກຕະຫຼາດລືໄຊ

4. ແມ່ຄ້າຕະຫຼາດລືໄຊຊື້ເກືອບໍ່ເຕນ

5. ແມ່ຄ້າຕະຫຼາດໄຊຊື້ເຊືອກມາຈາກພໍ່ຄ້າໄຊຍະບູລີ

4.2.1.7. <u>ການລ້ຽງໝູຂອງຄອບຄົວເຫຼືອກິນ</u>

ຈາກການສຳພາດຕົວຈິງຄອບຄົວເຫຼືອກິນລ້ຽງໝູພຽງແຕ່ 2 ຄອບຄົວເທົ່ານັ້ນ. ການລ້ຽງໝູ ເຊິ່ງສິ່ງນຳເຂົ້າຂອງການລ້ຽງໝູມີຄື:

➢ ການລ້ຽງໝູແມ່ນໄດ້ຮັບຂໍ້ມູນຂ່າວສານຈາກສັດຕະວະແພດບ້ານ 1 ຄອບຄົວ ແລະ ອີກ 1 ຄອບຄົວໄດ້ໄປຝຶກອົບຮົບການນຳໃຊ້ຢາວັກຊີນຈາກກະສິກຳເມືອງໂດຍກົງ.

➢ ຊາວກະສິກອນໄດ້ນຳໃຊ້ສິ່ງນຳເຂົ້າທີ່ເປັນເຄມີ ໂດຍສະເພາະວັກຊີນ ດັ່ງຕ່ອງໂສ້ລຸ່ມນີ້:



➢ ສຳລັບການບໍລິການມີ 1 ຄອບຄົວໄດ້ຈ້າງສັດຕະວະແພດບ້ານມາສັກວັກຊິນໃຫ້ ແລະ ອີກ 1 ຄອບຄົວຊື້ວັກຊິນມາສັກເອົາເອງ.

➢ ຊາວກະສິກອນນຳໃຊ້ສິ່ງນຳເຂົ້າທີ່ບໍ່ເປັນເຄມີ, ມີການນຳໃຊ້ວັກຊິນເທົ່ານັ້ນ.

ຜ່ານການສະເໜີຂໍ້ມູນຕົວຈິງມາຂ້າງເທິງນີ້ສັງເກດເຫັນວ່າ ຕ່ອງໂສ້ສິ່ງນຳເຂົ້າຂອງການລ້ຽງໝູມີລັກສະນະແກ່ຍາວໄປຮອດຕ່າງແຂວງ ຍ້ອນວ່າຕ້ອງໄດ້ຜ່ານຫຼາຍຂອດຂອງຕ່ອງໂສ້ ດັ່ງແຜນວາດລຸ່ມນີ້:

**ແຜນວາດ 11: ກິດຈະກຳການລ້ຽງໝູຂອງຄອບຄົວເຫຼືອກິນ**




ໝາຍເຫດ

1. ນຳໃຊ້ເຕັກນິກທີ່ເຄີຍເຮັດມາ, ນຳໃຊ້ອາຫານທີ່ຫານມາເອງ (ບອນ, ຮຳ)
2. ຊື້ແນວພັນໝູຈາກພີ່ນ້ອງຢູ່ບ້ານດຽວກັນ ແລະ ຈ້າງລາວສັກວັກຊິນພ້ອມ
3. ພີ່ນ້ອງມາສັກວັກຊີໃຫ້ຊື້ວັກຊິນຈາກກະສິກຳເມືອງ
4. ກະສິກຳເມືອງຊື້ວັກຊິນຈາກ ພະແນກກະສິກຳແຂວງອຸດົມໄຊ
5. ພະແນກຊື້ວັກຊິນມາຈາກ ກົມລ້ຽງສັດ
6. ກົມລ້ຽງສັດຊື້ວັກຊິນຈາກໂຮງງານຜະລິດວັກຊິນ.

4.2.1.8. <u>ການລ້ຽງສັດປີກຂອງຄອບຄົວເຫຼືອກິນ</u>

ໃນການລົງສຳພາດຄອບຄົວເຫຼືອກິນ 4 ຄອບຄົວມີພຽງ 3 ຄອບຄົວທີ່ລ້ຽງໄກ່ ສັງເກດເຫັນວ່າສິ່ງນຳເຂົ້າມີດັ່ງນີ້:

➢ ຊາວກະສິກອນນຳໃຊ້ເຕັກນິກທີ່ຕົນເອງເຄີຍເຮັດມາແບບທ້ອງຖິ່ນ,ລ້ຽງປ່ອຍຕາມທຳມະຊາດບໍ່ໄດ້ຮັບຂໍ້ມູນຂ່າວສານຈາກພາຍນອກ.

➢ ສຳລັບສິ່ງນຳເຂົ້າທີ່ເປັນເຄມີເຂົາເຈົ້າບໍ່ໄດ້ນຳໃຊ້ສານເຄມີໃດໆເລີຍລ້ຽງຕາມທຳມະຊາດ.

➢ ຊາວກະສິກອນນຳໃຊ້ແຮງງານຢູ່ໃນຄອບຄົວບໍ່ໃຊ້ການບໍລິການໃດໆເລີຍ.

➢ ຊາວກະສິກອນນຳໃຊ້ສິ່ງນຳເຂົ້າທີ່ບໍ່ເປັນເຄມີເປັນຕົ້ນແມ່ນແນວພັນແຕ່ວ່າເປັນແນວພັນຂອງເຂົາເຈົ້າເອງ.

ຈາກການສັງລວມຂໍ້ມູນມາຂ້າງເທິງນີ້ສັງເກດເຫັນວ່າຕ່ອງໂສ້ຂອງສິ່ງນຳເຂົ້າມີລັກສະນະສັ້ນແຫຼ່ງທີ່ມາແມ່ນບໍ່ໄດ້ຜ່ານຫຼາຍຂະບວນການດັ່ງແຜນວາດລຸ່ມຫນີ້:

ແຜນວາດ 12: ກິດຈະກຳການລ້ຽງສັດປີກຂອງຄອບຄົວເຫຼືອກິນ




### 4.2.2. ຕ່ອງໂສ້ສິ່ງນຳເຂົ້າໃນການຜະລິດຂອງລະດັບຄອບຄົວກຸ້ມກິນ

ຄອບຄົວກຸ້ມກິນຈຳນວນ 4 ຄອບຄົວທີ່ໄດ້ລົງສຳພາດເຫັນວ່າເຂົາເຈົ້າປະກອບອາຊີບກະສິກຳມີ 10 ກິດຈະກຳດ້ວຍກັນຄື: ປູກເຂົ້ານາປີ, ປູກເຂົ້າໄຮ່, ປູກສາລີ, ປູກຢາງພາລາ, ປູກຂ່າ, ປູກໝາກໝອດ, ລ້ຽງງົວ, ລ້ຽງໝູ, ແລະ ລ້ຽງສັດປີກ. ໃນນັ້ນເຫັນວ່າທັງໝົດທຸກຄອບຄົວປູກເຂົ້ານາປີ ແລະ ປູກສາລີ ແຕ່ມີ 1 ຄອບຄົວປູກຢາງພາລາ, ປູກຂ່າ, ປູກໝາກໝອດ, ລ້ຽງງົວ ແລະ ປູກເຂົ້າໄຮ່. ນອກຈາກນັ້ນຈຳນວນ 4 ຄອບຄົວມີ 3 ຄອບຄົວລ້ຽງໝູ ແລະ ລ້ຽງສັດປີກທັງ 4 ຄອບຄົວ ສ່ວນສິ່ງນຳເຂົ້າຂອງແຕ່ລະກິດຈະກຳມີດັ່ງລຸ່ມນີ້:

#### 4.2.2.1. ການປູກເຂົ້ານາປີຂອງຄອບຄົວກຸ້ມກິນ

ໃນການລົງສຳພາດທັງ 4 ຄອບຄົວຊາວກະສິກອນປູກເຂົ້ານາປີໝົດທຸກຄອບຄົວ ເຊິ່ງສິ່ງນຳເຂົ້າມີດັ່ງລຸ່ມນີ້:

➢ ແຫຼ່ງຂໍ້ມູນຂ່າວສານໃນການປູກເຂົ້ານາປີໝົດ 4 ຄອບຄົວທີ່ໄດ້ລົງສຳພາດແມ່ນນຳໃຊ້ເຕັກນິກທີ່ຕົນເຄີຍເຮັດມາ.

➢ ສຳລັບສິ່ງນຳເຂົ້າທີ່ເປັນເຄມີໃນການປູກເຂົ້ານາປີນີ້ໝົດທຸກຄອບຄົວໄດ້ນຳໃຊ້ນ້ຳມັນກາຊວນເພື່ອກຽມດິນ ດັ່ງຕ່ອງໂສ້ລຸ່ມນີ້:




➢ ສ່ວນການບໍລິການມີ 1 ຄອບຄົວໄດ້ຈ້າງຊາວກະສິກອນໄຖຄາດນາ ແລະ ອີກ 3 ຄອບຄົວບໍ່ໄດ້ນຳໃຊ້ການບໍລິການນຳໃຊ້ແຕ່ແຮງງານພາຍໃນຄອບຄົວເທົ່ານັ້ນ.

➢ ສິ່ງນຳເຂົ້າທີ່ບໍ່ເປັນເຄມີນຳໃຊ້ແນວພັນຂອງຕົນເອງບໍ່ໄດ້ນຳໃຊ້ແນວພັນໃໝ່.

ຜ່ານການສະເໜີຂໍ້ມູນມາຂ້າງເທິງນີ້ສັງເກດເຫັນວ່າຕ່ອງໂສ້ຂອງນ້ຳມັນກາຊວນມີລັກສະນະຍາວໄປຮອດຕ່າງປະເທດ ສະນັ້ນຈຶ່ງເຮັດໃຫ້ຕ່ອງໂສ້ຜ່ານຫຼາຍຂະບວນການ ດັ່ງແຜນວາດລຸ່ມນີ້:

**ແຜນວາດ 13: ກິດຈະກຳການປູກເຂົ້ານາປີຂອງຄອບຄົວກຸ້ມກິນ**




ໝາຍເຫດ:

1. ແນວພັນບໍ່ໄດ້ຊື້ (ຂອງຕົນເອງ) ແລະ ນຳໃຊ້ເຕັກນິກທີ່ເຄີຍເຮັດມາ
2. ຊື້ນ້ຳມັນກາຊວນມາຈາກຕະຫຼາດນາໝໍ້
3. ຕະຫຼາດນາໝໍ້ຊື້ນ້ຳມັນມາຈາກປ້ຳນ້ຳມັນສາຍນ້ຳມາວບໍລິການ
4. ປ້ຳນ້ຳມັນສາຍນ້ຳມາວບໍລິການ ຊື້ມາຈາກບໍລິສັດນ້ຳມັນເຊື້ອໄຟລາວໃໝ່ຈຳກັດ
5. ບໍລິສັດນ້ຳມັນເຊື້ອໄຟລາວໃໝ່ ຈຳກັດຊື້ມາຈາກບໍລິສັດສສຫວຽດນາມ

4.2.2.2. <u>ການປູກເຂົ້າໄຮ່ຂອງຄອບຄົວກຸ້ມກິນ</u>

ໃນ 4 ຄອບຄົວທີ່ໄດ້ສຳພາດປູກເຂົ້າໄຮ່ມີພຽງແຕ່ຄອບຄົວດຽວເທົ່ານັ້ນ. ເຂົາເຈົ້າໄດ້ມີການນຳໃຊ້ສິ່ງນຳເຂົ້າທີ່ເປັນເຄມີເປັນຕົ້ນແມ່ນຢາຂ້າຫຍ້າ ຊຶ່ງສິ່ງນຳເຂົ້າມີດັ່ງນີ້:

- ວິທີປູກແມ່ນປູກຕາມທີ່ເຂົາເຈົ້າເຄີຍເຮັດຜ່ານມາ, ແບບພື້ນບ້ານຊາວກະສິກອນບໍ່ໄດ້ຮັບຂໍ້ມູນຫຍັງເລີຍ.
- ສິ່ງນຳເຂົ້າທີ່ເປັນເຄມີຊາວກະສິກອນນຳໃຊ້ເປັນຕົ້ນແມ່ນຢາຂ້າຫຍ້າ ຊຶ່ງຕ່ອງໂສ້ນີ້:

ຊາວກະສິກອນ ← ຕະຫຼາດນາໝໍ້ ← ເມືອງໄຊ ← ເມືອງປາກແບງ

- ຊາວກະສິກອນໄດ້ໃຊ້ການບໍລິການເຊັ່ນ: ຈ້າງແຮງງານຖາງ, ຮື້ ແລະ ເສຍຫຍ້າແຫຼ່ງທີ່ມາຂອງແຮງງານມາຈາກຊາວກະສິກອນທີ່ຢູ່ບ້ານດຽວກັນ.
- ສິ່ງນຳເຂົ້າທີ່ບໍ່ເປັນເຄມີຂອງການປູກເຂົ້າໄຮ່ນຳໃຊ້ແນວພັນຂອງຕົນເອງເທົ່ານັ້ນບໍ່ໄດ້ນຳໃຊ້ແນວພັນຈາກບ່ອນອື່ນ.

ຜ່ານການສັງລວມຂໍ້ມູນມາຂ້າງເທິງນີ້ຕ່ອງໂສ້ສິ່ງນຳເຂົ້າມີລັກສະນະແກ່ຍາວໄປຮອດຕ່າງແຂວງສະນັ້ນແລ້ວຕ່ອງໂສ້ສິ່ງນຳເຂົ້າ ຈຶ່ງມີລັກສະນະຍາວຕ້ອງໄດ້ຜ່ານຫຼາຍຂອດຂອງສິ່ງນຳເຂົ້າ ດັ່ງແຜນວາດລຸ່ມນີ້:

**ແຜນວາດ 14: ກິດຈະກຳການປູກເຂົ້າໄຮ່ຂອງຄອບຄົວກຸ້ມກິນ**




ໝາຍເຫດ

1. ນຳໃຊ້ແນວພັນຕົນເອງ ແລະ ນຳໃຊ້ເຕັກນິກທີ່ເຄີຍເຮັດມາ
2. ຊື້ຢາຂ້າຫຍ້າຈາກຕະຫຼາດນາໝໍ້
3. ແມ່ຄ້າຢູ່ຕະຫຼາດນາໝໍ້ຊື້ຢາຂ້າຫຍ້າຈາກຕະຫຼາດລືໄຊ
4. ແມ່ຄ້າຢູ່ຄະຫຼາດລືໄຊຊື້ຢາຂ້າຫຍ້າມາຈາກ ພໍ່ຄ້າຢູ່ເມືອງປາກແບງ
5. ຈ້າງແຮງງານຖາງ 20 ວັນງານ (ຄົນບ້ານດຽວກັນ)
6. ຈ້າງຮື້ 10 ວັນງານ (ຄົນບ້ານດຽວກັນ)
7. ຈ້າງເສຍຫຍ້າ 10 ວັນງານ (ຄົນບ້ານດຽວກັນ)

4.2.2.3. ການປູກສາລີຂອງຄອບຄົວກຸ້ມກິນ

ຜ່ານການສຳພາດຄອບຄົວກຸ້ມກິນກ່ຽວກັບການປູກສາລີສັງເກດເຫັນວ່າ ເຂົາເຈົ້າປູກສາລີໝົດທຸກຄອບຄົວ ແລະ ໄດ້ມີການນຳໃຊ້ສິ່ງນຳເຂົ້າທີ່ເປັນເຄມີທຸກຄອບຄົວເຊັ່ນ: ນ້ຳມັນກາຊວນ ແລະ ຢາຂ້າຫຍ້າ.

- ➢ ຊາວກະສິກອນທັງ 4 ຄອບຄົວນຳໃຊ້ເຕັກນິກທີ່ຕົນເຄີຍເຮັດມາ, ແບບທຳມະຊາດ.
- ➢ ສິ່ງນຳເຂົ້າທີ່ບໍ່ເປັນເຄມີຊາວກະສິກອນໄດ້ນຳໃຊ້ນ້ຳມັນກາຊວນ ແລະ ຢາຂ້າຫຍ້າ ດັ່ງຕ່ອງໂສ້ລຸ່ມນີ້:

ນ້ຳມັນກາຊວນ: ຕະຫຼາດນາໝໍ້ ← ເມືອງໄຊ ← ນະຄອນຫຼວງ ← ສສຫວຽດນາມ

ຢາຂ້າຫຍ້າ: ຕະຫຼາດນາໝໍ້ ← ເມືອງໄຊ ← ເມືອງປາກແບງ

- ➢ ການນຳໃຊ້ການບໍລິການຊາວກະສິກອນນຳໃຊ້ແຮງງານຈ້າງເສຍຫຍ້າສາລີ, ຈ້າງແກະສາລີ, ຈ້າງຂົນສາລີ ແລະ ເກັບກູ້ຜົນຜະລິດສາລີ.
- ➢ ສິ່ງນຳເຂົ້າທີ່ບໍ່ເປັນເຄມີຊາວກະສິກອນນຳໃຊ້ແຕ່ແນວພັນເທົ່ານັ້ນ ຊຶ່ງຕ່ອງໂສ້ມີດັ່ງນີ້:

ຕະຫຼາດນາໝໍ້ ← ພໍ່ຄ້າບໍ່ແກ້ວ

ຜ່ານການສະເໜີຂໍ້ມູນຕົວຈິງມາຂ້າງເທິງນີ້ສັງເກດເຫັນວ່າ ຕ່ອງໂສ້ສິ່ງນຳເຂົ້າການປູກສາລີມີລັກສະນະສັ້ນເພາະວ່າບໍ່ໄດ້ຜ່ານຫຼາຍຂັ້ນຕອນ ດັ່ງແຜນວາດລຸ່ມນີ້:

**ແຜນວາດ 15: ກິດຈະກຳການປູກສາລີຂອງຄອບຄົວກຸ້ມກິນ**




ໝາຍເຫດ:

1. ນຳໃຊ້ເຕັກນິກທີ່ເຄີຍເຮັດມາ
2. ຢາຂ້າຫຍ້າຊື້ມາຈາກພໍ່ຄ້າຕະຫຼາດນາໝໍ້
3. ພໍ່ຄ້າຕະຫຼາດນາໝໍ້ຊື້ມາຈາກແມ່ຄ້າ ເມືອງໄຊ
4. ແມ່ຄ້າເມືອງໄຊຊື້ມາຈາກພໍ່ຄ້າເມືອງປາກແບງ
5. ຊື້ນ້ຳມັນກາຊວນມາຈາກຕະຫຼາດນາໝໍ້
6. ຕະຫຼາດນາໝໍ້ຊື້ນ້ຳມັນມາຈາກປ້ຳນ້ຳມັນ ສາຍນ້ຳມາວບໍລິການ
7. ປ້ຳນ້ຳມັນສາຍນ້ຳມາວບໍລິການຊື້ ມາ ຈາກບໍລິສັດນ້ຳມັນເຊື້ອໄຟລາວໃໝ່ຈຳກັດ
8. ບໍລິສັດນ້ຳມັນເຊື້ອໄຟລາວໃໝ່ຈຳ ກັດຊື້ມາຈາກບໍລິສັດສສຫວຽດນາມ
9. ແນວພັນຊື້ມາຈາກພໍ່ຄ້າຕະຫຼາດນາໝໍ້
10. ພໍ່ຄ້າຕະຫຼາດນາໝໍ້ ຊື້ມາຈາກພໍ່ຄ້າບໍ່ແກ້ວມາ ສົ່ງໃຫ້

4.2.2.4. <u>ການປູກຢາງພາລາຂອງຄອບຄົວກຸ້ມກິນ</u>

ປັດຈຸບັນການປູກຢາງພາລານັບມື້ນັບຫຼາຍຂຶ້ນເພາະວ່າເປັນພືດເສດຖະກິດ ແລະ ເປັນພືດໄລຍະຍາວເພື່ອສ້າງລາຍຮັບໃຫ້ແກ່ຄອບຄົວຂອງເຂົາເຈົ້າ.

- ➢ ຊາວກະສິກອນໄດ້ຮັບຂໍ້ມູນຂ່າວສານຈາກພໍ່ຄ້າແນະນຳໃຫ້ ແລະ ແນະນຳວິທີການປູກໃຫ້ພ້ອມ.
- ➢ ສຳລັບສິ່ງນຳເຂົ້າທີ່ເປັນເຄມີຊາວກະສິກອນບໍ່ໄດ້ນຳໃຊ້ສານເຄມີໃດໆເລີຍ ເພາະວ່າດິນໃນເຂດດັ່ງກ່າວມີຄວາມອຸດົມສົມບູນ.
- ➢ ຊາວກະສິກອນໄດ້ໃຊ້ບໍລິການໂດຍເຂົາເຈົ້າໄດ້ຈ້າງຖາງ ແລະ ຈ້າງບົວລະບັດຢາງພາລາ.
- ➢ ສິ່ງນຳເຂົ້າທີ່ບໍ່ເປັນເຄມີຊາວກະສິກອນໄດ້ນຳໃຊ້ມີແຕ່ແນວພັນເທົ່ານັ້ນ.

ຈາກການສະເໜີມາຂ້າງເທິງນີ້ ຕ່ອງໂສ້ປັດໃຈນຳເຂົ້າການປູກຢາງພາລາມີລັກສະນະສັ້ນ ຍ້ອນວ່າເຂົາເຈົ້າຊື້ແນວພັນຈາກພໍ່ຄ້າໂດຍກົງ ດັ່ງແຜນວາດລຸ່ມນີ້:

**ແຜນວາດ 16: ກິດຈະກຳການປູກຢາງພາລາຂອງຄອບຄົວກຸ້ມກິນ**




ໝາຍເຫດ

1. ຊື້ແນວພັນຈາກພໍ່ຄ້າຫຼວງນ້ຳທາ ແລະ ໄດ້ຂໍ້ແນະນຳວິທີປູກຢາງພາລາພ້ອມ
2. ຈ້າງຄົນຖາງສວນຢາງພາລາ 20 ວັນ ງານ (ຢູ່ບ້ານດຽວກັນ)
3. ຈ້າງຄົນປົວລະບັດຮັກສາ 20 ວັນງານ (ຢູ່ບ້ານດຽວກັນ)

ຂໍ້ສັງເກດ

- ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
- ໝາຍເຖິງໄດ້ຊື້ເປັນເງິນສົດ
- ໝາຍເຖິງເສັ້ນແບ່ງເຂດ

4.2.2.5. ການປູກຂ່າຂອງຄອບຄົວກຸ້ມກິນ

ຜ່ານການລົງສຳພາດ 4 ຄອບຄົວສັງເກດເຫັນວ່າມີພຽງ 1 ຄອບຄົວທີ່ປູກຂ່າເທົ່ານັ້ນ ສິ່ງນຳເຂົ້າມີດັ່ງນີ້: ຊາວກະສິກອນນຳໃຊ້ເຕັກນິກແບບພື້ນບ້ານ, ປອດສານພິດ. ການປູກຂ່າຊາວກະສິກອນບໍ່ໄດ້ນຳໃຊ້ການບໍລິການໃດໆເລີຍ ເນື່ອງຈາກວ່ານຳໃຊ້ແຮງງານພາຍໃນຄອບຄົວເທົ່ານັ້ນ. ສ່ວນການບໍລິການບໍ່ໄດ້ນຳໃຊ້ການບໍລິການໃດໆເລີຍໃຊ້ແຮງງານຢູ່ໃນຄອບຄົວເທົ່ານັ້ນ. ສຳລັບສິ່ງນຳເຂົ້າຊາວກະສິກອນນຳໃຊ້ແຕ່ແນວພັນທີ່ຊື້ມາຈາກຕະຫຼາດນາໝໍ້.

ຈາກການສະເໜີມາຂ້າງເທິງນີ້ ຕ່ອງໂສ້ປັດໃຈນຳເຂົ້າຂອງການປູກຂ່າມີລັກສະນະສັ້ນຍ້ອນວ່າພວກເຂົາຊື້ປັດໃຈນຳເຂົ້າມາຈາກຕະຫຼາດໃກ້ບ້ານ ດັ່ງແຜນວາດລຸ່ມນີ້:

**ແຜນວາດ 17: ກິດຈະກຳການປູກຂ່າຂອງຄອບຄົວກຸ້ມກິນ**




ໝາຍເຫດ

1. ນຳໃຊ້ເຕັກນິກທີ່ເຄີຍເຮັດມາ
2. ຊື້ແນວພັນມາຈາກຕະຫຼາດນາໝໍ້

ຂໍ້ສັງເກດ:

- ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
- ໝາຍເຖິງໄດ້ຊື້ເປັນເງິນສົດ
- ໝາຍເຖິງເສັ້ນແບ່ງເຂດ

4.2.2.6. ການປູກໝາກໝອດຂອງຄອບຄົວກຸ້ມກິນ

ຄອບຄົວກຸ້ມກິນທີ່ສຳພາດແມ່ນມີພຽງຄອບຄົວດຽວທີ່ປູກໝາກໝອດ ເຊິ່ງເຂົາເຈົ້າໄດ້ຮັບການສະໜັບສະໜູນຈາກບໍລິສັດຄົນຈີນຄື: ບໍລິສັດຈີນດັ່ງກ່າວໄດ້ມາສົ່ງເສີມທາງດ້ານເຕັກນິກວິທີການປູກ ແລະ ແນວພັນ ໃນນັ້ນບໍລິສັດນີ້ຍັງເປັນທັງຜູ້ເກັບຊື້ຜົນຜະລິດໝາກໝອດອີກດ້ວຍ ດັ່ງນັ້ນຕ່ອງໂສ້ສິ່ງນຳເຂົ້າຈຶ່ງມີລັກສະນະສັ້ນຍ້ອນວ່າບໍ່ໄດ້ມີການຊື້ສິ່ງນຳເຂົ້າຊະນິດໃດໆເລີຍ ຊຶ່ງເຮັດໃຫ້ລາວຂຶ້ນກັບແຫຼ່ງດຽວເທົ່ານັ້ນ ດັ່ງແຜນວາດລຸ່ມນີ້:

**ແຜນວາດ 18: ກິດຈະກຳການປູກໝາກໝອດຂອງຄອບຄົວກຸ້ມກິນ**




ໝາຍເຫດ

1. ເຕັກນິກການປູກ ແລະ ແນວພັນແມ່ນບໍລິສັດຄິນຈີນມາສະໜອງໃຫ້




4.2.2.7. ການລ້ຽງງົວຂອງຄອບຄົວກຸ້ມກິນ

ການລ້ຽງງົວຂອງຄອບຄົວກຸ້ມກິນທີ່ໄດ້ລົງສຳພາດນີ້ແມ່ນມີພຽງຄອບຄົວດຽວເທົ່ານັ້ນ. ເຂົາເຈົ້າລ້ຽງແບບປ່ອຍຕາມທຳມະຊາດ ຕ່ອງໂສ້ສິ່ງນຳເຂົ້າມີລັກສະນະແກ່ຍາວໄປຮອດຊາຍແດນຕ່າງປະເທດ ແລະ ນະຄອນຫຼວງເຊັ່ນ: ວັກຊີນຍ້ອນວ່າແຫຼ່ງທີ່ມາຂອງວັກຊີນມາຈາກແຫຼ່ງດຽວກັນກັບການລ້ຽງໝູຂອງຄອບຄົວເຫຼືອກິນ, ເກືອ ແລະ ເຊືອກ ດັ່ງຕ່ອງໂສ້ລຸ່ມນີ້:

ຕະຫຼາດນາໝໍ້ ← ບໍ່ແຕນ

ສະນັ້ນຕ່ອງໂສ້ສິ່ງນຳເຂົ້າໃນການລ້ຽງງົວມີລັກສະນະຍາວຕ້ອງໄດ້ຜ່ານຫຼາຍຂັ້ນຕອນຈຶ່ງເຮັດໃຫ້ຕ່ອງໂສ້ບໍ່ມີຄວາມສັບສົນຫຼາຍ ດັ່ງແຜນວາດລຸ່ມນີ້:

**ແຜນວາດ 19: ກິດຈະກຳການລ້ຽງງົວຂອງຄອບຄົວກຸ້ມກິນ**




ໝາຍເຫດ

1. ຊື້ແນວພັນງົວ ມາຈາກຊາວກະສິກອນ ທີ່ຢູ່ບ້ານດຽວກັນ ແລະ ແນະນຳວິທີການລ້ຽງ
2. ຊາວກະສິກອນ ໄດ້ໄປຝຶກອົບຮົມວິທີການນຳໃຊ້ວັກຊີນຈາກກະສິກຳເມືອງ
3. ຊື້ເກືອຈາກພໍ່ຄ້າເມືອງໄຊ
4. ພໍ່ຄ້າເມືອງໄຊຊື້ເກືອຈາກພໍ່ຄ້າບໍ່ແກ້ວ
5. ວັກຊີນຊື້ຈາກກະສິກຳເມືອງນາໝໍ້
6. ກະສິກຳເມືອງນາໝໍ້ຊື້ວັກຊີນມາຈາກ ກ/ກແຂວງ
7. ກ/ກແຂວງຊື້ວັກຊີນມາຈາກ ກົມລ້ຽງສັດ
8. ກົມລ້ຽງສັດຊື້ມາຈາກໂຮງງານຜະລິດວັກຊີນ
9. ຊື້ເຊືອກຈາກແມ່ຄ້າຕະຫຼາດນາໝໍ້
10. ແມ່ຄ້າຕະຫຼາດາໝໍ້ຊື້ມາຈາກພໍ່ຄ້າ (ບໍ່ເຕນ)

4.2.2.8. <u>ການລ້ຽງໝູຂອງຄອບຄົວກຸ້ມກິນ</u>

ການລ້ຽງໝູຂອງຄອບຄົວກຸ້ມກິນທີ່ໄດ້ລົງສຳພາດຈຳນວນ 4 ຄອບຄົວມີ 3 ຄອບຄົວທີ່ລ້ຽງໝູ. ຕ່ອງໂສ້ສິ່ງນຳເຂົ້າການລ້ຽງໝູມີລັກສະນະແກ່ຍາວມາຮອດນະຄອນຫຼວງ ໂດຍສະເພາະແມ່ນຕ່ອງໂສ້ຂອງວັກຊີນ ຊຶ່ງແຫຼ່ງທີ່ມາຂອງວັກຊີນມາຈາກແຫຼ່ງດຽວກັນກັບການນຳໃຊ້ວັກຊີນເຂົ້າໃນການລ້ຽງໝູຂອງຄອບຄົວເຫຼືອກິນ. ຊາວກະສິກອນນຳໃຊ້ເຕັກນິກໃໝ່ຈາກກະສິກຳເມືອງໂດຍມີການສັກວັກຊີນປ້ອງກັນພະຍາດຕ່າງໆ ສະນັ້ນແຫຼ່ງທີ່ມາຂອງປັດໃຈນຳເຂົ້າໃນການຜະລິດນີ້ຈຶ່ງຂຶ້ນກັບຫຼາຍພາກສ່ວນ ດັ່ງແຜນວາດລຸ່ມນີ້:

**ແຜນວາດ 20: ກິດຈະກຳການລ້ຽງໝູຂອງຄອບຄົວກຸ້ມກິນ**




<u>ໝາຍເຫດ</u>

1. ແນວພັນຊື້ມາຈາກຊາວກະສິກອນຢູ່ບ້ານຈອມແສນ ແລະ ແນະນຳວິທີການລ້ຽງພ້ອມ
2. ສັດຕະວະແພດບ້ານມາສັກວັກຊີນໃຫ້ຊື້ວັກຊີນຈາກກ/ກເມືອງນາໝໍ້
3. ກ/ກເມືອງນາໝໍ້ຊື້ວັກຊີນມາຈາກກ/ກແຂວງ
4. ກ/ກແຂວງຊື້ວັກຊີນມາຈາກກົມລ້ຽງສັດ
5. ກົມລ້ຽງສັດຊື້ມາຈາກໂຮງງານຜະລິດວັກຊີນ.
6. ຮຳບໍ່ໄດ້ຊື້ຂອງຕົນເອງ

ຂໍ້ສັງເກດ:
- ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
- ໝາຍເຖິງໄດ້ຊື້ເປັນເງິນສົດ
- ໝາຍເຖິງເສັ້ນແບ່ງເຂດ

4.2.2.9. <u>ການລ້ຽງສັດປີກຂອງຄອບຄົວກຸ້ມກິນ</u>

ການລ້ຽງສັດປີກຂອງຄອບຄົວກຸ້ມກິນທີ່ໄດ້ລົງສຳພາດແມ່ນມີພຽງຄອບຄົວດຽວທີ່ລ້ຽງເປັດ ແລະ 3 ຄອບຄົວລ້ຽງໄກ່. ເຂົາເຈົ້າກໍ່ລ້ຽງຕາມທຳມະຊາດ ແຕ່ໄດ້ມີການນຳໃຊ້ຫົວອາຫານເກືອເປັດຕອນມັນຍັງນ້ອຍ. ຕ່ອງໂສ້ສິ່ງນຳເຂົ້າມີລັກສະນະແກ່ຍາວມາຮອດນະຄອນຫຼວງວຽງຈັນເຊັ່ນ: ຕ່ອງໂສ້ຂອງວັກຊີນຊື້ມາຈາກແຫຼ່ງດຽວກັນກັບຂໍ້ມູນທີ່ໄດ້ສະເໜີມາຂ້າງເທິງນີ້ ແລະ ຕ່ອງໂສ້ສິ່ງນຳເຂົ້າຍາວໄປຮອດຊາຍແດນຕ່າງປະເທດລາວ-ຈີນເຊັ່ນ: ຫົວອາຫານເປັດນ້ອຍ. ຊາວກະສິກອນນຳໃຊ້ເຕັກນິກແບບພື້ນບ້ານ ສະນັ້ນແຫຼ່ງທີ່ມາຂອງສິ່ງນຳເຂົ້າໃນການຜະລິດແມ່ນຂຶ້ນກັບ ຫຼາຍພາກສ່ວນ (ບໍ່ເປັນເອກະລາດ).

ຫົວອາຫານ: ຕະຫຼາດນາໝໍ້ ← ສປຈີນ

**ແຜນວາດ 21: ກິດຈະກຳການລ້ຽງສັດປີກຂອງຄອບຄົວກຸ້ມກິນ**




<u>ໝາຍເຫດ</u>

1. ແນວພັນຊື້ຈາກພີ່ນ້ອງຢູ່ບ້ານດຽວກັນ) ແລະແນະນຳວິທີລ້ຽງພ້ອມ
2. ວັກຊີນຈ້າງສັດຕະວະແພດບ້ານມາສັກວັກຊີນໃຫ້
3. ສັດຕະວະແພດບ້ານຊື້ວັກຊີນ ມາຈາກກະສິກຳເມືອງ
4. ກະສິກຳເມືອງຊື້ມາຈາກພະແນກກະສິກຳແຂວງອຸດົມໄຊ
5. ພະແນກກະສິກຳຊື້ມາຈາກກົມລ້ຽງສັດ
6. ກົມລ້ຽງສັດຊື້ມາຈາກໂຮງງານຜະລິດວັກຊີນ

ຂໍ້ສັງເກດ:
ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
ໝາຍເຖິງໄດ້ຊື້ເປັນເງິນສົດ
ໝາຍເຖິງເສັ້ນແບ່ງເຂດ

4.2.3. <u>ຕ່ອງໂສ້ສິ່ງນຳເຂົ້າໃນການຜະລິດຂອງລະດັບຄອບຄົວບໍ່ກຸ້ມກິນ</u>

ຈຳນວນ 4 ຄອບຄົວທີ່ໄດ້ລົງສຳພາດຊາວກະສິກອນໄດ້ທຳການຜະລິດກະສິກຳຈຳນວນ 7 ກິດຈະກຳຫຼັກເຊັ່ນ: ປູກເຂົ້ານາປີ, ປູກເຂົ້າໄຮ່, ປູກສາລີ, ປູກໝາກໜອດ, ລ້ຽງງົວ ແລະ ລ້ຽງສັດປີກ ໃນນັ້ນເຫັນວ່າມີການປູກເຂົ້ານາປີ 3 ຄອບຄົວ, ປູກເຂົ້າໄຮ່, ປູກໝາກໜອດ ແລະ ລ້ຽງງົວມີພຽງ 1 ຄອບຄົວ. ປູກສາລີຈຳນວນ 2 ຄອບຄົວ, ແລະ ລ້ຽງສັດປີກທັງ 4 ຄອບຄົວ ສ່ວນສິ່ງນຳເຂົ້າມີດັ່ງນີ້:

4.2.3.1. <u>ກິດຈະກຳການປູກເຂົ້ານາປີຂອງຄອບຄົວບໍ່ກຸ້ມກິນ</u>

ການປູກເຂົ້ານາປີນີ້ສັງເກດເຫັນໄດ້ວ່າໄດ້ຮັບເຕັກນິກຈາກພີ່ນ້ອງ ແລະ ນຳໃຊ້ເຕັກນິກທີ່ຕົນເຄີຍເຮັດຜ່ານມາ. ພວກເຂົາເຈົ້າມີການນຳໃຊ້ເຄມີເປັນຕົ້ນແມ່ນນ້ຳມັນກາຊວນການປູກເຂົ້ານາປີນີ້ໄດ້ມີການຈ້າງໄຖ-ຄາດ, ສ່ວນແນວພັນແມ່ນນຳໃຊ້ແນວພັນຈາກບ້ານຕົນເອງ, ແນວພັນມາຈາກພີ່ນ້ອງ ແລະ ນຳໃຊ້ແນວພັນຂອງຕົນເອງ ສະນັ້ນຕ່ອງໂສ້ປັດໃຈນຳເຂົ້າມີລັກສະນະແກ່ຍາວໄປຮອດຕ່າງປະເທດ (ສສຫວຽດນາມ) ເປັນຕົ້ນແມ່ນຕ່ອງໂສ້ຂອງນ້ຳມັນກາຊວນແຫຼ່ງທີ່ມາຂອງນ້ຳມັນກາຊວນກໍ່ມາຈາກແຫຼ່ງດຽວກັນທີ່ໄດ້ສະເໜີມາຂ້າງເທິງ. ສ່ວນຫຼາຍຊາວກະສິກອນນຳໃຊ້ເຕັກນິກແບບພື້ນບ້ານ, ປອດສານພິດແຕ່ຍັງມີ 1 ຄອບຄົວໄດ້ນຳໃຊ້ລົດໄຖເຂົ້າໃນການກຽມດິນນາ. ຕ່ອງໂສ້ສິ່ງນຳເຂົ້າແມ່ນຜ່ານຫຼາຍຂະບວນການ ແລະ ຂຶ້ນກັບຫຼາຍພາກສ່ວນ ດັ່ງແຜນວາດລຸ່ມນີ້:

**ແຜນວາດ 22: ກິດຈະກຳການປູກເຂົ້ານາປີຂອງຄອບຄົວບໍ່ກຸ້ມກິນ**




<u>ໝາຍເຫດ</u>

1. ນຳໃຊ້ເຕັກນິກທີ່ເຄີຍເຮັດມາ
2. ຊື້ແນວພັນເຂົ້າຈ້າວມາຈາກຄົນບ້ານດຽວກັນ
3. ຄົນບ້ານດຽວກັນ ຮັກສາແນວພັນໄວ້ເອງ

ຂໍ້ສັງເກດ:
ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
ໝາຍເຖິງໄດ້ຊື້ເປັນເງິນສົດ
ໝາຍເຖິງເສັ້ນແບ່ງເຂດ

4.2.3.2. <u>ການປູກເຂົ້າໄຮ່ຂອງຄອບຄົວບໍ່ກຸ້ມກິນ</u>

ຈາກການລົງສຳພາດ 4 ຄອບຄົວມີພຽງ 1 ຄອບຄົວເທົ່ານັ້ນທີ່ປູກເຂົ້າໄຮ່ ສະນັ້ນຕ່ອງໂສ້ປັດໃຈນຳເຂົ້າຂອງການປູກເຂົ້າໄຮ່ມີລັກສະນະສັ້ນແບບງ່າຍດາຍຍ້ອນນຳໃຊ້ແນວພັນ. ສຳລັບເຕັກນິກແມ່ນນຳໃຊ້ເຕັກນິກແບບພື້ນບ້ານ, ປອດສານພິດ (ບໍ່ມີການນຳໃຊ້ເຄມີ) ເຂົ້າໃນການປູກເຂົ້າໄຮ່ ດັ່ງນັ້ນແຫຼ່ງທີ່ມາຂອງສິ່ງນຳເຂົ້າໃນການຜະລິດແມ່ນບໍ່ຂຶ້ນກັບໃຜເປັນເອກະລາດ ດັ່ງແຜນວາດລຸ່ມນີ້:

**ແຜນວາດ 23: ກິດຈະກຳການປູກເຂົ້າໄຮ່ຂອງຄອບຄົວບໍ່ກຸ້ມກິນ**




<u>ໝາຍເຫດ</u>

1. ນຳໃຊ້ແນວພັນຂອງຕົນເອງ ແລະ ນຳໃຊ້ເຕັກນິກທີ່ເຄີຍເຮັດມາ




4.2.3.3. <u>ການປູກສາລີຂອງຄອບຄົວບໍ່ກຸ້ມກິນ</u>

ໃນການປູກສາລີຂອງຄອບຄົວບໍ່ກຸ້ມກິນມີແຕ່ 2 ຄອບຄົວເທົ່ານັ້ນປູກສາລີທີ່ໄດ້ລົງສຳພາດທັງໝົດ 4 ຄອບຄົວ. ຊາວກະສິກອນໄດ້ນຳໃຊ້ສິ່ງນຳເຂົ້າທີ່ເປັນເຄມີເປັນຕົ້ນແມ່ນຢາຂ້າຫຍ້າຊື້ມາຈາກພໍ່ຄ້າອຸດົມໄຊໂດຍກົງ ສະນັ້ນຈຶ່ງເຮັດໃຫ້ຕ່ອງໂສ້ສິ່ງນຳເຂົ້າການປູກສາລີມີລັກສະນະຍາວໂດຍສະເພາະແມ່ນແນວພັນສາລີແມ່ນຂຶ້ນກັບຫຼາຍພາກສ່ວນເຊັ່ນ:

ແນວພັນຊື້ມາຈາກ [ຕະຫຼາດນາໝໍ້] ← [ເມືອງໄຊ] ← [ບໍລິສັດກະສິກຳຮ່າໂນ້ຍ]

**ແຜນວາດ 24: ກິດຈະກຳການປູກສາລີຂອງຄອບຄົວບໍ່ກຸ້ມກິນ**




<u>ໝາຍເຫດ</u>

1. ນຳໃຊ້ເຕັກນິກທີ່ເຄີຍເຮັດມາ
2. ແນວພັນ: ຊື້ມາຈາກພໍ່ຄ້າຕະຫຼາດນາໝໍ້
3. ພໍ່ຄ້າຕະຫຼາດນາໝໍ້ຊື້ : ມາຈາກແມ່ຄ້າເມືອງໄຊ
4. ແມ່ຄ້າເມືອງໄຊຊື້ມາຈາກບໍລິສັດສສຫວຽດນາມ

ຂໍ້ສັງເກດ: ······• ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
——• ໝາຍເຖິງໄດ້ຊື້ເປັນເງິນສົດ
—— ໝາຍເຖິງເສັ້ນແບ່ງເຂດ

4.2.3.4. <u>ການປູກໝາກໜອດຂອງຄອບຄົວບໍ່ກຸ້ມກິນ</u>

ການປູກໝາກໜອດຂອງຄອບຄົວບໍ່ກຸ້ມກິນສິ່ງນຳເຂົ້າຕ່າງໆ ແມ່ນບໍລິສັດຄົນຈີນມາສະໜອງໃຫ້ເປັນຕົ້ນແມ່ນແນວພັນ ແລະ ມີການເຊັນສັນຍາເມື່ອໄດ້ຮັບຜົນຜະລິດບໍລິສັດຈີນເປັນຄົນຮັບຊື້ເຊັ່ນດຽວກັບການປູກໝາກໜອດຂອງຄອບຄົວກຸ້ມກິນ ສະນັ້ນແລ້ວຕ່ອງໂສ້ສິ່ງນຳເຂົ້າຂອງການປູກໝາກໜອດມີລັກສະນະງ່າຍດາຍ ຍ້ອນວ່າບໍ່ໄດ້ຂຶ້ນກັບຫຼາຍພາກສ່ວນ ດັ່ງແຜນວາດລຸ່ມນີ້:

**ແຜນວາດ 25: ກິດຈະກຳການປູກໝາກໜອດຂອງຄອບຄົວບໍ່ກຸ້ມກິນ**




<u>ໝາຍເຫດ</u>

1. ໃຊ້ເຕັກນິກການປູກ ແລະ ແນວພັນແມ່ນບໍລິສັດຄົນຈີນມາສະໜອງໃຫ້

ຂໍ້ສັງເກດ: ······• ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
——• ໝາຍເຖິງໄດ້ຊື້ເປັນເງິນສົດ
—— ໝາຍເຖິງເສັ້ນແບ່ງເຂດ

4.2.3.5. <u>ການລ້ຽງງົວຂອງຄອບຄົວບໍ່ກຸ້ມກິນ</u>

ການລ້ຽງງົວຂອງຄອບຄົວບໍ່ກຸ້ມກິນແມ່ນມີການນຳໃຊ້ວັກຊິນເພື່ອປ້ອງກັນພະຍາດແຫຼ່ງທີ່ມາຂອງວັກຊິນແມ່ນມາຈາກແຫຼ່ງດຽວກັນກັບການລ້ຽງໝູຂອງຄອບຄົວເຫຼືອກິນ ສະນັ້ນແລ້ວແຫຼ່ງທີ່ມາຂອງປັດໃຈນຳເຂົ້າໃນການຜະລິດແມ່ນຂຶ້ນກັບຫຼາຍພາກສ່ວນ (ບໍ່ເປັນເອກະລາດ) ດັ່ງແຜນວາດລຸ່ມນີ້:

**ແຜນວາດ 26: ກິດຈະກຳການລ້ຽງງົວຂອງຄອບຄົວບໍ່ກຸ້ມກິນ**




<u>ໝາຍເຫດ</u>

1. ແນວພັນບໍ່ໄດ້ຊື້ ສືບມູນ ແລະ ໃຊ້ເຕັກນິກທີ່ເຄີຍເຮັດມາ
2. ເກືອຊື້: ມາຈາກ ພໍ່ຄ້າຕະຫຼາດນາໝໍ້
3. ພໍ່ຄ້າຕະຫຼາດນາໝໍ້ຊື້ ມາຈາກພໍ່ຄ້າເມືອງໄຊ
4. ພໍ່ຄ້າເມືອງໄຊ ຊື້ມາຈາກພໍ່ຄ້າບໍ່ເຕນ
5. ວັກຊິນຊື້ມາຈາກ ສັດຕະວະແພດບ້ານ
6. ສັດຕະວະແພດບ້ານຊື້ມາຈາກກ/ກເມືອງ
7. ກ/ກເມືອງຊື້ມາຈາກກ/ກແຂວງ
8. ກ/ກແຂວງຊື້ມາຈາກກົມລ້ຽງສັດ




4.2.3.6. <u>ການລ້ຽງສັດປີກຂອງຄອບຄົວບໍ່ກຸ້ມກິນ</u>

➢ ຄອບຄົວບໍ່ກຸ້ມກິນບໍ່ສາມາດເຂົ້າເຖິງແຫຼ່ງຂໍ້ມູນຂ່າວສານໄດ້ໂດຍກົງ, ຊາວກະສິກອນບໍ່ກຸ້ມກິນມັກຈະຂໍຄໍາປຶກສາຫາລືກັບຊາວກະສິກອນທີ່ເກັ່ງກວ່າເວລາທີ່ເຂົາເຈົ້າພົບບັນຫາກ່ຽວກັບ ການລະບາດຂອງພະຍາດສັດ. ຊາວກະສິກອນນໍາໃຊ້ເຕັກນິກວິທີການລ້ຽງຈາກພີ່ນ້ອງ, ແບບພື້ນ ບ້ານ, ປອດສານເຄມີ, ມີການນໍາໃຊ້ຫົວອາຫານໃນການລ້ຽງເປັດ-ໄກ່ ສ່ວນອາຫານປະເພດຮໍາ, ເຂົ້າປຽນ ແລະ ສາລີຂອງຕົນເອງ. ຕ່ອງໂສ້ປັດໃຈນໍາເຂົ້າມີລັກສະນະແກ່ຍາວໄປຮອດຊາຍແດນລະຫວ່າງປະເທດໂດຍສະເພາະແມ່ນຫົວອາຫານ. ສໍາລັບແຫຼ່ງທີ່ມາຂອງສິ່ງນໍາເຂົ້າໃນການຜະລິດແມ່ນຂຶ້ນກັບຫຼາຍພາກສ່ວນ ດັ່ງຕ່ອງໂສ້ລຸ່ມນີ້:




**ແຜນວາດ 27: ກິດຈະກໍາການລ້ຽງສັດປີກຂອງຄອບຄົວບໍ່ກຸ້ມກິນ** ງເຫດ




<u>ໝາຍເຫດ</u>

1. ແນວພັນບໍ່ໄດ້ຊື້ພີ່ນ້ອງເອົາໃຫ້ ແລະ ໃຊ້ເຕັກນິກທີ່ເຄີຍເຮັດມາ.
2. ຫົວອາຫານເປັດນ້ອຍຊື້ມາຈາກແມ່ຄ້າຕະຫຼາດນາໝໍ້.
3. ຕະຫຼາດນາໝໍ້ຊື້ມາຈາກພໍ່ຄົນຈີນ.

**ເຂົ້າທັງພາຍໃນ ແລະ ຕ່າງປະເທດ**

ໝາຍເຖິງໄດ້ຊື້ເປັນເງິນສົດ
ໝາຍເຖິງເສັ້ນແບ່ງເຂດ

**<u>ສິ່ງນໍາເຂົ້າທີ່ມາຈາກພາຍໃນ</u>**

ຂົ້າທີ່ມາຈາກພາຍໃນມີຄື: ພ້າ, ສຽມ, ແວກ, ກ່ຽວ, ແນວພັນ (ເຂົ້າ, ຂ່າ, ຢາງພາລາ, ສັດ) ແລະ ອາຫານສັດ.

4.1.2. **<u>ສິ່ງນໍາເຂົ້າທີ່ມາຈາກຕ່າງປະເທດ</u>**

ສິ່ງນໍາເຂົ້າທີ່ມາຈາກຕ່າງປະເທດເຊັ່ນ: ລົດໄຖ, ນໍ້າມັນກາຊວນ, ຢາຂ້າຫຍ້າ, ແນວພັນສາລີ, ຈົກ, ຊວ້ານ.

## 4.4. ສັງລວມຫຍໍ້ຄວາມແຕກຕ່າງຜົນໄດ້ຮັບຈາກການສໍາພາດຕົວຈິງ

### 4.4.1. ການສົມທຽບຄວາມແຕກຕ່າງປັດໃຈນຳເຂົ້າລະດັບຄົວເຮືອນ

ຈາກການສຳພາດຊາວກະສິກອນທັງ 3 ປະເພດຄອບຄົວຄື: ເຫຼືອກິນ, ກຸ້ມກິນ, ບໍ່ກຸ້ມກິນ ສັງເກດເຫັນປັດໃຈນຳເຂົ້າໃນການຜະລິດກະສິກຳລະດັບຄົວເຮືອນເຊັ່ນ: ດິນ/ນ້ຳ, ສິນເຊື່ອ, ອຸປະກອນ ແລະ ແຮງງານມີຄວາມແຕກຕ່າງກັນດັ່ງຕາຕະລາງລຸ່ມນີ້:

**ຕາຕະລາງ 1: ການສົມທຽບຄວາມແຕກຕ່າງປັດໃຈນຳເຂົ້າລະດັບຄົວເຮືອນ**

| ລ/ດ | ປັດໃຈນຳເຂົ້າ | ເຫຼືອກິນ | ກຸ້ມກິນ | ບໍ່ກຸ້ມກິນ |
|---|---|---|---|---|
| 1 | ດິນ | -ລັດແບ່ງປັນໃຫ້<br>-ຊື້ດ້ວຍເງິນສົດ | -ສັບສ່ວ<br>-ຊື້ດ້ວຍເງິນສົດ | -ສືບມູນ<br>-ສັບສ່ວ |
| | ນ້ຳ | -ຊົນລະປະທານ<br>-ທຳມະຊາດ | -ຊົນລະປະທານ<br>-ທຳມະຊາດ | -ທຳມະຊາດ |
| 2 | ສິນເຊື່ອ | -ທຶນຕົນເອງ | - ກອງທຶນບ້ານ<br>- ທະນາຄານນະໂຍບາຍ | -ກອງທຶນບ້ານ<br>-ພີ່ນ້ອງ |
| 3 | ອຸປະກອນ | -ຊື້ດ້ວຍເງິນສົດທຸກຊະນິດເຊັ່ນ: ລົດໄຖ ຈົກ; ພ້າ; ຊວ້ານ; ສຽມ; ກ່ຽວ; ແວກ ແລະ ຂວານ. | -ຊື້ດ້ວຍເງິນສົດມີ: ລົດໄຖ; ຈົກ; ຊວ້ານ; ສຽມ; ກ່ຽວ ແລະ ຂວານ ຍົກເວັ້ນ ພ້າ ແລະ ແວກ ແມ່ນຜະລິດເອົາເອງ. | -ຈົກ ແລະ ຊວ້ານ ແມ່ນ ຊື້ດ້ວຍເງິນສົດ<br>- ພ້າ; ແວກ ແລະ ກ່ຽວແມ່ນຜະລິດເອົາເອງ |
| 4 | ແຮງງານ | - ຄອບຄົວ<br>- ແລກປ່ຽນ<br>- ຈ້າງ | - ຄອບຄົວ<br>- ແລກປ່ຽນ<br>- ຈ້າງ | - ຄອບຄົວ<br>- ແລກປ່ຽນ |

ຈາກການເບິ່ງຕາຕະລາງລະດັບຄອບຄົວເຮືອນຂ້າງເທິງນີ້ສາມາດສະຫຼຸບໄດ້ດັ່ງລຸ່ມນີ້:

4.4.1.1. ປັດໃຈນຳເຂົ້າຂອງດິນ/ນ້ຳ

ຊາວກະສິກອນນຳໃຊ້ດິນເຂົ້າໃນການຜະລິດທັງ 3 ລະດັບຄອບຄົວນີ້ມີຄວາມແຕກຕ່າງກັນ. ສຳລັບຄອບຄົວເຫຼືອກິນໄດ້ດິນມາຈາກ 2 ແຫຼ່ງ: ດິນລັດແບ່ງປັນໃຫ້ ແລະ ຊື້ດ້ວຍເງິນສົດເພື່ອທຳການຜະລິດປູກພືດ ແລະ ລ້ຽງສັດສ່ວນຄອບຄົວກຸ້ມກິນແມ່ນນຳໃຊ້ດິນທີ່ສັບສ່າວເອົາເອງ, ຊື້ດິນຈຳນວນໜ້ອຍເພື່ອທຳການຜະລິດທຸກກິດຈະກຳ. ນອກຈາກນັ້ນຄອບຄົວບໍ່ກຸ້ມກິນໄດ້ດິນມາຈາກພໍ່ແມ່ແບ່ງປັນໃຫ້ມີພຽງຈຳນວນໜຶ່ງທີ່ສັບສ່າວເອົາ ໃນນັ້ນການນຳໃຊ້ນ້ຳຄອບຄົວເຫຼືອກິນ ແລະ ກຸ້ມກິນບໍ່ມີຄວາມແຕກຕ່າງກັນເພາະວ່າທັງ 2 ຄອບຄົວນີ້ແມ່ນນຳໃຊ້ນ້ຳຊົນລະປະທານ ແລະ ອາໃສນ້ຳຕາມທຳມະຊາດໂດຍອີງໃສ່ນ້ຳຝົນ, ນ້ຳຫ້ວຍ ແຕ່ວ່າຄອບຄົວບໍ່ກຸ້ມກິນອາໃສແຕ່ນ້ຳຈາກທຳມະຊາດເທົ່ານັ້ນອາດເຮັດໃຫ້ປູກພືດບໍ່ທັນຕາມລະດູການອາດເຮັດໃຫ້ບໍ່ໄດ້ຮັບຜົນຜະລິດດີ.

4.4.1.2. <u>ປັດໃຈນຳເຂົ້າຂອງສິນເຊື່ອ</u>

ການນຳໃຊ້ສິນເຊື່ອເຂົ້າໃນການຜະລິດກະສິກຳທັງ 3 ລະດັບຄອບຄົວນີ້ມີຄວາມແຕກຕ່າງກັນຊາວກະສິກອນຄອບຄົວເຫຼືອກິນໄດ້ໃຊ້ເງິນທີ່ຕົນເອງສະສົມມານັ້ນເພື່ອໃຫ້ໄດ້ສິ່ງນຳເຂົ້າມາເຮັດກິດຈະກຳຕ່າງໆ. ສຳລັບຄອບຄົວກຸ້ມກິນອາດຈະບໍ່ມີເງິນພຽງພໍຈຳເປັນຕ້ອງໄດ້ກູ້ຢືມເງິນຈາກກອງທຶນບ້ານອັດຕາດອກເບ້ຍ 8%/ປີ ແລະ ຍັງກູ້ຢືມເງິນມາຈາກທະນາຄານນະໂຍບາຍດ້ວຍດອກເບ້ຍ7%/ປີ. ສ່ວນຄອບຄົວບໍ່ກຸ້ມກິນບໍ່ມີເງິນຈຳເປັນຕ້ອງໄດ້ຢືມເງິນຈາກພີ່ນ້ອງ ແລະ ກອງທຶນບ້ານແຕ່ກໍ່ຍັງມີຂໍ້ຈຳກັດບໍ່ສາມາດຢືມເງິນຈຳນວນຫຼາຍໄດ້ ຍ້ອນວ່າບໍ່ມີອັນຄ້ຳປະກັນ.

4.4.1.3. <u>ປັດໃຈນຳເຂົ້າຂອງອຸປະກອນ</u>

ສຳລັບຄອບຄົວເຫຼືອກິນໝົດທຸກຄອບຄົວແມ່ນນຳໃຊ້ອຸປະກອນທີ່ຊື້ດ້ວຍເງິນສົດເປັນຕົ້ນແມ່ນລົດໄຖນາ; ຈົກ; ພ້າ; ຊວ້ານ; ສຽມ; ກ່ຽວ; ແວກ ແລະ ຂວານເພື່ອມາຮັບໃຊ້ໃນທຸກໆກິດຈະກຳ ຊຶ່ງຄອບຄົວກຸ້ມກິນແມ່ນນຳໃຊ້ອຸປະກອນທີ່ຕີເອົາເອງ ຫຼື ຜະລິດເອງເຊັ່ນ: ພ້າ ແລະ ແວກ. ນອກຈາກນີ້ຄອບຄົວບໍ່ກຸ້ມກິນໄດ້ຊື້ອຸປະກອນມີແຕ່ຈົກ ແລະ ຊວ້ານຍົກເວັ້ນພ້າ; ແວກ; ກ່ຽວຜະລິດເອງ.

4.4.1.4. <u>ປັດໃຈນຳເຂົ້າຂອງແຮງງານ</u>

ສ່ວນການນຳໃຊ້ແຮງງານແລ້ວມີລັກສະນະຄ້າຍຄືກັນຄອບຄົວເຫຼືອກິນ ແລະ ກຸ້ມກິນແມ່ນນຳໃຊ້ແຮງງານພາຍໃນຄອບຄົວ, ແຮງງານແລກປ່ຽນ ແລະ ແຮງງານຈ້າງແຮງງານ. ສຳລັບຄອບຄົວບໍ່ກຸ້ມກິນແມ່ນໃຊ້ແຮງງານຄອບຄົວ ແລະ ແລກປ່ຽນເລັກໜ້ອຍ.

**4.4.2. <u>ການສົມທຽບຄວາມແຕກຕ່າງສິ່ງນຳເຂົ້າການຜະລິດແຕ່ລະກິດຈະກຳ</u>**

ການຜະລິດກະສິກຳຂອງຊາວກະສິກອນແມ່ນໄດ້ນຳໃຊ້ສິ່ງນຳເຂົ້າຄື:ແຫຼ່ງຂໍ້ມູນຂ່າວສານ, ສິ່ງນຳເຂົ້າທີ່ເປັນເຄມີ, ການບໍລິການ ແລະ ສິ່ງນຳເຂົ້າທີ່ບໍ່ເປັນເຄມີແມ່ນມີຄວາມແຕກຕ່າງກັນ ດັ່ງຕາຕະລາງລຸ່ມນີ້:

**ຕາຕະລາງ 2: ການສົມທຽບຄວາມແຕກຕ່າງສິ່ງນຳເຂົ້າການຜະລິດແຕ່ລະກິດຈະກຳ**

| ລ/ດ | ສິ່ງນຳເຂົ້າ | ເຫຼືອກິນ | ກຸ້ມກິນ | ບໍ່ກຸ້ມກິນ |
|---|---|---|---|---|

| | | | | |
|---|---|---|---|---|
| 1 | ແຫຼ່ງຂໍ້ມູນຂ່າວສານ | - ພືດ: ເຄີຍປູກມາ<br>- ສັດ: ກະສິກ□າເມືອງ | - ພືດ: ເຄີຍປູກມາ ແລະ ເພື່ອນບ້ານ<br>- ສັດ: ສັດຕະວະແພດບ້ານ | - ພືດ: ພີ່ນ້ອງ<br>- ສັດ: ພີ່ນ້ອງ ແລະ ສັດຕະວະແພດບ້ານ |
| 2 | ສິ່ງນໍາເຂົ້າທີ່ເປັນເຄມີ | - ພືດ: ນ□າມັນກາຊວນ ແລະ ຢາຂ້າຫຍ້າ<br>- ສັດ: ວັກຊີນ ແລະ ເກືອ | - ພືດ:ນໍ້າມັນກາຊວນ ແລະ ຢາຂ້າຫຍ້າ<br>- ສັດ: ວັກຊີນ ແລະ ເກືອ | -ພືດ: ຢາຂ້າຫຍ້າ<br>-ສັດ: ວັກຊີນ ແລະ ເກືອ |
| 3 | ການບໍລິການ | -ຈ້າງລົດຂົນສາລີ<br>-ແກະສາລີ | - ຈ້າງໄຖ-ຄາດ; ຈ້າງເສຍຫຍ້າ ແລະ ຈ້າງເກັບກູ້ສາລີ.<br>-ຈ້າງສັດຕະວະແພດບ້ານສັກວັກຊີນໃຫ້. | -ຈ້າງໄຖ<br>-ຄາດນາ<br>-ຈ້າງສັດຕະວະແພດບ້ານສັກວັກຊີນໃຫ້. |
| 4 | ສິ່ງນໍາເຂົ້າທີ່ບໍ່ເປັນເຄມີ | -ຊື້ດ້ວຍເງິນສົດມີ: ແນວພັນເຂົ້າ; ສາລີ; ຢາງພາລາ ແລະ ເຊືອກ ຍົກເວັ້ນລ້ຽງສັດແມ່ນນໍາໃຊ້ອາຫານຢູ່ໃນເຮືອນລ້ຽງ. | -ຊື້ດ້ວຍເງິນສົດມີ: ແນວພັນສາລີ; ຢາງພາລາ; ຂ່າ; ງົວ; ໝູເຊືອກ ແລະ ຫົວອາຫານ<br>-ແນວພັນໝາກໜອດ ບໍລິສັດຈີນສະໜອງໃຫ້ | -ຊື້ດ້ວຍເງິນສົດມີ:ແນວພັນສາລີ; ເຊືອກ ແລະ ຫົວອາຫານ.<br>-ສ່ວນແນວພັນໝາກໜອດ ບໍລິສັດຈີນສະໜອງໃຫ້ |

ຈາກການເບິ່ງຕາຕະລາງກິດຈະກໍາຂ້າງເທິງນີ້ສາມາດສັງລວມໄດ້ດັ່ງລຸ່ມນີ້:

4.4.2.1. <u>ແຫຼ່ງຂໍ້ມູນຂ່າວສານ</u>

ຈາກການສໍາພາດຕົວຈິງທັງ 3 ລະດັບຄອບຄົວໄດ້ຮັບຂໍ້ມູນຂ່າວສານແຕກຕ່າງກັນສໍາລັບຄອບຄົວເຫຼືອກິນປູກພືດແມ່ນບໍ່ໄດ້ຮັບຂໍ້ມູນຂ່າວສານພາຍນອກນໍາໃຊ້ເຕັກນິກທີ່ເຄີຍເຮັດມາແບບພື້ນບ້ານປູກຕາມທໍາມະຊາດ ແລະ ລ້ຽງສັດໄດ້ຮັບການຝຶກອົບຮົບຈາກກະສິກໍາເມືອງໃນການນໍາໃຊ້ຢາປ້ອງກັນ. ສໍາລັບຄອບຄົວກຸ້ມກິນ , ບໍ່ກຸ້ມກິນໄດ້ຮັບຄໍາແນະນໍາຈາກສັດຕະວະແພດບ້ານ ແລະ ພີ່ນ້ອງແນະນໍາໃຫ້.

4.4.2.2. <u>ສິ່ງນໍາເຂົ້າທີ່ເປັນເຄມີ</u>

ການນຳໃຊ້ສິ່ງນຳເຂົ້າທີ່ເປັນເຄມີ, ມີລັກສະນະຄ້າຍຄືກັນສຳລັບການປູກພືດ ແລະ ລ້ຽງສັດຂອງຄອບຄົວເຫຼືອກິນ ແລະ ກຸ້ມກິນ ເພາະວ່າຊາວກະສິກອນໄດ້ນຳໃຊ້ນ້ຳມັນກາຊວນ, ຢາຂ້າຫຍ້າ, ວັກຊິນ ແລະ ເກືອ ນອກຈາກນັ້ນຄອບຄົວບໍ່ກຸ້ມກິນນຳໃຊ້ແຕ່ຢາຂ້າຫຍ້າເທົ່ານັ້ນ.

4.3.3.3. ການບໍລິການ

ຊາວກະສິກອນນຳໃຊ້ການບໍລິການທີ່ມີຄວາມແຕກຕ່າງກັນຄື: ຄອບຄົວເຫຼືອກິນໄດ້ຈ້າງຊາວບ້ານຢູ່ບ້ານດຽວກັນຂົນສາລີ ແລະ ແກະສາລີ. ການນຳໃຊ້ການບໍລິການຂອງຄອບຄົວກຸ້ມກິນ ຈ້າງຊາວກະສິກອນໄຖ-ຄາດນາ; ເສຍຫຍ້າສວນສາລີ; ເກັບກູ້ຜົນຜະລິດສາລີ ແລະ ຈ້າງສັດຕະວະແພດບ້ານມາສັກວັກຊິນໃຫ້. ສຳລັບຄອບຄົວບໍ່ກຸ້ມກິນຈ້າງໄຖ-ຄາດນາ ແລະ ຈ້າງສັດຕະວະແພດບ້ານມາສັກວັກຊິນໃຫ້ເທົ່ານັ້ນ.

4.3.3.4. ສິ່ງນຳເຂົ້າທີ່ບໍ່ເປັນເຄມີ

ຈາກຂໍ້ມູນມາຈາກຂ້າງເທິງນີ້ທັງ 3 ລະດັບຄອບຄົວມີຄວາມແຕກຕ່າງກັນເຊັ່ນ: ຄອບຄົວເຫຼືອກິນນຳໃຊ້ແນວພັນເຂົ້າ; ສາລີ; ຢາງພາລາ; ເຊືອກທີ່ຊື້ດ້ວຍເງິນສົດຍົກເວັ້ນອາຫານສັດແມ່ນຊອກຫາຕາມທຳມະຊາດ ແລະ ມີຢູ່ໃນເຮືອນ. ສ່ວນຄອບຄົວກຸ້ມກິນແມ່ນນຳໃຊ້ແນວພັນຂ່າ; ແນວພັນງົວ; ແນວພັນໝູ ແລະ ຫົວອາຫານສັດປີກ (ຊື້ດ້ວຍເງິນສົດ) ແຕ່ວ່າຄອບຄົວບໍ່ກຸ້ມກິນແມ່ນນຳໃຊ້ແນວພັນໝາກໝອດທີ່ບໍລິສັດຄືນຈີນມາສະໜອງໃຫ້ພ້ອມທັງເກັບຊື້ຜົນຜະລິດອີກດ້ວຍ.

# V. ວິຈານ

# (Discussion)

ອີງໃສ່ຜົນໄດ້ຮັບຈາກການສຳພາດ ແລະ ເກັບກຳຂໍ້ມູນຕົວຈິງຈາກຊາວກະສິກອນ 2 ບ້ານຈຳນວນ 12 ຄອບຄົວ, 3 ລະດັບຄອບຄົວຄື: ຄອບຄົວເຫຼືອກິນ 4 ຄອບຄົວ, ຄອບຄົວກຸ້ມກິນ 4 ຄອບຄົວ ແລະ ຄອບຄົວບໍ່ກຸ້ມກິນ 4 ຄອບຄົວ, ໃນແຕ່ລະຕ່ອງໂສ້ແຫຼ່ງທີ່ມາຂອງປັດໃຈນຳເຂົ້າການຜະລິດກະສິກຳຢູ່ເມືອງນາໝໍ້ ແຂວງອຸດົມໄຊ ສາມາດວິເຄາະ ແລະ ຕີລາຄາໄດ້ດັ່ງນີ້: ສາມາດຮູ້ໄດ້ວ່າຊາວກະສິກອນທັງ 3 ລະດັບຄອບຄົວຢູ່ໃນເຂດທີ່ລົງສຶກສານັ້ນເຂົາເຈົ້າໄດ້ມີກິດຈະກຳການຜະລິດຄ້າຍຄືກັນທັງສອງບ້ານຄື: ກິດຈະກຳການປູກເຂົ້ານາປີ, ປູກເຂົ້າໄຮ່, ປູກສາລີ, ປູກໝາກໜອດ, ຢາງພາລາ, ປູກຂ່າ, ລ້ຽງງົວ, ຄວາຍ, ໝູ ແລະ ສັດປີກ ແຕ່ລະກິດຈະກຳຂອງ ຊາວກະສິກອນຜະລິດນັ້ນແມ່ນ ມີການນຳໃຊ້ປັດໃຈນຳເຂົ້າທີ່ບໍ່ຄືກັນເຊັ່ນ: ຄອບຄົວເຫຼືອກິນ, ຄອບຄົວກຸ້ມກິນແມ່ນເຂົ້າຫາແຫຼ່ງປັດໃຈນຳເຂົ້າໄດ້ຫຼາຍ ເພາະວ່າທັງສອງລະດັບຄອບຄົວນີ້ໄດ້ຊື້ອຸປະກອນຕ່າງໆເຂົ້າໃນການຜະລິດໂດຍສະເພາະແມ່ນລົດໄຖ, ເກືອ, ເຊືອກ, ຫົວອາຫານໄກ່ນ້ອຍ-ເປັດນ້ອຍ ແຕ່ຄອບຄົວບໍ່ກຸ້ມກິນແມ່ນບໍ່ໄດ້ຊື້. ຈາກການສຳພາດຄອບຄົວຊາວກະສິກອນ ໃນການເຂົ້າຫາປັດໃຈນຳເຂົ້າທີ່ເປັນດິນທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດຂອງຄອບຄົວ ເຫຼືອກິນ, ຄອບຄົວກຸ້ມກິນແມ່ນໄດ້ມາຈາກການຊື້, ດິນສືບມູນ, ດິນລັດແບ່ງປັນໃຫ້ ແຕ່ຄອບຄົວບໍ່ກຸ້ມກິນແມ່ນໄດ້ມາຈາກການແບ່ງປັນຂອງລັດ, ສັບສ່າວເອງ. ນ້ຳທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດສ່ວນຫຼາຍແມ່ນອາໃສນ້ຳຈາກທຳມະຊາດ ແລະ ມີບາງຄອບຄົວທີ່ໄດ້ນຳໃຊ້ນ້ຳຊົນລະປະທານເຂົ້າໃນການຜະລິດເຂົ້ານາປີ ສະນັ້ນຈຶ່ງເຮັດໃຫ້ຊາວກະສິກອນມີຄວາມຫຍຸ້ງຍາກໃນການຜະລິດພືດໃນລະດູແລ້ງ. ປັດໃຈນຳເຂົ້າທີ່ເປັນສິນເຊື່ອຊາວກະສິກອນນຳໃຊ້ເຂົ້າໃນການປູກພືດ ແລະ ລ້ຽງສັດ, ເຂົາ ເຈົ້າໄດ້ກູ້ຢືມເງິນຈາກທະນາຄານນະໂຍບາຍ ແລະ ກອງທຶນບ້ານແຕ່ຊາວກະສິກອນຄອບຄົວບໍ່ກຸ້ມກິນນັ້ນແມ່ນຍັງບໍ່ສາມາດກູ້ຢືມເງິນຈາກທະນາຄານນະໂຍບາຍໄດ້ ເພາະວ່າເຂົາເຈົ້າບໍ່ມີສິ່ງຄ້ຳປະກັນໃນການກູ້ຢືມຄືກັນກັບຄອບຄົວເຫຼືອກິນ, ຄອບຄົວກຸ້ມກິນມີແຕ່ໄດ້ກູ້ຢືມຈາກກອງທຶນບ້ານ ແລະ ພີ່ນ້ອງ. ສ່ວນທາງດ້ານອຸປະກອນຕ່າງໆທີ່ນຳໃຊ້ເຂົ້າໃນການຜະລິດຄອບຄົວບໍ່ກຸ້ມກິນແມ່ນບໍ່ໄດ້ຊື້ເພາະບໍ່

ມີທຶນທີ່ຈະຊື້ມີພຽງແຕ່ໄດ້ມາຈາກການແບ່ງປັນຂອງລັດ ແລະ ຕົເອົາເອງ. ສ່ວນແຮງງານທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດຂອງຄອບຄົວເຫຼືອກິນ, ກຸ້ມກິນແມ່ນມີແຮງງານພາຍໃນຄອບຄົວ, ແຮງງານແລກປ່ຽນ ແລະ ແຮງງານຈ້າງ ແຕ່ສຳລັບຄອບຄົວບໍ່ກຸ້ມກິນແມ່ນໄດ້ນຳໃຊ້ແຮງງານພາຍໃນຄອບຄົວເທົ່ານັ້ນ. ດ້ານແຫຼ່ງຂໍ້ມູນຂ່າວສານ ແລະ ເຕັກນິກວິທີການຕ່າງໆໃນການປູກພືດ ແລະ ການລ້ຽງສັດຂອງທັງ 3 ລະດັບຄອບຄົວນັ້ນແມ່ນໄດ້ມາຈາກກະສິກຳເມືອງ, ສັດຕະວະແພດບ້ານ ແລະ ເພື່ອນບ້ານໃກ້ຄຽງ.

ໃນການເຂົ້າເຖິງປັດໃຈນຳເຂົ້າການຜະລິດກະສິກຳຂອງທັງ 3 ລະດັບຄອບຄົວເຫັນໄດ້ວ່າຄອບຄົວບໍ່ກຸ້ມກິນແມ່ນ ຍັງບໍ່ສາມາດເຂົ້າຫາປັດໃຈນຳເຂົ້າທີ່ເປັນສິນເຊື່ອໄດ້ຫຼາຍຄືກັນກັບຄອບຄົວເຫຼືອກິນ, ຄອບຄົວກຸ້ມກິນ ເພາະວ່າເຂົ້າເຈົ້າມີຂໍ້ຈຳກັດໃນການເຂົ້າຫາສິນເຊື່ອ ຈຶ່ງເຮັດໃຫ້ຊາວກະສິກອນຄອບຄົວບໍ່ກຸ້ມກິນມີຄວາມຫຍຸ້ງຍາກທາງດ້ານທຶນຮອນທີ່ຈະຊື້ປັດໃຈນຳເຂົ້າໃນການຜະລິດ ສະນັ້ນຄວນຈະມີການເປີດກ້ວາງໃນການກູ້ຢືມສິນເຊື່ອ ເພື່ອໃຫ້ຊາວກະສິກອນຄອບຄົວບໍ່ກຸ້ມກິນສາມາດເຂົ້າເຖິງແຫຼ່ງປັດໃຈນຳເຂົ້າໄດ້ຫຼາຍຂື້ນ ແລະ ຊ່ວຍໃຫ້ເຂົ້າເຈົ້າມີຊີວິການເປັນຢູ່ດີຂື້ກ່າວເກົ່າ.

# VI.ສະຫຼຸບ

# (Conclusion)

ຜ່ານການລົງສຶກສາຕ່ອງໂສ້ປັດໃຈນຳເຂົ້າໃນການຜະລິດຂອງຊາວກະສິກອນໃນເຂດບ້ານປາງສາ ແລະ ບ້ານປາງນ້ຳຕອງ ເມືອງນາໝໍ້ ແຂວງອຸດົມໄຊໃນໄລຍະ 5 ເດືອນ ຊຶ່ງເລີ່ມແຕ່4/04/2009-31/08/2009 ໂດຍອີງຕາມ 3 ຈຸດປະສົງຄື:ສຶກສາຕ່ອງໂສ້ປັດໃຈນຳເຂົ້າການຜະລິດຂອງຊາວກະສິກອນ, ສຶກສາປັດໃຈສິ່ງນຳເຂົ້າບັນດາກິດຈະກຳທາງການກະສິກຳຕ່າງໆທີ່ຊາວກະສິກອນປະຕິບັດ, ສົມທຽບຄວາມແຕກຕ່າງປັດໃຈນຳເຂົ້າໃນລະດັບຄອບຄົວ ແລະ ລະດັບກິດຈະກຳຂອງຄອບຄົວເຫຼືອກິນ, ກຸ້ມກິນ ແລະ ບໍ່ກຸ້ມກິນ. ໃນການລົງສຳພາດຄັ້ງນີ້ແມ່ນໄດ້ຄັດເລືອກເອົາຄອບຄົວເຫຼືອກິນ 4 ຄອບຄົວ, ຄອບຄົວກຸ້ມກິນ 4 ຄອບຄົວ ແລະ ຄອບຄົວບໍ່ກຸ້ມກິນ 4 ຄອບຄົວ, ໄດ້ສຳພາດເພດຊາຍ 6 ຄອບຄົວ, ເພດຍິງ 6 ຄອບຄົວ ສາມາດສະຫຼຸບໄດ້ດັ່ງນີ້:

ປັດໃຈນຳເຂົ້າໃນການຜະລິດຂອງຊາວກະສິກອນເຊັ່ນ: ດິນ/ນ້ຳ, ສິນເຊື່ອ, ອຸປະກອນ ແລະ ແຮງງານ. ຄອບຄົວເຫຼືອກິນ ແລະ ຄອບຄົວກຸ້ມກິນ ໄດ້ດິນມາຈາກ 2 ແຫຼ່ງຄື: ໄດ້ມາຈາກລັດແບ່ງປັນໃຫ້, ສັບສ່າວເອົາເອງ, ສືບມູນ, ໄດ້ມາຈາກການຊື້ດ້ວຍເງິນສົດ ຊຶ່ງການຊື້ດິນຂອງເຂົາເຈົ້າແມ່ນຊື້ມາຈາກຊາວກະສິກອນຢູ່ບ້ານດຽວກັນ. ສິນເຊື່ອສ່ວນຫຼາຍເຂົາເຈົ້ານຳໃຊ້ທຶນຕົນເອງທີ່ສະສົມໄວ້, ມີບາງຄອບຄົວຢືມເງິນຈາກກອງທຶນບ້ານ ແລະ ທະນາຄານນະໂຍບາຍ. ນຳໃຊ້ແຮງງານພາຍໃນຄອບຄົວ, ແຮງງານແລກປ່ຽນ ແລະ ແຮງງານຈ້າງຈາກພີ່ນ້ອງຢູ່ບ້ານດຽວກັນ ດັ່ງນັ້ນຈິ່ງເຮັດໃຫ້ຕ່ອງໂສ້ຂອງດິນ, ສິນເຊື່ອ ແລະ ແຮງງານມີລັກສະນະສັ້ນ. ອຸປະກອນການຜະລິດ (ລົດໄຖ, ຈົກ, ພ້າ, ຊວ້ານ...) ຂອງເຂົາເຈົ້າແມ່ນໄດ້ມາຈາກການຊື້ດ້ວຍເງິນສົດ ໂດຍນຳເຂົ້າຈາກຕ່າງປະເທດ ແລະ ຕ່າງແຂວງ ເພາະສະນັ້ນຕ່ອງໂສ້ອຸປະກອນຈິ່ງມີລັກສະນະຍາວ. ຄອບຄົວບໍ່ກຸ້ມກິນແມ່ນໄດ້ດິນມາຈາກພີ່ນ້ອງແບ່ງປັນໃຫ້, ສັບສ່າວເອົາ, ສືບມູນ, ນຳໃຊ້ສິນເຊື່ອທີ່ຢືມຈາກກອງທຶນບ້ານ ແລະ ພີ່ນ້ອງ. ອຸປະກອນ (ພ້າ, ຈົກ, ແວກ, ກ່ຽວ) ສ່ວນຫຼາຍຜະລິດເອົາເອງ ແລະ ພີ່ນ້ອງແບ່ງປັນໃຫ້; ນຳໃຊ້ແຮງງານພາຍໃນຄອບຄົວ ດັ່ງນັ້ນຕ່ອງໂສ້ປັດໃຈນຳເຂົ້າໃນການຜະລິດຂອງຄອບຄົວບໍ່ກຸ້ມກິນຈິ່ງມີລັກສະນະສັ້ນ.

ກິດຈະກຳທີ່ຊາວກະສິກອນປະຕິບັດມີຄື: ປູກເຂົ້ານາປີ, ປູກເຂົ້າໄຮ່, ປູກສາລີ, ປູກໝາກໜອດ, ປູກຂ່າ, ປູກຢາງພາລາ, ລ້ຽງຄວາຍ, ລ້ຽງງົວ, ລ້ຽງໝູ ແລະ ລ້ຽງສັດປີກ. ຄອບຄົວເຫຼືອກິນ ແລະ ກຸ້ມກິນທີ່ຖືກສຳພາດ ສ່ວນຫຼາຍແມ່ນໄດ້ຮັບຂໍ້ມູນກ່ຽວກັບເຕັກນິກ ວິທີການລ້ຽງສັດຈາກກະສິກຳເມືອງໂດຍກົງ, ການປູກພືດແມ່ນນຳໃຊ້ເຕັກນິກທີ່ເຄີຍມາ. ເຂົາເຈົ້າໄດ້ນຳໃຊ້ສິ່ງນຳເຂົ້າທີ່ເປັນເຄມີ (ນ້ຳມັນກາຊວນ, ວັກຊີນ ແລະ ເກືອ), ນຳໃຊ້ການບໍລິການ ໂດຍຈ້າງແຮງງານພີ່ນ້ອງ; ນຳໃຊ້ສິ່ງນຳເຂົ້າທີ່ບໍ່ເປັນເຄມີ (ແນວພັນພືດ-ສັດ, ອາຫານສັດ ແລະ ເຊືອກ) ເຂົ້າໃນການການປູກພືດ-ລ້ຽງສັດຂອງເຂົາເຈົ້າ. ຄອບຄົວບໍ່ກຸ້ມກິນທີ່ຖືກສຳພາດ ສ່ວນຫຼາຍໄດ້ຮັບຂໍ້ມູນຂ່າວສານກ່ຽວກັບວິທີການປູກພືດ-ລ້ຽງສັດຈາກສັດຕະວະແພດບ້ານ ແລະ ພີ່ນ້ອງແນະນຳໃຫ້; ສ່ວນຫຼາຍເຂົາເຈົ້າບໍ່ໄດ້ນຳໃຊ້ສິ່ງນຳເຂົ້າທີ່ເປັນເຄມີ, ມີບາງຄອບຄົວເທົ່ານັ້ນທີ່ໄດ້ນຳໃຊ້ວັກຊີນເຂົ້າໃນການລ້ຽງສັດ ແລະ ໄດ້ນຳໃຊ້ການບໍລິການ ໂດຍຈ້າງສັດຕະວະແພດບ້ານສັກວັກຊີນໃຫ້ສັດຂອງເຂົາເຈົ້າ; ສິ່ງນຳເຂົ້າທີ່ບໍ່ເປັນເຄມີ ສ່ວນຫຼາຍເຂົາເຈົ້ານຳໃຊ້ແນວພັນພື້ນບ້ານ ຊຶ່ງໄດ້ຮັບຈາກພີ່ນ້ອງ ແລະ ເກັບຮັກສາໄວ້ເອງ.

ທັງ 3 ປະເພດຄອບຄົວ ແມ່ນເຂົ້າເຖິງປັດໃຈນຳເຂົ້າ ແລະ ສິ່ງນຳເຂົ້າໃນການຜະລິດກະສິກຳທີ່ແຕກຕ່າງກັນ ຍ້ອນວ່າຄອບຄົວເຫຼືອກິນ ແລະ ຄອບຄົວກຸ້ມກິນມີເງື່ອນໄຂການຜະລິດທີ່ດີກວ່າຄອບຄົວບໍ່ກຸ້ມກິນ ຊຶ່ງຄອບຄົວເຫຼືອກິນ,ກຸ້ມກິນເຂົາເຈົ້າສາມາດກູ້ຢືມສິນເຊື່ອໄດ້ຫຼາຍກວ່າເພາະເຂົາເຈົ້າມີສິ່ງຄ້ຳປະກັນໃນການກູ້ຢືມສິນເຊື່ອ, ສ່ວນຄອບຄົວບໍ່ກຸ້ມກິນແມ່ນບໍ່ມີສິ່ງຄ້ຳປະກັນໃນ ການກູ້ຢືມສິນເຊື່ອເພື່ອມານຳໃຊ້ເຂົ້າໃນການຜະລິດກະສິກຳ.

# VII. ຂໍ້ແນະນຳ
# (Recommendation)

## 1. ຂໍ້ແນະນຳໃນການຝຶກງານ

### 1.1. ຂໍ້ແນະນຳແຫຼ່ງຂໍ້ມູນຂ່າວສານ

ແຫຼ່ງຂໍ້ມູນຂ່າວສານ ດ້ານການຕະຫຼາດຍັງມີການຈຳກັດຊາວກະສິກອນ ແມ່ນນຳໃຊ້ເຕັກນິກແບບພື້ນບ້ານທີ່ຕົນເຄີຍເຮັດມາ ດັ່ງນັ້ນ ຄວນຈະມີການກະຈາຍແຫຼ່ງຂໍ້ມູນຂ່າວສານໃຫ້ທົ່ວເຖິງ ເພື່ອເຮັດໃຫ້ຊາວກະສິກອນຮູ້ນຳໃຊ້ເຕັກນິກໃໝ່, ຊາວກະສິກອນຮັບຮູ້ຂໍ້ມູນກ່ຽວກັບການຕະຫຼາດວ່າຊິຜະລິດພືດຫຍັງເພື່ອເປັນລາຍຮັບໃຫ້ແກ່ຄອບຄົວ, ຂາຍເປັນສິນຄ້າສົ່ງອອກສູ່ຕ່າງປະເທດ ແລະ ໄດ້ຮັບຜົນດີທີ່ສຸດ.

### 1.2. ຂໍ້ແນະນຳປັດໃຈນຳເຂົ້າທີ່ເປັນເຄມີ

ຊາວກະສິກອນໃນເຂດດັ່ງກ່າວໄດ້ມີການນຳໃຊ້ເຄມີເຊັ່ນ: ຢາຂ້າແມງໄມ້, ຢາຂ້າຫຍ້າ, ວັກຊິນ ແລະ ເກືອ ຄວນມີການຝຶກອົບຮົມນຳໃຊ້ວັກຊິນ ແລະ ເປີດໂອກາດການເຂົ້າຮ່ວມຝຶກ ອົບຮົມໃຫ້ຫຼາຍ, ຝຶກກອົບຮົມໃຫ້ຊາວກະສິກອນຜູ້ທີ່ມີຄວາມສົນໃຈ. ຄວນມີການປັບປຸງຕ່ອງໂສ້ຂອງວັກຊິນໃຫ້ສັ້ນເພາະວ່າຈົນກວ່າຈະໄປຮອດຜູ້ຜະລິດອາດເຮັດໃຫ້ວັກຊິນເສຍຄຸນນະພາບ ແລະ ຕ້ອງມີການສົ່ງເສີມໃຫ້ມີການສັກຢາປ້ອງກັນພະຍາດຢ່າງເປັນປົກກະຕິເພື່ອຮັບປະກັນບໍ່ໃຫ້ສັດຕາຍ, ຄວນກະຈາຍຕາໜ່າງສັດຕະວະແພດໃຫ້ຫຼາຍຂຶ້ນ.

### 1.3. ຂໍ້ແນະນຳປັດໃຈນຳເຂົ້າທີ່ບໍ່ເປັນເຄມີ

ສຳລັບຊາວກະສິກອນຢູ່ໃນເຂດນີ້ແມ່ນນຳໃຊ້ແນວພັນພືດ ແລະ ແນວພັນສັດແບບພື້ນ ບ້ານ. ຄວນປັບປຸງຄັດເລືອກແນວພັນພືດ ແລະ ແນວພັນສັດໃໝ່ທີ່ເໝາະສົມກັບດິນຟ້າອາກາດຂອງທ້ອງຖິ່ນນັ້ນ, ທົນທານຕໍ່ພະຍາດ ແລະ ແມງໄມ້, ປັບປຸງອານຫານສັດເຊັ່ນ: ໝູ ແລະ ສັດປີກ (ເປັດ-ໄກ່) ຄວນມີການສະໜອງອາຫານໃຫ້ເໝາະສົມ ແລະ ພຽງພໍເພື່ອໃຫ້ສັດຈະເລີນເຕີບໂຕໄວ. ນອກຈາກນີ້ ຄວນມີ

ການເຝິກອົບຮົມໃຫ້ແກ່ຊາວກະສິກອນປັບປຸງໂຄງສ້າງຂອງດິນໂດຍການນຳໃຊ້ຝຸ່ນທຳມະຊາດເຊັ່ນ: ຝຸ່ນຄອກ, ຝຸ່ນບົ່ມ... ແລະ ປູກພືດຕະກຸນຖົ່ວເພື່ອປັບປຸງດິນໃຫ້ດິນມີຄວາມອຸດົມສົມບູນ.

1.4. ຂໍ້ແນະນຳກ່ຽວກັບສິນເຊື່ອ

ການນຳໃຊ້ສິນເຊື່ອຢູ່ໃນຊົນນະບົດ ມີຄວາມຕ້ອງການຫຼາຍໂດຍສະເພາະ ຄອບຄົວກຸ້ມກິນ ແລະ ຄອບຄົວບໍ່ກຸ້ມກິນ ເພາະວ່າເຂົາເຈົ້າບໍ່ມີຄວາມອາດສາມາດໃນການຊື້ປັດໃຈນຳເຂົ້າໃນການຜະລິດ ດັ່ງນັ້ນຄວນມີທະນາຄານໃຫ້ສິນເຊື່ອທີ່ມີດອກເບ້ຍຕໍ່າ ສຳລັບຄອບຄົວກຸ້ມກິນ ແລະ ຄອບຄົວບໍ່ກຸ້ມກິນ ແລ້ວໃນການຢືມສິນເຊື່ອຍັງມີຂໍ້ຈຳກັດເພາະວ່າ ເຂົາເຈົ້າອາດຈະບໍ່ມີອັນຄ້ຳປະກັນຈຶ່ງເຮັດໃຫ້ຄອບຄົວກຸ້ມກິນ ແລະ ຄອບຄົວບໍ່ກຸ້ມກິນບໍ່ສາມາດຢືມສິນເຊື່ອຈຳນວນຫຼາຍໄດ້.

# ເອກະສານອ້າງອີງ

## (Literature cited)


ກົງສີ ທອງຈັນເພັງ, 2006, ບົດລາຍງານທ້າຍການສຶກສາລະບົບກະສິກຳໃນ 12 ໝູ່ບ້ານທາງພາກຕາເວັນຕົກ ເມືອງຍອດອູ ແຂວງຜົ້ງສາລີ. ໜ. 1-2.

ກອງສົ່ງເສີມກະສິກຳ - ປ່າໄມ້, 2006. ຄູ່ມືລິເລີ່ມຂະບວນການວຽກງານການພັດທະນາລະບົບວິສາຫະກິດກະສິກຳ ໜ. 9 - 11.

ເຈີນງ້ອກທງວນ, ທງວຽນຮົວຮົງ - ດາງວັນມິງ, ແປໂດຍ ສົມພັນ ປາຊູວາງ , 2004, ລະບົບກະສິກຳ, ຄະນະກະເສດສາດ. ໜ. 15 - 20.

ສີທາ ເຂັມມະລາດ, 2001. ທຸລະກິດກະເສດ, ຄະນະກະເສດສາດ. ໜ. 11 - 12.

ທອງພັນ ກຸລົນສະຫວັດ, 2001. ຫຼັກການກະສິກຳ ຄະນະກະເສດສາດ ມະຫາວິທະຍາໄລແຫ່ງຊາດ. ໜ. 10-22.

ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມ, 2008- 20009. ຂອງເມືອງນາໝໍ້ ແຂວງອຸດົມໄຊ (ບໍ່ລະບຸໜ້າ).

ບົດສະຫຼຸບວຽກງານການມອບດິນ-ມອບປ່າຢູ່ທີ່ບ້ານປາງສາ ແລະ ບ້ານປາງນ້ຳຕອງ ເມືອງນາໝໍ້ແຂວງອຸດົມໄຊ (ບໍ່ລະບຸໜ້າ)

Faber, 1996. ຕ່ອງໂສ້ຜະລິດຕະພັນກະສິກຳ. ໜ. 2

# ເອກະສານຊ້ອນທ້າຍ

# (Appendix)

# ເອກະສານຊ້ອນທ້າຍ1





ຮູບ5: ເຂົ້າໄຮ່

ຮູບ6: ສວນຢາງພາລາ





ຮູບ7: ສວນສາລີ

ຮູບ8: ສວນຂ່າ





ຮູບ9: ການລ້ຽງໝູ



ຮູບ10: ການລ້ຽງງົວ



ຮູບ11: ການລ້ຽງຄວາຍ





ຮູບ12: ການລ້ຽງສັດປີກ